ໂຮມເລື່ອງສັ້ນຂອງ 7 ນັກປະພັນ

# ຄ່ ເພອເຈົ້າ



ສະໂມສອນນັກຂຽນໜຸ່ມ 1988


ເພື່ອເຈົ້າ
ຮວມເລື່ອງສັ້ນຈາກ 7 ນັກປະພັນ
ສະໂມສອນນັກຂຽນໜຸ່ມ

# ບ ເພື່ອເຈົ້າ

ໂຮມເລື່ອງສັ້ນຂອງ ກ ນັກປະພັນ

ຈັດພິມໂດຍ ສະໂມສອນນັກຂຽນໜຸ່ມ
ພິມຄັ້ງທຳອິດ ເດືອນກັນຍາ ໑໙໘໘
ຈຳນວນພິມ ໓໐໐໐ ຫົວ

ສຳນັກງານເລກທີ ໑໔
ຖະໜົນເສດຖາທິລາດ
ຕູ້ ປ.ນ ໑໑໑໗ ໂທ: ໕໙໑໑
ນ້ຳພຸ ວຽງຈັນ ສປປລ.

# ສາລະບານ


- ດອກສຸດທ້າຍຫຼືງາມ ? .......... ໜ້າ 1
- ພຽງແຕ່ພົບ .............. ໜ້າ 23
- ຫຼວງພະບາງທີ່ຮັກ .......... ໜ້າ 41
- ດຳດວນ .............. ໜ້າ 65
- ເຫີຍບ້ານດ່ານ .......... ໜ້າ 77
- ທາງສາຍຂາດ .......... ໜ້າ 89
- ຄຳຕອບຂອງຫົວໃຈ .......... ໜ້າ 115

# ດອກສຸດທ້າຍ ຫຼືງາມ ?



ໂດຍ ດອກເກດ



ສຽງເພງຮ້ອງປະສານກັບທຳນອງເສບດ້ວຍ ເຄື່ອງດົນຕີໄປຟ້າລອຍມາຕາມສາຍລົມຍາມສວາຍໃນວັນທິດມື້ນີ້ຄົງມາກະທົບໃສ່ຫູຂ້ອຍແຮງຈະແຈ້ງສົມຄວນ, ມັນເປັນສັນຍານບອກວ່າຢູ່ບໍ່ໃກບໍ່ໄກ ຈາກໜີ້ມີເຮືອນບຸນ! ຈະແມ່ນບຸນຫຍັງໃນລະດູນີ້ ນອກຈາກການຄົບງັນເຮືອນດອງ! ຂ້ອຍແນ່ ໃຈຍິ່ງຂຶ້ນເມື່ອສຽງໄດສິກເວົ້າຂາດເປັນບັ້ນໆ ພໍຈັບ ຄວາມໄດ້ວ່າ "ຂໍເຊີນ...ເຂີຍໃໝ່...ໄພ້ໃໝ່ອອກມາປາກົດກາຍກາງເວທີໃຫ້ພໍ່ແມ່ພີ່ນ້ອງໄດ້ຊື່ນຊົມ... ຊຸຍຈົ່ງແມ່ນງາມສົມກັນພໍປານຟ້າແຖນແມນຫລົ່ນມາໃສ່ກັນເອົາຊີ້ງ-ຣະ ຣະງ.."

ເວົ້າຮອດເຮືອນດອງ ເຮືອນບຸນມາແລ້ວ ຂ້ອຍ ກໍຈົ່ງແມ່ນເມື່ອຍ. ສົມໜໍ່ນ້ອງຊາຍມັນວ່າ "ໃຫຍ່ຍ້ອນເຮືອນດີພີຍ້ອນເຮືອນດອງ" ຫລື "ເຮືອນດີເຮືອນດອງພີ່ນ້ອງກັນເອງ" ຊ່າພວກເຮົາຊາວໜຸ່ມໜີ້ເກາະຖ້າຈະເວົ້າແລ້ວ ແມ່ນບໍ່ໄດ້ຢູ່ເຮືອນໃຫ້ພໍ່ແມ່ໄດ້ກິນແຮງຍ້ອນດອກໃບຍາມນີ້ພັກນ່າ, ບໍ່ຈັກເຮືອນນີ້ ເຮືອນນ້ອງໄຕເອງ, ເຮືອນພີ່ນ້ອງໝູ່, ເຮືອນໝູ່ໄຕເອງ, ເຮືອນໝູ່ຂອງໝູ່ ແລະ ຕໍ່ໆກັນໄປ, ຊາຄວາມມັກມ່ວນມັກຫລິ້ນໜີ້ເກືອບບໍ່ເຫັນຮອດບ່ອນນອນ ພຸ້ນແຫລ້ວ ຈົນແມ່ປາກຮ້າຍທັງຂ້ອຍ ທັງນ້ອງຊາຍ. ສຳລັບຂ້ອຍນັ້ນເພີ່ນຈົ່ມວ່າ ພໍແອວຂໍເງິນຊື້ສິ້ນໃໝ່ເສື້ອໃໝ່ເລື້ອຍໂພດ (ຕາມເພີ່ນວ່າ), ໂຢວ ກະຂອງວ່າຂ້ອຍພວມ ເປັນສາວ ພວມຂຶ້ນພອມງາມ ແຖມຍັງເປັນນັກສຶກສາຊັ້ນສູງຢູ່ນະຄອນຫລວງວຽງຈັນນຳອີກ, ມັນກໍຕ້ອງມີສັງຄົມແດ່ ມີການໄປການມາ, ນຸ່ງຖືສົມໜ້າສົມຕາ ສົມຖານະສັກສີ, ແຕ່ຂ້ອຍ

ກໍບໍ່ເຂົ້າໃຈຄືກັນວ່າ ຖານະສັກສີອັນນີ້ແມ່ນໃຜກຳນົດໄວ້ໃຫ້? ແມ່ນໃຜກຳນົດໃຫ້ນັກສຶກສາຍິງ (ຄືພວກເຮົາ) ໃສ່ສາຍແອວເງິນລາຄາເສັ້ນ ໑໐ ກວ່າພັນຂຶ້ນເມືອ, ໃສ່ເກີບຄູ່ລະ ໒.໐໐໐ - ໓.໐໐໐ ກີບ, ໃສ່ເສື້ອພື້ນລະ ໑.໐໐໐ ກວ່າກີບຂຶ້ນເມືອ, ໃສ່ສິ້ນພື້ນລະ ໓-໔໐໐໐ ກີບ ແລ້ວ ເຂົ້າໄປນັ່ງໃນຫ້ອງຮຽນ ເຊິ່ງບາງຄັ້ງສະພາບຂອງມັນໄກກັນ ຜູ້ນັ່ງສົມຄວນຖາເບິ່ງໄປແຕ່ນອກຫ້ອງ, ບາງບ່ອນ ຂອຍ ບໍ່ຢາກເວົ້າຫລາຍ ມັນຮົກທັ່ງກັບຢູ່ຕະຫລາດ ເບິ່ງບໍ່ຈັກຖິ້ງ ຢ່າງເຈ້ຍເສດ ຂີ້ຝຸ່ນ... ມັນໂລດບໍ່ສົມກັບເປັນບ່ອນຈະແຕ່ງອົງຊົງເພດໄປອ່າງກັນເລີຍ, ແຕ່ເວົ້າແລ້ວກໍເວົ້າ ຈິ່ງ ຂອຍເອງກໍໄດ້ແຕ່ຄຶດເປັນບັນຫາຊື່ງດອກ ບໍ່ປາກ ຄຶດຮອດ ນີ້ໃດທີ່ພໍ່ແມ່ ບໍ່ມີເງິນຈົກໃຫ້ຊື້ສິ້ນລາຍໃໝ່ ເສື້ອແບບໃໝ່ເລີຍ. ຮອດນີ້ນັ້ນ ຂອຍຈະເຮັດໜ້າແນວໃດໄປເຂົ້າສັງຄົມກັບໝູ່? ຂ້ອຍຢາກຫາລາຍຂໍ້ກຳນົດອັນນີ້ແທ້!

ເວົ້າຮອດເຮືອນດອງ ອາທິດນີ້ຂ້ອຍຫວ່າງໄປແດ່,ບ່ອນທີ່ພວມຄຶບວັນນ່ອນເມົາຈັດພິທີກັນຢູ່ນີ້ ເປັນເຮືອນພີ່ນ້ອງຕ່າງຕ່າງຢູ່ສົ້ນບ້ານ, ແມ່ເພິ່ນວ່າ ເພິ່ນໄປແລ້ວກໍຢ່າສາໃຫ້ຂວັນຢູ່ເຮືອນ ເຮັດວຽກແດ່ ຮຽນໜັງສືແດ່ ໃກ້ຍາມສອບ ຍາມເສັງແລ້ວ... ແຕ່ດອງເອື້ອຍວັນໃນວັນທິດໜ້ານີ້ຕີ ຂ້ອຍຄືຊິເມື່ອຍຈົນຍໍແດງບໍ່ຈາຍຂາບໍ່ຂຶ້ນນູນລະ ເພາະ ເອື້ອຍວັນທີ່ວ່ານີ້ ລາວເປັນລູກສາວກົກແມ່ປ້າໃຫຍ່ຂອງຈູມເຈົ້າ ພວກເຮົາ, ລາວມີຊື່ເຕັມໆວ່າ ວັນນາລີ ສີໂສພາ, ງາມ ສະຫວ່າສົມນາມສະກຸນ ແຕ່ຮຸ່ນອາວຸໂສແດ່ຈັກໜ້ອຍ. ເຮືອນ

ແມ່ປ້າຢູ່ປາກເຮືອນຂ້ອຍໄປສາມ-ສີ່ຫລັງຄາເຮືອນ, ຈຶ່ງກິນ ດ້ວຍເຮືອນນ້າບ່າວ ນ້າສາວ ເພາະວ່າໝົດຄຸ້ມນີ້ ແມ່ນຈຸ່ມ ດອງກັນໝົດ, ຈັ່ງຊັ້ນຈຶ່ງແນ່ໃຈໄລດວ່າ ດອງເອື້ອຍອັນຈະ ເປັນດອງໃຫຍ່ສົມຄວນ ສົມລາວເປັນສາວນາຄົນ ທັງເປັນ ລູກສາວກົກອີກ. ຈັ່ງຊັ້ນຂ້ອຍຈຶ່ງຄິດຮຸ່ມໆໃນໃຈວ່າ "ຄືຄືກັນ ອາທິດນີ້ຈະໄດ້ພັກຜ່ອນເອົາແຮງ, ອາທິດໜ້າກຣມໄຕເມື່ອຍ ສຸດຂີດ"

ຫລັງຈາກນັ້ນຮັບເຮືອນ ຈັກເຄື່ອງນຸ່ງຂອງທີ່ຕາມນິໄສ ຜູ້ ມັກສະອາດ ມັກວຽກແລ້ວ ຂ້ອຍຈຶ່ງອອກໄປຫາເອື້ອຍວັນເພື່ອ ສືບຂ່າວເບິ່ງສະພາບການທາງທາ "ດອງໃຫຍ່" ໃຫ້ ຄັກໆ ຈັກເທື່ອ, ຂ້ອຍພວມຢາກຮູ້ ຢາກສຶກສາຊີວິດ ໂດຍສະເພາະ ການສ້າງຄອບຄົວຂອງເອື້ອຍວັນໃນຄັ້ງນີ້ ເບິ່ງຄືວ່າ ອ້າວ ໄວວາປຸບປັບວາດໃດວາດໜຶ່ງໄວ້, ພໍປານວ່າ ລາວເປັນ ສາວໃຈຮ້ອນອາຍຸ ໑໙ ແລະ ຕາມສຽງຊຸບຊິບ[illegible]ບໍ່ ເປັນທາງການນັ້ນກໍຄືວ່າ ພໍ່ແມ່ເຖົ້າແກ່ ຝ່າຍຂ້ອຍນີ້ ບໍ່ຢາກ "ອອນຊອນ" ນຳປານໃດ ແຕ່ເອື້ອຍວັນ ລາວອີງໃສ່ ການ ຈັດຕັ້ງຢູ່ໂຮງການເປັນໃຫຍ່, ກະຂອງວ່າ ລາວເປັນ ຮອດ ພະນັກງານຂັ້ນພະແນກຄົນໜຶ່ງ, ເປັນຜູ້ທາວທັນໃນ ສະຫະ ພັນແມ່ຍິງຂອງກະຊວງຊ່ຳແຖ, ຈັ່ງຊັ້ນ ພໍ່ລຸງກັບແມ່ປ້າຕ້ອງ ຍິນຍອມຢ່າງສຸພາບ ອີກຢ່າງໜຶ່ງ ລາວກໍເຂົ້າ ເຈຍສາມ ແລ້ວເດ, ຈິໃຫ້ລາວຄອງຮອດໃສ່ອີກ? ຂ້ອຍເຊື່ອບໍ່ແນ່ໃຈ ວ່າ ພວກຜູ້ໃຫຍ່ (ເຖົ້າແກ່) ຕຳໜິອະຣິລາວບ່ອນໃດ ອັນ ຜູ້ຈະມາເປັນອ້າຍເຂີຍຂ້ອຍທັນກະດາຍ! ຈາປັງຄວາມເພີ່ນ

ຕົ້ນ ຄືວ່າບໍ່ມີແນວໃດເໝາະສົມກັບເອື້ອຍວັນຈັກໜ່ອຍ, ເພິ່ນ
ວ່າລາວຮອດບໍ່ໄດ້ຜ່ານປະເທດນອກປະເທດນາ ທາໃນ ປະ
ກາດຊັ້ນສູງກໍບໍ່ເຫັນ, ເປັນກ່ຳມາກ່ຳນອຍສິບສາວ ທາວທາ
ຍາດພີ່ນ້ອງກໍບໍ່ເຫັນ...ໄຢ່ວຈາໃຈຂ້ອຍນີ້ໄລດວ່າ ອັນໃນ
ປະກາດນັ້ນມັນບໍ່ໄຈແມ່ນແນວຢູ່ແນວກິນໄດ້, ກໍ່ຄືຮູ້ວ່າແມ່ນ
ວຽກງານການປະກອບອາຊີບພໍ້ ມັນຈິ່ມາກາວຫລືບໍ່ກາວ, ໃນ
ປະກາດນັ້ນກໍເປັນພຽງໃບເບີກທາງສ່ຳຮອງເທົ່ານັ້ນ ແລວ
ກະຍາດພີ່ນ້ອງນັ້ນ ນັ້ນຈຶ່ງສ່ຳຄັນພໍຮາວໃດ, ຖາເຮົາຄື ເຮົາ
ເຕີ່ນຂຶ້ນມາບໍ່ຢ່ານແຕພນ້ອງຈີສີບລາວທາວທາ. ຄືເພິ່ນ ວ່າ
"ເຮັດເປັນມີຈົ່ງເຫັນໜ້າປ່າ ເຮັດບໍ່ເປັນມີນາທູດຮອກໍເປັນ
ເພີ່ນທັ້ນແລວ", ຄັນວ່າລາວບໍ່ເໝາະ ບໍ່ສົມກັບເອື້ອຍ ວັນ
ທາງການຈັດຕັ້ງເພີ່ນກໍຄົງບໍ່ອະນຸມັດດອກ ເພາະເອື້ອຍ ວັນ
ລາວກໍເປັນຮອດຄະນະພະແນກ ແລະ ອາຍສິດ ກໍເປັນຮອດ
ຄະນະກົມ ເຖິງວ່າລາວບໍ່ມີເຮືອນຈານເປັນຂອງຕົນ ແຕ
ການຈັດຕັ້ງກໍ່ມີຫອງພັກໃຫລາວເປັນຕອນເປັນຕົນ (ຍອນວ່າ
ລາວມາແຕຕາງແຂວງແດ!) ຈັ່ງຈຶ່ງເບິ່ງໃນແງຖານະ ຕ່ຳ
ແໜ່ງແລວ ຂະເຈົ້າກໍ່ເປັນຄູ່ຊີວິດທີ່ເໝາະສົມກັນສົມຄວນ.
ນໍ່ລຸງ ແມ່ປ້າເພິ່ນຕັ້ງວ່າ ເປັນຄົນຫົວເກົ່າ ຖືຮີດເຖີມ ແຕ
ຖາຈະເວົ້າໄປອີກແງໜຶ່ງເໝາະ ຄັນວ່າເອື້ອຍວັນ ລາວມີ
ຄູນສົມບັດຮອບດານພໍແຮງແລວ ເປັນຫຍັງລາວຈຶ່ງ ຄອງ
ຄວາມໂສດຢູ່ໄດດຽວມາຈົນຮອດວັນນີ້? ທັງງາມ ທັງມີ
ຄວາມຮູ ຖານະຄອບຄົວໝັ້ນຄົງໜັກແໜນ...ແລວ ເປັນ
ຫຍັງຈຶ່ງບໍ່ມີຜູ້ມາມັກມາທາບທາມລາວ? ຫລືວ່າມີແລວ ແຕ

ລາວບໍ່ຖືກໃຈເລີຍປະຕິເສດ? ຫລືວ່າລາວຖືກໃຈຢູ່ ແຕ່ ຜູ້ໃຫຍ່ບໍ່ເຫັນດີເຫັນງາມນຳ? ໂອຍຈຶ່ງແມ່ນມີຫລາຍບັນຫາ... ແລ້ວມາຮອດເວລານີ້ ລາວກໍ່ຈຳຕົກລົງປົງໃຈກັບ ຊາຍຄົນນີ້ ຊາຍທີ່ບໍ່ແມ່ນຜູ້ນາງບໍ່ອອນຊອບຊື່ນຊົມນຳປານໃດຄົນນີ້?.

ເດີ່ນໜ້າບ້ານຂອງເຮືອນພໍ່ລຸງແມ່ປ້າໃຫຍ່ຂ້ອຍ ເປັນສວນດອກໄມ້ແບບລາວໆ ປະສົມສະໄໝໃໝ່ ເຊັ່ນໄດ້ ວ່າເປັນສະຖານທີ່ພັກຜ່ອນຢ່ອນໃຈໄດ້ດີສົມຄວນ ຖັດຈາກ ຕົ້ນແຖວຕົ້ນໄມ້ໃຫຍ່ກິນໝາກທີ່ລານຄໍ່າໃສ່ຮົ້ວດ້ານໜຶ່ງແມ່ນນອກນີ້ດພູມກໍດອກໄມ້ນາງມັນ ນັ້ນແມ່ນອຸທິຍານແຕ່ງ ພູຍຫາມັນຫລາກຫລາຍ, ທີ່ສູງເດັ່ນທະນົມກຳແພງຮົ້ວແມ່ນຕົ້ນ ຈຳປາແດງຂາວ, ຕົ້ນຄູນ, ແຕ່ລະຕົ້ນພວມອອກດອກ ຊູຊໍ່ ອວດອ້າງພວງດອກຂອງຕົ້ນຢ່າງທີ່ລະນົງອົ່ງອວດ, ພູມດອກ ຕ່ຳເຕ້ຍກໍມີຫລາກຫລາຍ ເບິ່ງແລ້ວຈົນລາຍຕາ ມີທົ່ງ ອິນທະຫວາ ດອກຈອນ ຈຳປີ ດາວເຮືອງ ມຸດທະຈາດ ກ້ານກອງກຸຫລາບ ເປັນຈະນາດ ທອນເດີກ ທອນໄກ ຊວງຈ້າງຝາງແດງ... ແມ່ຖູໄວ ສອ ກວາຂອງພວກເຮົາຢູ່ນຳ ແມ່ປ້າໃຫຍ່, ເພິ່ນມັກຫາແນວດອກໄມ້ລາວ ທີ່ມີສີຂາວ ກິ່ນຫອມມາປູກໄວ້ບໍ່ໄດ້ເກັບໄປອີກ ແລະ ຮັ້ນບູຊາຮ້ານພະເປັນ ປະຈຳ, ບໍ່ວ່າລະດູໃດ ຈະແລ້ງຫລືຝົນ ສວນດອກໄມ້ ຂອງເຮືອນແມ່ປ້າຈະມີດອກບານງາມຕະການຕາຕະຫລອດເວລາ. ນອກຈາກດອກໄມ້ປະເພດທີ່ເຖົ້ານັກແລ້ວ ພວກລູກຫລານ ຜູ້ໜຸ່ມນ້ອຍຈຳຫາດອກໄມ້ປະເພດເປັນໃບສີ ເຊັ່ນບອນລາຍ, ຫວານ, ກຸຫລາບ, ເປເບຣາ ແລະ ອື່ນໆ, ຈະນິດປູກໃສ່

ແລ້ວດິນກໍມີໃສ່ກະຖາງຫ້ອຍຕາມເສົາ ຕາມລະບຽງກໍມີ. ຈົ່ງຈຶ່ນບໍ່ລືເວນອ້ອມຮອບເຮືອນເອື້ອຍວັນຈຶ່ງຂຽວອຸ່ມຫຸ່ມ ແລະມີສີສັນຈວນຈົມຢ່າງແທ້ຈິງ.

ບັນຍາກາດອ້ອມຮອບເຮືອນ ມິດມີ່ ສະຫງົບ ບໍ່ຄືວ່າຈະເປັນເຮືອນດອງ (ຕາມສະໄໝນີ້) ໃນອີກບໍ່ເທົ່າໃດມື້ຈໍ້. ຂ້ອຍຍ່າງເລີຍຂຶ້ນໄດຂຶ້ນເມືອ ແລວລ່ວງໃສ່ຫ້ອງ ໂຮງໄໝ ໄດ້ຍິນສຽງເພງດັງວ່ອນໆອອກມາແຕ່ສ່ວນໃນເຮືອນ.

- ອາວແກວເກສອນ ມາແຕ່ຫວ່າງໃດ? ເອື້ອຍວັນນັ້ນຮອງ, ລາວຄົງໄດ້ຍິນສຽງບາດຕີນອ່າວບໍ່ຄ່ອຍຂອງຂ້ອຍຈຶ່ງໄປໂລອອກມາ ແລະ ຮ້ອງຫວງໝົດຊີ່ສຽງຮຽວນານ ເອົາຊຸ່ງ, ຂ້ອຍຍື່ນໃສ່ລາວແລວກໍລາວເຂົ້າໄປໃນ ຫ້ອງນອນສ່ວນຕົວ.

- ເອື້ອຍວັນພອມມັ້ນຫ້ອງ, ຊີເອົາເຄື່ອງໃໝ່ມາໃສ່ຫວະ? ນານອັງຈິ້ນຮບຈ່ອຍ, ແຕ່ເອະ ຖູຫຽງໝູ່ນີ້ຄືຊິໜັກແທ້, ເຮັດແນວໃດພວກເຮົາຊິເຄື່ອນມັນໄຫວ? ເອີ້ ອາຍວິສິດ ຊິບໍ່ມາຈ່ອຍແດ່ເບາະ? ຂ້ອຍປ້ອນຄຳຖາມຄຳເວົ້າຕິດງກັນອອກໄປຕາມພາສາຄົນມັກລົມ ທັງຍິ້ນຍົ້ມຈ່າງນວນ ໜຶ່ງອອກຈາກຖູ່ຈ່ອຍລາວ, ເອື້ອຍວັນ ບໍ່ຕອບຄຳຖາມຂໍ້ໃດຂອງຂ້ອຍເລີຍ, ລາວມິດໄປຈຶ່ງ ເຮັດໃຫ້ຂ້ອຍຕ່າງໃຈ ຈຶ່ງເຊົາວຽກຄາມີ, ແນມເບິ່ງລາວຢ່າງກົງໆ, ຮອຍຍິ້ມຂອງເອື້ອຍວັນ ບໍ່ສົດໃສ ເບີກບານຄືພູກຽນຕົວຈະເປັນເຈົ້າສາວເຂົ້າບິທີ່ແຕ່ງດອງກັບຊາຍທີ່ຕົນເລືອກແລວເລີຍ.

- ພວກເອື້ອຍບໍ່ໄດ້ຊື້ເຄື່ອງຫຍັງໃໝ່ດອກແກວ, ເອົາ

ເຄື່ອງຂອງທີ່ໃຊ້ຢູ່ຫັ້ນແລ້ວ, ເອື້ອຍຄຶດວ່າມັນບໍ່ຈຳເປັນ.

- ບໍ່ຈຳເປັນ... ໂອະ ແມ່ນແທ້ໄດ໋ເນາະ ເອື້ອຍວັນ, ຕູ້ກຣວງຂອງເອື້ອຍຊຸດນີ້ຍັງງາມ ໜາແໜ້ນ ເບິ່ງແມ.... ໜັກຊິຕາຍ ຕູດກໍບໍ່ຕຶງ ໄມ້ເນື້ອດີຂະໜາດລະໜີ້! ຂ້ອຍເວົ້າ ທັງເອົາຝາມືລູບຄຳໄປຕາມເນື້ອໄມ້ກຣວງຫມີ່ນ ສີແດງ ຈ້ຳແບບທຳມະຊາດໄປມາຢາງອອນຊອບ.

- ເວົ້າແທ້ແລ້ວຕູ້ງາມໆ ເນື້ອໄມ້ດີໆຂະໜາດນີ້ ຫາຊື້ບໍ່ໄດ້ງ່າຍໆດອກເດີ້ດຽວນີ້ນ່າ, ເບິ່ງຕຽງໜັ້ນກະເທີງ ສູງເທິງກວ້າງ ສີເຂົ້າກັບຕູ້ດີແລ້ວ, ນ້ອງວ່າຕື່ມຜ້າສີ ບົວອ່ອນໃສ່ກັບຜ້າປູຕຽງລາຍເຄືອດອກສີບົວແກມສີເຫລືອງຄືຈະເຮັດໃຫ້ຫ້ອງນີ້ສົດໃສຂຶ້ນຕື່ມເນາະ!

ເອື້ອຍວັນຍິ້ມສົດໃສຂຶ້ນແດ່ ຂ້ອຍຄຶດວ່າໂຕເອງຄົງເວົ້າແນວຖືກໃຈລາວ ຈຶ່ງເວົ້າຕໍ່ວ່າ:

- ນ້ອງວ່າເຄື່ອງໃຊ້ຂອງສອຍມັນບໍ່ສຳຄັນທໍ່ກັບເອື້... ຄວາມເຂົ້າໃຈກັນດີດອກເນາະເອື້ອຍ!

- ເອື້ອຍກໍຄຶດຄືແນວນັ້ນແລ້ວ ແຕ່ໜ້າເສຍດາຍຫລາຍຄົນບໍ່ຄຶດຄືເຮົາ! ນ້ຳສຽງຂອງເອື້ອຍວັນແຝງສຳນຽງສຽດສີ ເຖິງວ່າສີໜ້າຂອງລາວຈະເບີກບານຂຶ້ນແດ່ກໍຕາມ.

- ຜູ້ອື່ນບໍ່ຄຶດກໍ່ບໍ່ໃຫ້ອ້າຍວິສິດຄຶດຄືເອື້ອຍເປັນພໍເນາະ! ຂ້ອຍເວົ້າຢອກໃຫ້ລາວຫົວ, ໄດ້ຜົນ ເອື້ອຍວັນຫົວຍາມບາດໜຶ່ງ.

- ເອື້ອຍກໍວ່າແນວນັ້ນລະ ຈຶ່ງຕັດສິນໃຈ! ຄຳເວົ້າສຸດທ້າຍຂອງເອື້ອຍວັນສຽດຕຳບັນຫາທີ່ຂ້ອຍຢາກຮູ້ຢູ່ແລ້ວຈຶ່ງ

ຈຸບໂອກາດອັນອຳນວຍນີ້ທັນທີ. ບັດນີ້ຂ້ອຍນຶກຮູ້ລາງໆແດ່ແລ້ວ ວ່າເພດພັນໜຶ່ງຂອງລາວແມ່ນຫຍັງ.

- ເອື້ອຍວັນ! ນ້ອງຂໍໂທດລ່ວງໜ້າເດີ ຖ້າວ່າ ຄຳຖາມຂອງນ້ອງບໍ່ເໝາະສົມ ຄືວ່ານ້ອງຊູໃຈແທ້ໆທີ່ເຫັນເອື້ອຍຈິເປັນຄອບເປັນຄົວ... ທາງການຈັດຕັ້ງກໍເຫັນດີເຫັນພ້ອມແນວນີ້ ກໍແປວ່າເພິ່ນເຫັນຄວາມເໝາະສົມເບາະ ແຕ່ນ້ອງບໍ່ເຂົ້າໃຈວ່າ, ນ້ອງບໍ່ແຈບໃຈນຳທາງພໍ່ແມ່ພີ່ນ້ອງເຮົາ.

ເພິ່ນຄືວ່າ ບໍ່ເຊີ້ບໍ່ຖືນຳປານໃດ?

- ແກ້ວເອີ້ຍ, ດິນເຮົານີ້ບໍ່ແມ່ນວ່າຈິເຮັດໄດ້ຖືກ ໃຈໝົດທຸກໆຄົນດອກເດີ້, ບາງເທື່ອໄດ້ໃຈຕົນເອງແຕ່ເຄິ່ງດຽວນັ້ນກໍຍັງດີພໍແຮງແລ້ວ. ພໍ່ແມ່ພີ່ນ້ອງເຮົາເພິ່ນກໍຫາກ ມີເພດພັນແບບເກົ່າແບບເດີມຂອງເພິ່ນນັ້ນແລ້ວ,ນັບແຕ່ເອື້ອຍອາຍຸ ໑໕ ຮອດດຽວນີ້ ໔໑ ປີ. ເພິ່ນຫາກເຈົ້າກີ້ ເຈົ້າການໃຫ້ເອື້ອຍມາຕະຫລອດ ບໍ່ເຫັນໃຜເໝາະໃຜສົມ ຈັກເທື່ອ ຍ້ອນແນວນີ້ລະເອື້ອຍຈຶ່ງຕັດສິນໃຈເອົາເອງ. ເອື້ອຍຄິດວ່າເອື້ອຍຮູ້ເຫັນເຂົ້າໃຈຊີວິດມາພໍສົມຄວນແລ້ວ! ນ້ຳສຽງຂອງເອື້ອຍວັນແຝງຄວາມຂົມຂື່ນວາດໃດວາດ ໜຶ່ງ , ເອົາແທ້ແລ້ວ ເອື້ອຍບໍ່ໄດ້ຕັດສິນຜູ້ດຽວດອກ, ທາງການຈັດຕັ້ງເພິ່ນກໍຊ່ອຍ.

- ນ້ອງບໍ່ເຂົ້າໃຈເພດພັນແບບເກົ່າໆຂອງເພິ່ນຫັ້ນ ມັນແມ່ນແນວໃດແທ້ຊີ້ເອື້ອຍ ?

- ກະຮຽກຮ້ອງໃຫ້ເຮົາມີຄຸນສົມບັດຮອບດ້ານທັ້ນດີ,ນັບຖືມີປານາວາ, ມີຄວາມຮູ້ ມີຍາດພີ່ນ້ອງຫລາຍ ໂດຍ ສະ

ເພາະໃຫ້ມີຄວາມຮູ້ສູງ ມີຖານະຄຳແໜ່ງດີ, ຮູບ ຮ່າງໜ້າຕານຳໄປອວດໄປອ້າ. ໂອຍໝົດທຸກແນວທັ້ນລະ, ແລ້ວນ້ອງຄິດບໍ່ລະວ່າ ແນ່ຍິ່ງຄົນອກເຮົາຈິບໍ່ຢາກໄດ້. ເອີຣູຈີອິດແນວນັ້ນ? ເຮົາຕ້ອງຕັດສິນໃຈເອງ, ແນ່ນໃຫ້ຈີມີ ຮູບສິນບັດເລີດລ້ຳທຸກຢ່າງເນາະ ແຕ່ນັ້ນບຸນັບບໍ່ແທດເໝາະ ກັບຄຸວາມຈິງສະເໝີດອກ, ຄົນເຮົາແຕ່ລະຄົນຕ່າງກໍ່ມີຈຸດດີຈຸດອ່ອນຂອງຕົນ.

- ທັ້ນລະດີເນາະ! ເອື້ອຍຈຶ່ງຕັດສິນໃຈແນວນີ້! ຂ້ອຍອອກຄວາມເຫັນຄອຍໆ, ແນ່ນອນວ່າມັນຄົງບໍ່ຖືກໃຈ ລາວຫລາຍປານໃດ, ແຕ່ສີໜ້າເອື້ອຍອັນບໍ່ບູດ ບໍ່ຍິ້ມ ມັນ ບົ່ງບອກຄວາມສິ່ງໄສລິ້ງເລ ດາວໜຶ່ງລາວຈຶ່ງຍິ້ມ ແລ້ວ ກຸອັກມືເອົາຂ້ອຍໄປຫາ ແລ້ວພາຍ່າງໄປເທົ້າແຂນໃສ່ແຄມ ປ່ອງຢ້ຽມທີ່ໃຂອອກສູ່ສວນໜ້າບ້ານ :

- ແກ້ວ! ເບິ່ງດອກໄມ້ໃນສວນທັ້ນດີ ງາມບໍ່?

- ງາມ! ຂ້ອຍວິກຫົວຕອບທັນທີໂດຍບໍ່ໄດ້ຄິດຍາກ.

- ສິນນຸດຈັ່ງຊີ້ເນາະ ເອື້ອຍຈິໃຫ້ນ້ອງໄປເລືອກ ເດັດດອກໄມ້ດອກໜຶ່ງ ເຊິ່ງນ້ອງເຫັນວ່າງາມທີ່ສຸດມາໃຫ້ ໂດຍມີກົດເກນວ່າ ນ້ອງຈະບໍ່ເລືອກມັນເປັນຄັ້ງທີ ໒, ບໍ່ໃຫ້ຫວນກັບມາອີກ, ກາຍໄປແລ້ວຕ້ອງໄປເລີຍ, ເຂົ້າໃຈບໍ່?

ຂ້ອຍງຶງວ່າຕໍ່ຄຳອະທິບາຍກົດເກນດາວໜຶ່ງ.

- ບໍ່ໃຫ້ເລືອກເປັນເທື່ອທີສອງ, ແປວ່າແນວໃດ ?

- ຖ້ານ້ອງໄປເຫັນດອກໜຶ່ງ ແລ້ວບໍ່ເດັດບໍ່ເລືອກກໍ່ໃຫ້ກາຍໄປເລີຍ, ກັບຄືນມາເອົາອີກບໍ່ໄດ້ຈັ່ງນີ້ແລ້ວ!

- ໂອະ ເຂົ້າໃຈແລ້ວຊັ້ນນະ! ຂ້ອຍຟ້າວຮັບ ຄວາມແລະ ເຫັນວ່າກິດເກນນີ້ເປັນກິດເກນຫລິ້ນໆແບບທຳມະດານີ້ເອງ.

- ຊັ້ນກໍລົງມືເລີຍ, ດຽວນີ້ເກືອບ ໑໑ ໂມງແລ້ວ,ທົດລອງເບິ່ງວ່ານ້ອງຈິໃຊ້ເວລາດົນປານໃດ ເພື່ອເລືອກ ເອົາດອກທີ່ງາມສຸດໃຈຂອງນ້ອງ! ເອື້ອຍວັນສັ່ງທ້ວງ ເມື່ອຍ່າງອອກມາສົ່ງຂ້ອຍຮອດຕີນຂັ້ນໄດ.

ແສງແດດຕອນສິບເອັດໂມງປາຍຕອນເຊົ້າຮ້ອນແຮງສົມຄວນ ນັບວ່າບໍ່ແມ່ນເວລາອັນເໝາະສົມທີ່ຈະເກັບ ດອກໄມ້ເລີຍ, ແມ່ນອຸບກິບດອກໄມ້ບາງຊະນິດກໍບໍ່ທົນທານຕໍ່ແດດ ຕໍ່ລົມ ແຕ່ບາງຢ່າງກໍສູ້ທົນຕາກແດດຕາກຝົນ ໂດຍບໍ່ຊ້ຳ ຊອກຫຍັງ ສາມາດຊົງຕົວຢູ່ຢ່າງສະຫງ່າງາມໄດ້.

ກົກສອນ ແມ່ນຈຳພວກດອກໄມ້ຕົ້ນຕ່ຳເປັນພຸ່ມກໍ່, ແມ່ນດອກໄມ້ພື້ນບ້ານເຮົາເອງ ເຊິ່ງແມ່ຕູເປັນຜູ້ຮັກສາພັນ ແນວໄວ້. ຢູ່ໄກຕາກວ່າໝູ່ແມ່ນກໍອິນທະຫວາ, ຕົ້ນ ເກົ່າແກ່ແລ້ວ ເພາະລຳໃຫຍ່ ມີດອກງາມ ແລະ ບານຊອບແຊມເປັນຍ່ານ. ເວົ້າແທ້ອິນທະຫວາບໍ່ແມ່ນພືດປູກປະດັບປະດາແຕ່ກິ່ນຫອມອາວຊຸນແຮງ ແລະ ສີຂາວບໍລິສຸດຂອງມັນຊ່ວຍໃຫ້ ມັນໄດ້ຮັບເລືອກເປັນດອກໄມ້ບູຊາ, ໃສ່ຂັນຍາມມີບຸນທາງ ສາສະໜາ, ກີບອາວນູມໜາຂອງມັນອ່ອນນວນມື ແຕ່ເຮົາ ບໍ່ສາມາດຕັດອິນທະຫວາປັກແຈກັນແຊມກັບດອກອື່ນໆດອກ... ຮູບໂສມຂອງມັນບໍ່ມີຫຍັງສະດູດຕາເລີຍ ຊ້ຳຍັງມັກແຫ່ວໄວ, ມີແຕ່ກິ່ນຢ່າງດຽວເທົ່ານັ້ນທີ່ເປັນສະເໜ່ໃນຕົວ. ຊັ້ນອິນທະ

ຫູວາກໍ່ບໍ່ແມ່ນດອກໄມ້ທີ່ງາມກວ່າໝູ່ແລ້ວ! ຂ້ອຍວາງມືຈາກກ້ານຂຽວມີກີບກີກຈອນແຂວງຂອງມັນດ້ວຍຄວາມຮູ້ສຶກ ບໍ່ອາໄລອາວອນພໍດີ້.

ພຸດທະຈາດພຸ່ມຕ່ຳກວ່າສອງສາມກໍ່ຢູ່ຕິດກັນ ພວມອອກດອກຂາວກະຈ໊ະເຕັມຕຸ້ມ. ຮື ດອກພຸດ! ຖ້າປຽບໃສ່ອິນທະຫວາກະຍັງເປັນຮອງຢູ່. ກີບອ່ອນຫ້າໃບຈ້ອນຢາຍກັນ ແບບທຳມະດາບໍ່ມີສີລະລວດລາຍອັນໃດ. ເປັນດອກໄມ້ ໄຮ້ເກສອນ, ກິ່ນຫອມພໍ່ຮູ້ສຶກ, ມັນຮຽບຮ້ອຍເບີດແປນ ກະຈ່າງຕາຄືຢູ່ດອກ. ແຕ່ໃຜເຄີຍຕັດດອກພຸດຂຶ້ນເຂົ້າສຽບແຈມແຈກັນລະ? ມັນພຽງແຕ່ຄອຍຈະຖືກຕັດເປັນພວງການອາວຍາວໃສ່ຂັນເງິນ ເພາະບຸນຫລືຂຶ້ນບູຊາຮານພະເທົ່ານັ້ນແລ້ວ. ຂ້ອຍຫັນໜ້າໜີຈາກພຸ່ມດອກພຸດໂດຍບໍ່ເສຍເວລາຄຶດນຳພໍນາທີ!

ລຽບຮົ້ວຕິດກັບກໍ່ດອກພຸດມີຫົວການກອງ ດາວເຮືອງສີສະຫວ່າງຕາ ສົດໃສ ປະທະກັບເລົ້າແສງແດດສີເຫຼືອງຍາມໃກ້ທ່ຽງຍິ່ງຄືຮຸ່ງໂຮງ, ເບິ່ງແລ້ວໜ້າຈົມບໍ່ໜ້ອຍ. ຂ້ອຍຫຍັບເຂົ້າໄປຫາເດ່ມືຈອນດອກໜຶ່ງພວມບານເບັ່ງ, ກົ້ມຫົວລົງຫວັງເຊີຍຈົມດົມກິ່ນ, ແຕ່ຟ້າເອີຍ! ຂ້ອຍວາງມືຢ່າງ ທີ່ສະໜອງບໍ່ທັນໄດ້ສັ່ງ! ຈັ່ງແມ່ນຂ້ອຍບໍ່ມັກກິ່ນດອກ ດາວເຮືອງ! ບາງຄົນອາດຈະວ່າຫອມ ຫລືບໍ່ເດືອດຮ້ອນຍາມດົມແຕ່ສຳລັບຂ້ອຍນັ້ນເຄີຍວິງວອນເຈັບຫົວຍ້ອນກິ່ນດອກໄມ້ ມາແລ້ວ. ຈັ່ງຊັ້ນ ດາວເຮືອງຈຶ່ງເປັນດອກໄມ້ຊື່ວສຳລັບຂ້ອຍ, ຂ້ອຍເຫັນວ່າມັນເປັນດອກໄມ້ທີ່ບໍ່ແນມຈົມໄດ້ຢູ່ໃກ້ງເທົ່ານັ້ນ, ຮູບໂສມ ແລະ ສີສັນຂອງມັນຈ່ອຍໃຫ້ດາວເຮືອງມີ ບົດບາດ

ໄດ້ຂຶ້ນປະດັບເທິງພາຂວັນແຕ່ງດອງ, ພາຂວັນບາສີປີໃໝ່, ສູ່ຂວັນອອກກຳ, ເໜັບໝາກເບັງອອນຮອບໄລງສົບ ແລະ ອື່ນໆ, ຖືກນຳໄປຮ້ອຍເປັນພວງມາໄລປະດັບປະດາ ແຕ່ຈະໃຫ້ເກັບດາວເຮືອງຂຶ້ນໃສ່ແຈກັນເອີຢູ່ໃນຫ້ອງນອນ ຫລືຫອງຮັບແຂກຫວະ ໂອຍເປັນໄປບໍ່ໄດ້ດອກ, ມັນເໝາະແຕ່ ຈະຢັ້ນສິດໃສ່ເທິງພາບາສີ້ບນແລ້ວ ບໍ່ສົມຄວນແຕະຕ້ອງໃຫ້ ກິ່ນຂືວຕິດມືເລີຍ.

ດອກກ້ານກ່ອງທີ່ຢູ່ຕິດງກັນກັບຕົ້ນດາວເຮືອງ ກໍສົມ ຈີ່ແທ້ງ ເບິ່ງມັນ! ກອງງ່ອນລິງ ກົ້ມລົງທຸກດອກ, ບໍ່ມີ ສະຫງ່າລາສີອັນໃດເລີຍ, ກີບອ່າວບາງດ້ານທາກີບຕີ່ງ ລ້ອນອ້ອນເກສອນແບບກະຮາງກະຮິ່ງ, ຈະເອົາດອກໄມ້ ແນວນີ້ໄປປັກແຈມເອ່ບ່ອນໃດຈຶ່ງຈະສະຫງ່າອົງອາດ. ບໍ່! ບໍ່ເອົາດອກກ້ານກ່ອງ ໄຫ້ກອງໂຄງສົມຈີ່ ໃຫ້ມັນກົ້ມກ່ອງຢູ່ເທິງຕົ້ນຂອງມັນເບິ່ງແລ້ວເປັນຕາດູຕືນເວດທະນາກວ່າ.

ສູງເໜືອພຸ່ມດາວເຮືອງ ແລະ ຢູ່ຫ່າງອອກໄປ ໜ້ອຍໜຶ່ງແມ່ນຕົ້ນ ດອກຄູນ ແລະ ຈຳປາ. ດອກໄມ້ ຈັ້ນສູງ! ໝາຍຄວາມວ່າຕ້ອງໃຊ້ໄມ້ສ່າວຕ່ອຍແໜ້ນເອົາ ຢັ້ງເກັບບໍ່ເຖິງ! ເອົ້າແທ້ແລ້ວຂ້ອຍເຫັນວ່າຈຳປາກີບຂາວແກມເຫຼືອງເປັນດອກໄມ້ທີ່ໜ້າຮັກໜ້າຖະໜອມບໍ່ໜ້ອຍ. ກິ່ນຫອມອົບອວນເວລາຢູ່ນຳກັນເປັນຈຳນວນຫລາຍ, ສີເຢັນຕາ, ກີບອ່ອນລະມຸນນວນມື, ທ້າກີບຈ່ອນຈ່ອນກັບໜຸ່ງວແໜ້ນ ຍາມບານກໍຍັງຈ່ອນເປັນຫລີບ ແນມເບິ່ງສະອາດຕາ ຄ້າຍງເຖິກນ້ອຍທາກໍອາບນ້ຳແລ້ວໃໝ່ໆຫອມຮວນໜ້າດົມໜ້າຈູມໜ້າ

ຮັກໄປໝົດ. ຂ້ອຍແຫງນຄໍແນມຫາພວງຈຳປາກີບ ຂາວແກມເຫລືອງ ແຕ່ແສງຕາຟາດເລີຍໄປເຫັນຈຳປາສີ ແດງແປກປະຫລາດຢູ່ແຈເຮືອ, ເວົ້າແທ້ແລ້ວຈຳປາຂາວນີ້ ໃຜກໍເຄີຍເຫັນມາຈົນບໍ່ແຮງແລ້ວລະ! ແຕ່ຈຳປາສີແດງລາຍກີບບົວທອງນີ້ຕີ ມີບວານເລີກແຝງສະເໜ່ ເບິ່ງບໍ່ຄືກຄາຍ ທັງກຳນະຍີ່ເປັນຈຳປາພັນໃໝ່, ຈັກແມ່ນໃຜກຳມາປູກກ່ອນ, ຢູ່ວຽງຈັນຂ້ອຍເຫັນມີຢູ່ບໍ່ເທົ່າໃດຕົ້ນ, ເປັນຫຍັງຄົນຈຶ່ງບໍ່ນິຍົມປູກເນາະ ທັງໆທີ່ວາມີບວານ ແລະກໍປູກງ່າຍຖີ່ຢູ? ໂດຍສະເພາະມັນບໍ່ແມ່ນຕົ້ນໄມ້ໃຫຍ່ສູງສຸດສາຍໄມ້ຟ້າ, ຖ້າປູກຢາຍໄປຕາມແຄມຖະໜົນກໍຈະໃຫ້ທັງຮົ່ມໃຫ້ທັງຄວາມ ງາມໃນຍາມມັນອອກດອກບານ. ຂ້ອຍຍ່າງໄປຫາຕົ້ນຈຳປາແດງມີດອກຫລົ່ນແຫວຢາຍຢູ່ຕາມໜ້າດິນ. ຕົ້ນສູງຖອນທົວຫລາຍສອກ ຖ້າຈະເກັບກໍຕ້ອງຫາສາວມາແໜນເອົາ ຮື! ແໜ້ນດອກຈຳປາຫວະ? ຂ້ອຍບໍ່ມັກເລີຍ ຢ້ານຢາງມັນຍອຍ ຮາກໜ້າຖືກເສື້ອຜ້າ, ແລະ ດອກຈຳປາ ເວົ້າກໍເວົ້າເທາະຖ້າແຕກອອກຈາກກົ້ນເປັນດອກດຽວແລ້ວກໍບໍ່ເຫັນວາຈີງາມ ພິລືກພິລຳດອກ ມັນງາມຍາມຢູ່ເປັນພຸ່ມເປັນພວງຫຼັ້ອຍຮວາດຂື້ນເອພາຂວັນ... ຖ້າເດັດອອກມາດອກໜຶ່ງ ດອກດຽວແລ້ວກໍບໍ່ຈາງວາຈະເອົາເມັ້ນໄປເອໃສ ທັງກໍແຫວ ແຫງໃວສິນຄວນ ກີບຈຳເປັນສີນ້ຳອອຍໂລດ! ຮຶ...! ຂ້ອຍທັນໃຈໃຫຍ່, ຢ່າເລີຍ ແນມໄປຫາງສົ້ນສວນອີກເບື້ອງໜຶ່ງ ຍັງເຫັນດອກໄມ້ເດຍລະດາດເຕັມໄປໝົດຢູ່. ພຸ່ມແມ່ນ ດອຣໜ້ຽວນີ້ສີແດງແສດຕົ້ນຕ່ຳງ ປູກປົນຢູ່ກັບຈຳພວກພິດພຸ່ມບໍ່ມີດອກ

ຂ້ອຍຖອຍອອກຈາກຮົ່ມເງົາຂອງຈຳປາແດງຫລຸບໃສ່ພຸ່ມ ດອກໄມ້ສີແດງສົດໃສທີ່ຊູຊໍ່ອວດອ້າງກາງພຸ່ມໜາສີຂຽວ ກະດຽວວ່າແມ່ນດອກຫຍັງ? ທີ່ແທ້ໂລດແມ່ນດອກທອນໄກ ກັບດອກສາມປີ ຫລຽວມາແຕ່ໄກຄືວ່າງາມກະດໍ ປ້າເອີຍ! ຂ້ອຍບໍ່ເຂົ້າໃຈເລີຍວ່າ ເພິ່ນປູກດອກອັນນີ້ໄວ້ເຮັດຫຍັງ... ເອີ້ ດອກສາມປີນັ້ນກໍສົມຊື່ມັນແລ້ວລະ ບໍ່ຫອບໍ່ຕົກສີ ກັບແຂງທະນີ, ບໍ່ຢາກເອີ້ນວ່າກັບດອກ ເພາະມັນບໍ່ນຸ້ມນວນ ອ່ອນນີ້ເລີຍ ແຕ່ບໍ່ມີກິ່ນ ຮູບໂສມກໍທ່ຳມະດາ ແລ້ວດອກທອນໄກນີ້ເດ? ສົມຊື່ແທ້ງເປັນດອກໄມ້ໄຮ້ກັບ ບໍ່ມີຫຍັງປະດັບປະດາໃຫ້ຈັບງາມ ເປັນຕອນເອຸເລີຕອນໄກຕົ້ນເປື່ອຍໆ ມີ ຂ້ອຍຢ້າງໜ້ອຍໜຶ່ງ ກໍຈັ່ງແມ່ນສົມຊື່ມັນ ເອົາລະໄດ້ຈິງໃຈ ມາແລ້ວກໍຈະດົນເປີ່ງກອນ. ບໍ່ມີກິ່ນຫອມ ກິ່ນຮີວອັນໃດເລີຍ . ຈະເປັນດອກໄມ້ງາມໄດ້ແນວໃດ? ຈະເອົາໄປເອໄປ ແຕ່ງໃສ່ເດ? ສົມປູກຫວານໄວ້ກັບຫຍ້າບໍ່ໃຫ້ເຕີບບານມີສີສັນ ອັ້ນແດ່ເທົ່ານັ້ນລະ ມັນເປັນດອກໄມ້ປະດັບດິນໃຫ້ເດັກນ້ອຍເດັດໄປຕີກັນສີສົມມຸດໃຫ້ເປັນໄກ່ພວນເຕັ້ນເຂົ້າຕີກັນນັ້ນແລ້ວ !

ແມ່ນດອກຫຍັງນໍ? ມີຫລາຍສີທັງຂາວເຫລືອງແດງ ສະຫລັບສັບຊ້ອນກັນ, ຕົ້ນຕ່າງໆຄືງຈະເດັດວາຍ ຂ້ອຍ ງວາກຊ້າຍຂວາເຫັນວ່າພຸ່ມດອກໄມ້ຕິດກັບຈ່າພວກພິດໃບປະດັບພຸ່ມ ມີສີສັນສະຫວາດຕາບໍ່ໜ້ອຍ ຈຶ່ງເມີນໜ້າໜີຈາກດອກທອນໄກກັບສາມປີ. ຂອງມັນແນ່ນອນຢູ່ແລ້ວວ່າ ເຖິງບໍ່ມີດອກໄມ້ແນວອື່ນອີກຂ້ອຍກໍຈະບໍ່ມາງົມເລືອກເດັດດອກທອນໄກເລີຍ.

ແມ່ນດອກບານຊື່ນນັ້ນເອງ ທີ່ປະດັບແຈສວນເບື້ອງນີ້ໃຫ້

ມີສີສົ້ມ ມີຊີວິດຊີວາ ສົມຊື່ມັນຢູ່ດອກ ຫລຽວເບິ່ງກໍຊື່ນຕາແທ້ ແທ້ ຍ້ອນສີສົດໃສຫລາຍຫລາກຂອງມັນ, ດອກບານຊື່ ມີກີບ ອາວບາງແຕ່ສູ້ທົນແດດຝົນດີ ຕັດໄປໃສ່ແຈກັນເອົາກໍງາມຫລາຍ ນີ້ ກີບຂອງມັນຢາບອ່ອນເກສອນອາວນູນໆ ຈະນິດຫລາຍຊັ້ນ ວານຫນ້າຮັກຢູ່ ແຕ່ມັນເປັນດອກໄມ້ໄຮ້ກິ່ນ! ຂ້ອຍມັກ ດອກ ໄມ້ມີກິ່ນຫອມເປັນຕົ້ນຕໍຢູ່ແລ້ວຈຶ່ງເຫັນວ່າດອກບານຊື່ນເໝາະ ແຕ່ຈະບານຢູ່ເທິງຫນ້າດິນຫລືປັກແຈກັນໃນມື້ອັນທຳມະດາ , ແຕ່ໃຜຈະເອົາບານຊື່ນຂຶ້ນໂຕະໃນວັນບຸນ ແລະ ນຳໄປເຮັດ ຊໍ່ດອກໄມ້ຕ້ອນຮັບແຂກດີນລະ? ຂ້ອຍກົ້ມແຍງມັນອີກ ຄັ້ງ, ດອກບໍ່ນ້ອຍບໍ່ໃຫຍ່ນົ້ນສະເຫມີ, ກີບກະຫ້າວກະຮີ້ງ, ສີສົດ ໃສ ເບິ່ງໄປມາຄ້າຍດອກໄມ້ຢາງ! ໂອ໋ຍ ດອກໄມ້ ຢາງ, ຂ້ອຍຈື່ງດອກໄມ້ຢາງທີ່ຫນຶ່ງ ຄິດບໍ່ອອກວ່າເປັນຫຍັງ ຈຶ່ງມີ ຜະລິດຕະພັນແບບນີ້ເກີດຂຶ້ນ? ແລ້ວດອກໄມ້ແຫ່ງຊາດຈັດໄປສື ດອກໄມ້ຢາງແບບນີ້ ຂ້ອຍບໍ່ຄິດວ່າຈະເລືອກດອກເດີ້!

ໄວເທົ່າກັບຄວາມຄິດຂ້ອຍປິດຫນ້າຫນີຈາກພຸ່ມດອກບານ ຊື່ນດ້ວຍຄວາມຮູ້ສຶກແຄ້ນເຄືອງ, ຢູ່ພຸ່ມມີດອກໄມ້ສີແດງ ສົດ ໃສບາດຕາຢູ່ຫລາຍກໍ ແມ່ນດອກຫຍັງນັ້ນ? ຊູກ້ານສະຫງ່າຫນ້າ ເກງຂາມຢູ່ຄຽງກັບແຄມຮົ້ວ. ແມ່ຕູ້ກໍຊາງຊອກຫາແນວ ມາ ປູກໄດ້ຫລວງຫລາຍແທ້ໆ ຂ້ອຍຮູ້ສຶກສົນໃຈດອກໄມ້ປະເພດນີ້ ເພາະບໍ່ປາກົດວ່າເຫັນຢູ່ໃສມາກ່ອນ ຂ້ອຍຟ້າວລ້ຽວໄປໃສ່ມັນ ໂອ ດອກບົວບົກນັ້ນເອງ ດອກບານໄຂເປັນກີບຕິດຊ້ອນ ກັນ ຈີ່ງຮູບບົ້ງເຫວີ ເສັ້ນເກສອນຍາວງປາຍປຸ່ມຈັບລະອອງ ສີ ເຫລືອງພົ້ນອອກມາ. ເປັນດອກໄມ້ທີ່ມີຮູບຈີ່ງປະຫລາດແນວ

ໜຶ່ງ ໃບຍາວແລບຄ້າຍໃບເຕີຍ. ບໍ່ເຂົ້າໃຈວ່າ ເປັນຫຍັງ ເຂີ້ນຈຶ່ງເອີ້ນມັນວ່າ ບົວບົກ ບໍ່ວ່າຮູບດອກ ຫລືຮູບໃບມັນບໍ່ມີ ຫຍັງຄ້າຍຄືກັນກັບດອກບົວນ້ຳປະເພດໃດເລີຍ. ຂ້ອຍກົ້ມລົງ ກອງດອກມາດົມ ມັນເປັນດອກໄມ້ໄຮ້ກິ່ນຫອມອັນເປັນຕົວອາ ພອນປະດັບກາຍຂອງນວນນາລາ ດອກໄມ້ບໍ່ຫອມ ມີຄ່າຄວນ ເດັດດົມບໍ? ຢ່າລະ ດອກບົວບົກສີແດງສົດໃສ ງາມ ສະດຸດ ຕາເວລາເບິ່ງມາແຕ່ໄກ ແຕ່ເມື່ອພິຈາລະນາໃກ້ໆແລ້ວ ມັນ ກໍຕົກອັບດັບໂດຍບໍ່ທັນມີໂອກາດກ້າວຂຶ້ນສູ່ເວທີແຂ່ງຂັນຈັ່ງ!

ຂ້ອຍທັ່ນໃຈຍາວເມື່ອຄິດສືບໃຈບໍ່ເລືອກເອົາດອກ ບົວບົກ... ຄວາມນຶກຄິດຫວນຫາອິນທະຫວາທີ່ມີກິ່ນຫອມ ອົບອວນ, ໃຈຍັງບໍ່ນ່ວນອອນຈອນ ເພາະຍັງຖະຫວິນເຖິງ ກິ່ນອັນລະມຸນລະໄມຂອງຈຳປາ ສີຂາວສະອາດຕາຂອງ ມຸດທະຈາດ ຢ່າລະ! ແນນໄປທາງໜ້າ, ສວນດອກໄມ້ປ່ຽນ ຮູບໃສ່ມາເປັນມິດມູມປູກໃສ່ກະຖາງ. ໂອະພູມມີກຸຫລາຍ ! ໂອ້...ກຸຫລາຍ ຖ້າຈະປ່ຽນໃສ່ຫມູ່ແລ້ວ ກຸຫລາຍຄວນໄດ້ຈື່ ວ່າລາຈີນີແຫວນວນບຸບຜາ ບໍ່ແມ່ນຫວະ? ຂ້ອຍຍິ້ມຢ່າງເບີກບານຕໍ່ຄວາມຄິດຂອງຕົນ. ຍັງມີດອກໄມ້ໃຫ້ເລືອກອີກ ທົ່ວຫລາຍແນວ, ພູ້ນດອກເຢຍບີຣາ, ກີບອອນນຸ່ມຍາວ ແລບຈ້ອນກັນຫລາຍຈຸບເປັນລະບຽບຮຽບຮ້ອຍ ສີສັນຫລາກຫລາຍ ນັບບໍ່ຫວນ ແຕ່ຫາກທົນທານຕໍ່ນ້ຳອາກາດ ສີງາມສົດໃສ , ເປັນດອກໄມ້ທີ່ນວນນິຍົມປູກຫລາຍ, ເອົາຂັ້ນເວໂຕະ ແລ້ວ ໃຫ້ວ່າບໍ່ຕ້ອງໃສ່ດອກອື່ນ ແຕ່ຈີເອີ້ນວ່າມັນງາມເລີດ ແລວ ເບາະ? ບໍ່ດອກ, ກຸຫລາຍສີສະເໜກວ່າ ກີບຈອນຈອນກັນ

ບໍ່ຕ່າງຫຍັງກັບຝີມືມະນຸດຄ່ອຍປັ້ນຈຶ່ງເອົາກາວຕິດຈ້ອນ ເຂົ້າກັນ. ເມື່ອຄິດເຫັນມາຍກຸຫລາບບຸວນຈະບານເຜີຍກີບແລ້ວ ຂ້ອຍກໍ່ຢືນຄອຍອາລົມຫວານໆ ລຸກຍ່າງໜີຈາກກໍ່ບີບອຸ່ນກາຍ ແລ້ວປຸກຕົ້ນເຢຸເບີອຸາສອງສາມແອງທີ່ມີດອກປະດັບຕ່າງຕາ, ຂ້ອຍມຸ່ງໜ້າໃສ່ແອງດອກກຸຫລາບທີ່ຢູ່ຖັດໄປ ເຊິ່ງມີຢູ່ນຳກັນສາມແອງ. ກຸຫລາບກໍ່ໜຶ່ງໃບງາມຄືກົກໜາຂຽວອື່ນຕາມອມອອກດອກຈ່ຳງູມ. ເບິ່ງຮອດບໍ່ທັນຮູ້ວ່າຈະເປັນສີຫຍັງ. ດອກງູມຂອງມັນໃຫຍ່ເທົ່າງໄປມື ສະແດງວ່າຄົງແມ່ນແນວກຸຫລາບໃຫຍ່ກີບໜາ, ຖ້າບານອອກຄົງຈະງາມ, ແຕ່ຕອນນີ້ຍັງແມ່ນບໍ່ເຫັນຄວາມງາມໃດໆ. ຂ້ອຍກ້າວຕໍ່ໄປຂ້າງໜ້າ ກໍທີ່ຢູ່ຖັດມາເປັນກໍ່ກຸຫລາບມີດອກສີເຫລືອງຂີດໃສ່ພູມບອງ ຫວານຕາບານປະດັບຢູ່ຕົ້ນສາມດອກ ໂອ! ກຸຫລາບ! ຂ້ອຍ ກົ້ມລົງດົມດອກໃຫ້ອີ່ມໃຈໜ້ອຍຄອ້ງເທົ່ານັ້ນ! ແຕ່ບໍ່ມີຂ້ອຍ ແຕະຕ້ອງຄຶກວ່າການກີບຂອງມັນຊຸຫລົ່ນອອກສອງສາມກີບໂລດ ! ອີກຸຫລາບເຖົ້າ! ເມື່ອກີບຫລົ່ນອອກຮອດສອງສາມກີບ ແລ້ວແນນອນວ່າຄວາມງາມສົມບູນເຕັມສ່ວນຂອງມັນກໍ່ຍ່ອນ ຫລຸດລົງນຳ... ຂ້ອຍເສຍດາຍແສນເສຍດາຍ, ກ່ອນໜ້າປີ ໒-໓ ນີ້ ກຸຫລາບຈໍ່ນີ້ຄົງພອມໜ້າແຍງໜ້າຊະໝອມ ແລະງາມກວາໝູ່! ແສງຕາກວາດແນມຕໍ່ໄປ ຍັງມີອີກ ກໍໜຶ່ງເປັນກຸຫລາບແດງສີດສົບາດຕາ, ມີດອກດອງບານເຕັ້ມເປັນສະຫວາຍູ່ຫານກາງສີຂຽວສະຫລາງຂອງພຸ່ມໃບ. ກຸຫລາບແດງກີບໃຫຍ່ໜາ ອອນນຸ່ມມື! ຂ້ອຍແນມເບິ່ງມັນ ດ້ວຍຄວາມຮູ້ສຶກອື່ນອີມ... ນີ້ແລ້ວ! ດອກທີ່ງາມກວາໝູ່ ແມ່ນ

ກຸຫລາບທີ່ພວມບານ ສີສົດຊື່ນດອກນີ້ເອງ! ຂ້ອຍກົ້ມລົງຫວັງຈະສູດດົມເອົາກິ່ນຫອມອ່ອນໆຂອງກຸຫລາບ ໂອຍ! ຟ້າເອີຍຕົກໃຈຫນັກ! ແມ່ນຕົວອີຫຍັງດິ້ນແດວໆຢູ່ຫັ້ນ! ກີບຈອນໃນຕິດເກສອນຂາດແຫວ່ງໄປເຄິ່ງຫນຶ່ງແລ້ວ ໂອຍເສຍດາຍເດ້! ເປັນຫຍັງກຸຫລາບງາມໆຈຶ່ງມີຫນອນຈອນໄຈຢູ່ ! ຂ້ອຍຖີກມືອອກຈາກກິ່ງກ້ານ ທັນໃດກໍຮູ້ສຶກເຈັບປ້າບຢູ່ ປາຍນີ້ວຊີ້! ເວນເອີ້ຍ ຫນາມແຫລມກຸຫລາບປັກຕໍາເຂົ້າຢ່າງລຶກແລ້ວ ຂ້ອຍຈູດປາກດ້ວຍຄວາມຈິບເຄີຍເມື່ອຮູ້ສຶກເຈັບ, ຟາວເອົາປາຍນີ້ວຂຶ້ນມາບີບໃຫ້ເລືອດຢັ້ນອອກ. ຮູ້ສຶກ ເສຍໃຈແລະ ປ່ຽນແປງແນວຄວາມຄິດໃນທັນທີ. ບໍ່ດອກກຸຫຼາບດອກນີ້ບໍ່ແມ່ນດອກງາມສົມບູນກ່ວາຫມູ່ເລີຍ!

ເງີຍຫນ້າຫນີຈາກແອ່ງກຸຫລາບດ້ວຍຄວາມຮູ້ສຶກອາວອນອາໄລກວ່າຫມູ່, ໃນຈິດສໍານຶກຂອງຂ້ອຍ ພາບກຸຫລາບ ສີຂາວນວນສົດໃສ ມີນໍ້າຫມອກເກາະຕິດສອງສາມຢອດນັ້ນ ຄືວ່າງົດງາມບໍລິສຸດຫາສິ່ງໃດປຽບບໍ່ໄດ້, ແຕ່ຕໍ່ຫນ້າຂ້ອຍ ຈໍ່ແມ່ນກຸຫລາບເຖົ້າກີບຂຸຫລົ່ນ, ແມ່ນກຸຫລາບພວມຈ່ອມ ບໍ່ທັນອວດອ່າງສີສັນ, ແມ່ນກຸຫລາບທີ່ມີບົ້ງຫນອນຈອນໄຈ...

ຂ້ອຍກ້າວໄປຂ້າງຫນ້າອີກສອງສາມກ້າວ ແສງຕາແນມກວາດໄປຂ້າງຫນ້າ. ຕາຍແລ້ວ! ຂ້ອຍຜ່ານພຸ່ມກໍດອກ ໄມ້ມາຫລັກສອນແລ້ວ. ບັດນີ້ຍັງແຕ່ພວກພືດໃບສີ ຈໍາພວກບອນລາຍ ຫວ້ານຕ່າງໆທີ່ມີຮູບແປກປະຫລາດໄຮ້ເຊີ່ງກິ່ນຫອມທັງມວນ. ແນ່ນອນພືດພວກນີ້ບໍ່ຄູ່ຄວນກັບການເດັດເລີຍ, ມັນງາມເມື່ອຢູ່ເປັນພຸ່ມເປັນພົ້ວໃນແອ່ງກະຖາງດິນຈີ່... ແຕ່

ຈະເດັດເອົາບອນລາຍດ້ານກິ່ງດ້ານໃບໄປປະດັບນັ້ນ ແມ່ນ
ການທຳລາຍມັນໂດຍກົງຈ້ຳ. ຈັ້ນຂ້ອຍຈະເລືອກເອົາ ດອກ
ໃດ? ງວາກຄືຫລັງ! ສວນດອກໄມ້ກອງແສງແດດ ຍາມໃກ້
ທ່ຽງຄືວ່າເສົ້າສີກີບແຫ່ວລົງ. ຂ້ອຍຍົກໂມງຢູ່ແຂນຂຶ້ນເບິ່ງ.
ຕ້າຍ! ສິບສອງໂມງຍັງ ໑໕ ນາທີແລ້ວ ຂ້ອຍໃຊ້ເວລາຈົມ
ເລືອກດອກໄມ້ເປັນຈົ່ວໂມງແລ້ວ ຍັງບໍ່ໄດ້ດອກຖືກໃຈເລີຍ!
ແລ້ວຂ້ອຍຈິເດັດດອກໃດໄປໃຫ້ເອື້ອຍວັນລະ? ຕາມກົດເກນ
ຕົກລົງກັນນັ້ນ ຂ້ອຍຕ້ອງເລືອກເອົາດອກໄມ້ດອກໜຶ່ງ!ຂ້ອຍ
ກວາດແສງຕາສືບຫລັງດ້ວຍຄວາມເສຍດາຍ. ແນມ ເບິ່ງ
ຈຳປາທີ່ບານເດຍລະດາດວາດຈີ່ງອວດດີ່ງ ເພາະຢູ່ສູງເໜືອ
ໜູ່, ຕົ້ນດອກດູນຫ່ວາງເປົ່າ ເພາະບໍ່ແມ່ນລະດູຂອງມັນ .
ໂອ. ພຸ່ມຍັງມີຕົ້ນຝາງແດງນ້ອຍຢູ່ຕິດປະຕູເຂົ້າບານ! ດອກ
ແດງແກມແສດເປັນພຸ່ມພວງໜ້າຮັກ, ຜູ້ເຖົ້ານັກໃຊ້ໄປເພາະ
ບຸນ, ຂ້ອຍລືວໄປຫາ ລົ່ງເລແນມເບິ່ງຮູບໂສມຂອງ ດອກ
ຝາງແດງ. ເສຍໃຈ! ເຫລືອໃຈ! ດອກຝາງແດງ! ກີບ
ນ້ອຍອ່ອນ, ຢາຍກັນຢູ່ແບບໄຮ້ສີລະປະໃດໆ ເປັນດອກໄມ້
ໄຮ້ກິ່ນຢ່າງໜຶ່ງ, ຖ້າເດັດອອກຈາກຕົ້ນກໍມີຫວັງແຫວ ຕາຍ
ຈ້າຍໂລດ... ແຕ່ຈະເຮັດແນວໃດໄດ້, ບໍ່ມີດອກອື່ນ ໃຫ້
ເລືອກແລ້ວເດ! ແດດຍິ່ງຮ້ອນ ຂ້ອຍຮູ້ສຶກເມື່ອຍວິນ ຫົວທິວ
ນຳ້, ດອກຝາງແດງຕ່ຳໜ້າໄຫວຕີງຄ່ອຍໆຍ້ອນແຮງລົມ ,
ເບິ່ງເປັນຈິ່ງເປັນພວງມັນກໍບໍ່ຂີ້ຮ້າຍດອກ, ຈຳເປັນເອົາດອກ
ຝາງແດງນີ້ລະ !

ເອື້ອຍວັນເຮັດໜ້າຈະຍິ້ມກໍບໍ່ແມ່ນ ຈະໄຫ້ກໍບໍ່ແມ່ນເມື່ອ

ເຫັນຂ້ອຍຖືວ່າດອກຟາງແດງຂຶ້ນມາ ສີໜ້າຂອງຂ້ອຍເອງກໍຄົງບໍ່ຕ່າງຫຍັງກັບລາວປານໃດ.

- ນີ້ຫວະ... ດອກໄມ້ວານທີ່ສຸດຂອງນ້ອງ? ລາວຊຸຫານຫ້ວງ ເຊິ່ງກໍແມ່ນສິ່ງທີ່ຂ້ອຍຄາດຄິດໄວແລວ ເຖິງປານນັ້ນຂ້ອຍກໍຍັງຫາຄຳຕອບລາວໄດ້ຄືເຮັດບໍ່ເຂົ້າໃຈເອົາ.

- ມັນບໍ່ວານຖືກໃຈເອື້ອຍຫວະຈັ້ນ? ພາໄລຖາມ ຄືນໄປຈັ້ນແລ້ວ.

ເອື້ອຍວັນຍິ້ມ, ຍິ້ມແລ້ວກໍຫົວຂຶ້ນແຮງໆ... ເຮັດໃຫ້ຂ້ອຍຕິດແສດຫົວຂຶ້ນນຳ, ສອງເອື້ອຍນ້ອງພວກເຮົາຫົວ ນຳກັນຈົນເມື່ອຍ.

- ເລືອກໄປເລືອກມາອັນໃດກໍຄືວ່າບໍ່ຄັກ, ດອກ ສຸດທ້າຍເລີຍວານກວ່າໝູ່ເນາະ! ເອື້ອຍວັນສະຫລຸບແລ້ວຈູງແຂນຂ້ອຍເຂົ້າໄປໃນຫ້ອງນອນຄືນ. ຈັດແຈງຮັບເອົາ ດອກຟາງແດງຈາກມືຂ້ອຍໄປໃສ່ແຈກັນແກ້ວສີຟ້າໃສງ ຮູບ ຮຽວຈ່ອຍສູງງ ປາກເຫວີອອກ, ເອົານ້ຳໃສ່ແລ້ວມານັ່ງເທິງຕຽງຮຽງກັບຂ້ອຍ.

- ກໍວານຢູ່ໄດ້ນີ້ແກ້ວ! ເບິ່ງຄືງຕິ ເອື້ອຍວ່າມັນ ກໍບໍ່ຊິ້ຮ້າຍເດ້, ນ້ອງເບິ່ງແມ້ !

ຂ້ອຍແນມນຳເບິ່ງແຈກັນກັບດອກຟາງແດງທັນໃດກໍເຂົ້າໃຈໃນປັດຈະຍາຊີວິດຂອງເອື້ອຍວັນ, ຂ້ອຍຈຶ່ງວິກຫົວຍິ້ມ.

ວານຄືຢູ່ໄດ້ເນາະເອື້ອຍວັນ ຖ້າເຮົາຮູ້ຈັກນຳໃຊ້ມັນກະດາຍ!

# ພຽງແຕ່ພົບ



ໂດຍ ພ. ພວງສະບາ



ຫິມະເລີ່ມຕົກມາໄດ້ຫລາຍວັນແລ້ວ ເຮັດໃຫ້ພູມພາບທົ່ວນະຄອນຫລວງມົດສະກູໂອບອາບໄປດ້ວຍຄາບຂອງຫິມະ, ສະຖານທີ່ສາທາລະນະຕະຫລອດເຖິງຖະໜົນຫົນທາງ ແລະ ອາຄານບ້ານເຮືອນກາຍເປັນສີຂາວ, ໃຕ້ທ້ອງຟ້າແນມເບິ່ງລະອອງຫິມະປົ່ນປິວຂຸ່ຫລົ່ນລົງມາຄືກັບຍອງຝ້າຍສີຂາວ ພ້ອມຖືກທ່ອນໂຮຍໃຫ້ປິວໄປຕາມສາຍລົມ, ເບິ່ງແລ້ວ ພາໃຫ້ເກີດມີຄວາມສະອອນໃຈຫາອັນໃດປຽບປານບໍ່ໄດ້.

ຕາມປົກກະຕິແລ້ວ ວັນອາທິດ ຂ້າພະເຈົ້ານອນຕື່ນ ເວລາ ໑໐ ໂມງເຊົ້າ ແຕ່ອາທິດນີ້ນັ້ນຕ້ອງໄດ້ຕື່ນແຕ່ເວລາ ໘ ໂມງ ເພາະໄດ້ນັດກັບນັກສຶກສາໄວ້ວ່າ ຈະໄປຍາມຢູ່ຫໍພັກ, ຂ້າພະເຈົ້າລຸກນັ່ງແນມຜ່ານປ່ອງຢ້ຽມແກ້ວສອງຊັ້ນ ອອກໄປຈົມບັນຍາກາດຂ້າງນອກກ່ອນທີ່ຈະເຂົ້າຫ້ອງນ້ຳ, ປະກົດວ່າສະພາບອາກາດຂ້າງນອກຫິມມະຍັງຕົກລົງມາຢ່າງບໍ່ຂາດໄລຍະ ແລະ ກໍຄືຈັ່ງວ່າຫິມະຕົກຫລາຍກວ່າທຸກວັນທີ່ຜ່ານມາ . ເຖິງແມ່ນຫິມະຈະຕົກແຮງກອງໜາຂຶ້ນປານໃດກໍຕາມ, ແຕ່ຊາວນະຄອນຫລວງມົດສະກູບໍ່ມີໃຜຍອມຈຳນົນກໍ່ຄວາມໜາວເໜັບຂອງດິນຟ້າອາກາດ, ຝູງຄົນຍັງພາກັນທ່ອງທ່ຽວ ໄປມາຕາມສະພາບປົກກະຕິ ບໍ່ວ່າວັນອາທິດຫລືວັນປະກອບທຸລະກິດວຽກງານທຳມະດາກໍຕາມ ຊາວໂຊວຽດທຸກຄົນຍັງພາກັນຜ່ານຄື້ນຫິມະໄປສູ່ສຳນັກງານອົງການ ຫລືໂຮງຈັກໂຮງງານໂດຍບໍ່ຢັ້ງທໍ້, ຕໍ່ໃຫ້ຫິມະໄຢດລົງມາກອງໜາເປັນແມັດໆ ກໍບໍ່ສາມາດຈະຢັບຢັ້ງນານະຈິດຂອງຊາວໂຊວຽດໄວ້ໄດ້; ຍາມໃດສຽງເຄື່ອງຈັກຕາມໂຮງຈັກໂຮງງານກໍຍັງສົ່ງສຽງ ດັງ

ແລະ ໝູນລ່ອນໄປຕາມຈັງຫວະຂອງມືນຢ່າງສະໝ່ຳ ສະ ເໝີ ເພື່ອຕອບສະໜອງໃຫ້ແກ່ຄວາມຮຽກຮ້ອງ ຂອງການ ຂອງຫັງດິນ.

ຂ້າພະເຈົ້າຍຶດຄໍ່ສ່ອງເບິ່ງປ້າຍລົດປະຈຳທາງ ໄດ້ເຫັນ ປູງຕີນທັງຍິງ ແລະ ຊາຍເຖົ້າແກ່ຍ່າງສາວມາກັບ ຢືນອາບ ລະອອງຫິມະຢູ່ຢ່າງບໍ່ສະທົກສະທ້ານຕໍ່ຄວາມ ໜາວເຢັນ , ຂ້າເຈົ້າມາກັບຢືນລໍຖ້າລົດປະຈຳທາງມາເຖິງ ແຕ່ລະ ຄົນ ມາກັບນຸ່ງເຄື່ອງກັນຫິມະຢ່າງເປັນລະບຽບຈົບງາມ.

ຂ້າພະເຈົ້າຍົກໂມງໃນແຂນຂຶ້ນມາເບິ່ງ ປະກົດວ່າເຂັມ ບອກເວລາໄດ້ເຄື່ອນຕົວກາຍເລກ ໗ ໄປເກືອບເຄິ່ງ ແລ້ວ ຈຶ່ງຟ້າວຈຳລະຮ່າງກາຍຊັດປ່ຽນເຄື່ອງນຸ່ງ, ມີປີໃສ່ ຊຸດກັນ ຫິມະເຕັມຊຸດ ເມື່ອຮຽບຮ້ອຍແລ້ວຈຶ່ງອອກຈາກໂຮງແຮມໄປ ຢືນລໍລົດປະຈຳທາງຮ່ວມກັບຜູ້ໂດຍສານຄົນອື່ນໆ... ໄລຍະ ທາງຈາກໂຮງແຮມບ່ອນພັກໄປຫາສະຖານີລົດເມໂຕຣ ຕ້ອງ ໄດ້ຂີ່ລົດປະຈຳທາງໄລຍະທາງຜ່ານ ໖ ປ້າຍຈຶ່ງຮອດ.

ລົງຈາກລົດປະຈຳທາງແລ້ວກໍຮີບຮ້ອນເຂົ້າໄປໃນສະຖາ ນີລົດເມໂຕຣ ຂ້າພະເຈົ້າຈົກເອົາເງິນຫລຽນຊະນິດ ຫ້າໂກ ເປັກ ປ່ອນລົງຕູ້ຜ່ານທາງເຂົ້າສູ່ຂັ້ນໄດເລື່ອນ, ພໍໄປໃນ ຕູ້ ຜ່ານໃຫ້ສັນຍານກໍຢ່າງຫລີບເຂົ້າທັນທີ ເມື່ອຕໍ່ໄປໃສ່ ຂັ້ນໄດ ເລື່ອນລົງສູ່ເມໂຕຣຢູ່ທາງພື້ນດິນ, ຂ້າພະເຈົ້າຢືນຢູ່ ຂັ້ນໄດ ເລື່ອນທັງພອງປັດຫິມະທີ່ປິວເສດເຫລືອຢູ່ຕາມເສື້ອ ປານໂຕ ບໍ່ໄດ້ສົນໃຈກັບຜູ້ອື່ນປ່ອຍໃຫ້ຂັ້ນໄດເລື່ອນພາເອົາຕົວຂອງຂ້າ ພະເຈົ້າລົງສູ່ພື້ນດິນຕາມລຳພັງ.

ຫລີກອັ້ນໄດເລື່ອນ ຍ່າງໄປບໍ່ພໍເທົ່າໃດນາທີກໍເຖິງ ສາຍທາງເມໂຕຣ, ພໍເມໂຕຣຈອດປ້າຍ ຂ້າພະເຈົ້າກໍ ບຸບຣຸດສູງດີນເຂົ້າໄປທັນທີ ເມື່ອໄດ້ທັນກັບເວລາກ່ອນທີ່ ປະຕູລົດເມໂຕຣຈະອັດ, ພາຍໃນຕູ້ເມໂຕຣແອອັດໄປດ້ວຍ ຜູ້ຄົນນ້ອຍໃຫຍ່, ພໍປະຕູລົດເມໂຕຣອັດກັບເຂົ້າຫາກັນແລ້ວ ເມໂຕຣກໍເລີ່ມແລ່ນໄປຕາມລາງຂອງມັນ ບັນທຸກເອົາຜູ້ ໂດຍສານໄປສົ່ງຕາມປ້າຍຕ່າງໆ ພາຍໃນຕູ້ເມໂຕຣເງີຍແນ່ນ ຜູ້ໂດຍສານຈະຄັ້ນຄາໜາແໜ້ນປານໃດກໍຕາມ ຂ້າພະເຈົ້າກໍພະຍາຍາມເລື່ອນຕົວເອງເທື່ອລະນ້ອຍ ເມື່ອໄດ້ມາຢືນແປະປະຕູທາງອອກ ເວລາລົດເມໂຕຣຈອດຈະໄດ້ສະດວກ ສະບາຍອອກໄດ້ທັນກັບເວລາ.

ນັບແຕ່ປ້າຍທຳອິດທີ່ເຂົ້າເມໂຕຣໄປຫາປ້າຍບ່ອນຂ້າພະເຈົ້າຈະອອກໄປກໍ່ໃສ່ເມໂຕຣສາຍໃໝ່ຕ້ອງໄດ້ຜ່ານເຊີງ ມີປ້າຍ; ຕາມທຳມະດາແລ້ວ ຜູ້ໂດຍສານພາຍໃນເມໂຕຣຈະໃຊ້ເວລາວ່າງອ່ານໜັງສື ນີ້ທັງປະເພດລາຍວັນ, ພະອະນຸຍາຍ ຫລືພາກຄວາມຮູ້ຕ່າງໆຕາມແຕ່ຜູ້ສະແຫວງມາໄດ້ ແຕ່ໃນເມໂຕຣຖ້ຽວນີ້ ແລະ ພາຍໃນຕູ້ນີ້ບໍ່ມີຜູ້ໃດອ່ານ ບ່ອນວ່າງຄົນຄັບກັນໂພດ, ຂ້າພະເຈົ້າຢືນສະຫວິບອາລົມຢູ່ລໍ່ມັງ ແຕ່ສຣົງເຕືອນວ່າເຊີງປ້າຍບ່ອນຈະອອກແລ້ວຫລືບໍ່? ບັງເຫລືອພຣົງປ້າຍດຣອກໍຈະຮອດ ສາຍຕາຂອງຂ້າພະເຈົ້າ ຈັບຈ້ອງໄປຈ້ຳຢູ່ທີ່ປະຕູທາງອອກ ແລະ ຢູ່ໃນທ່າກຽມພ້ອມ,ທັນເປັນການບັງເອີນ ສາຍຕາຂອງຂ້າພະເຈົ້າໄປຕໍ່ກັບສາຍຕາອີກຄູ່ໜຶ່ງ ເຊີງພວມຈ້ອງມອງເບິ່ງຕົວຂອງຂ້າພະເຈົ້າ ຢ່າງບໍ່

ອະວອາຍ ເຈົ້າຂອງໃບຕາຄູ່ນີ້ ນາງເປັນຄົນຮູບຮ່າງ ສູງ ເນື້ອຂາວ ພົມສີທອງ ໃນຕາສີເຫລືອງຄາບສີເງິນ ມີແວວຕາອັນສົດໃສ ເອື້ອນພົມຂອງນາງປ່ອຍຍາວລົງມາຕົ້ງຢູ່ບ່າ ໄຫລ່ປົກເອົາກ້ານຄໍເບື້ອງຫລັງ, ທຸກສ່ວນສັດຂອງນາງ ຖ້າສົມທຽບໃສ່ກັບຄົນໄຈອຣດທົ່ວໆໄປ ຖືວ່ານາງມີຮູບຮ່າງນ້ອຍບາງ ຂ້າພະເຈົ້າຄິດໃນໃຈວ່າ ນາງຄົງຈະບໍ່ແມ່ນຄົນທີ່ເກີດເປີດໃນນະຄອນຫລວງມົດສະກູ ນາງອາດມາຈາກລັດອື່ນ : ຕາດສະແກນ ຫລື ບາກູ ກໍເປັນໄດ້.

ເມື່ອສາຍຕາຂອງຂ້າພະເຈົ້າໄປຕ່ຳກັບ ສາຍຕາ ຂອງນາງຍາມໃດ ນາງເສີຍວາດຍີ້ມນ້ອຍໆໃຫ້ຂ້າພະເຈົ້າ ແລະທຸກວເທື່ອທີ່ສາຍຕາຂະນະກັນ ຂ້າພະເຈົ້າຈະເປັນຝ່າຍຫລົບຫລີກກ່ອນສະເໝີ, ນາງແນມເບິ່ງຂ້າພະເຈົ້າແຕ່ຫົວຈົນສຸດຕີນ ນາງເບິ່ງແລ້ວກໍອົມຍີ້ມຄືກັບວ່າ ນາງມີຄວາມໃນໃຈຢາກບອກໃຫ້ຂ້າພະເຈົ້າຮູ້, ແຕ່ວ່າຂ້າພະເຈົ້າ ແລະ ນາງ ບໍ່ມີໂອກາດຈະໄດ້ຍືນຢູ່ໃກ້ກັນ ຍ້ອນຄວາມຄັບຄາ ໜາແໜ້ນຂອງຜູ້ໂດຍສານ.

ເມໂຕຈອດປ້າຍ ປະຕູຍະອອກ ຂ້າພະເຈົ້າລວນຫົວຜູ້ໂດຍສານອື່ນໆຫລັ່ງອອກ ເພື່ອໄປຕໍ່ເມໂຕອີກສາຍ ໃໝ່, ຍ້ອນການແອອັດຂອງຜູ້ໂດຍສານ ເວລາຍ່າງໄປຖາມ ທາງໃນຮູເມໂຕນັ້ນ ຂ້າພະເຈົ້າຈຶ່ງບໍ່ໄດ້ສັງເກດຄັກແນວ່າເຈົ້າຂອງພົມສີທອງ ດວງຕາທີ່ມີແວວອັນສະເໜ່ຫານັ້ນ ຮ່ວມຢູ່ໃນຂະບວນຜູ້ໂດຍສານນີ້ຫລືບໍ່?

ຂ້າພະເຈົ້າຫລຸບເຂົ້າໃນຕູ້ *ເມໂຕ* *ສາຍໃໝ່ເພື່ອສືບຕໍ່*

ໄປຫາຈຸດໝາຍປາຍທາງ ຂະນະທີ່ພວມຍົກມືຂຶ້ນ ຈັບຮາວຖ່ວງໃນເມໂຕຣ ຂ້າພະເຈົ້າຈົນຕົກຕະລຶງ ເມື່ອເຫຼືອດສາຍຕາໄປຂ້າງໆ.

"ແມ່ນແລ້ວ... ນາງຄືເຈົ້າຂອງຜົມສີທອງທີ່ຢືນ ຈ້ອງມອງກັບເຮົາຫວ່າງກີ້ນີ້.

ຄວາມຮູ້ສຶກນັ້ນໄດ້ບອກຄວາມແນ່ໃຈໃຫ້ກັບຕົວ ເອງ, ນາງຢືນຈັບຮາວຖ່ວງໃກ້ງກັບຂ້າພະເຈົ້າ ເມື່ອນາງຮູ້ສຶກວ່າຂ້າພະເຈົ້າຮູ້ຕົວ ນາງຈຶ່ງອ່ວາຍໜ້າມາສົ່ງຮອຍຍິ້ມ ເປັນການທັກທາຍອີກເທື່ອໃໝ່ ຂ້າພະເຈົ້າຍິ້ມຕອບນາງ ເມື່ອເປັນການບໍ່ເກີເຂີນ.

"ສະບາຍດີ"

ນາງຖາມສະບາຍດີຂ້າພະເຈົ້າກ່ອນ ແລະ ຖາມ ເປັນພາສາລັດເຊຍອີກດ້ວຍ, ຂ້າພະເຈົ້າຕອບຮັບສະບາຍດີແລະຖາມສະບາຍດີນາງຄືນຕາມມາລະຍາດ; ຫລັງຈາກຕ່າງຄົນຕ່າງຖາມສະບາຍດີກັນແລ້ວກໍພາກັນມິດງຽບ ເມໂຕຣ ແລ່ນໄປຕາມລາງຂອງມັນເລື້ອຍໆ ຜູ້ໂດຍສານພາຍໃນຕູ້ນັ້ນ ກໍບໍ່ຫລວງຫລາຍພໍປະມານ ເຮັດໃຫ້ແຕ່ລະຄົນນັ່ງຫລືຢືນໄດ້ ສະບາຍບໍ່ເກະກະ.

ຂ້າພະເຈົ້າ ແລະ ນາງຕ່າງຫລອດເຖິງຜູ້ໂດຍສານ ຄົນອື່ນໆພາຍໃນຕູ້ເມໂຕຣ ຄືກັບວ່າພວມຖືກມົນສະກົດຈິດ ເອົາໄວ້, ເມໂຕຣແລ່ນໄປເລື້ອຍໆ ຂ້າພະເຈົ້າລັກແນມ ເບິ່ງ

ປະຫຼາດວ່າສາຍຕາຂອງນາງຍັງແນມເບິ່ງຂ້າພະ ເຈົ້າ

ເບິ່ງໃນທ່າທີພິນິດພິຈາລະນາຄາຍ

ກັບວ່ານາງເຄີຍຮູ້ຈັກກັບຂ້າພະເຈົ້າມາກ່ອນແລ້ວ!

ເມໂຕຣແລ່ນ ແລະ ຈອດໄປຕາມປ້າຍຂອງມັນໄດ້ ໔ ປ້າຍແລ້ວ ແຕ່ກໍຍັງບໍ່ມີທ່າທີແນວໃດວ່າ ນາງຈະລົງ ປ້າຍນີ້ ຫຼືປ້າຍໜ້າ, ພາຍໃນຕູ້ເມໂຕຣມີດວງໄຟບົດນຶ່ງຈະມີສາຍລົມອ່ອນໆພັດຜ່ານເຂົ້າມາໃນຕູ້ເມໂຕຣ ພອບເອົາກິ່ນຫອມຂອງເຄື່ອງສຳອາງຈາກເສັ້ນຜົມສີທອງຂອງນາງມາຕຳໃສ່ ດັງຂອງຂ້າພະເຈົ້າ, ຜົມສີທອງຂອງນາງທີ່ປ່ອຍຫລານລົງ ປົກກ້ານຄໍນັ້ນ ບາງເວລາສາຍລົມກໍພັດເອົາເສັ້ນຜົມຂອງ ນາງ ປິວມາລູບໄລ້ກັບໃບໜ້າຂອງຂ້າພະເຈົ້າ ຈົນເຮັດໃຫ້ນາງຮູ້ສຶກຄັນ ແລ້ວຍົກມືມາກວດເອົາເສັ້ນຜົມຂອງນາງຄືນໄປພ້ອມກັບສົ່ງຮອຍຍິ້ມອັນຫວານໆ ແສງຕາຂອງນາງບົ່ງບອກ ເຖິງຄວາມຂໍໂທດ; ເມໂຕຣໃກ້ຈະຈອດປ້າຍຕໍ່ໄປແລ້ວ ມີຜູ້ໂດຍສານຄົນໜຶ່ງລຸກຂຶ້ນກຽມຈະອອກ ຂ້າພະເຈົ້າພາຍມື ເປັນການເຊີນໃຫ້ນາງນັ່ງລົງແທນບ່ອນ ແຕ່ນາງກັບແກວ່ງຫົວປະຕິເສດ, ນາງໜັບເຂົ້າມາໃກ້ໆຕົວຂ້າພະເຈົ້າຕື່ມອີກ ກ້າວໜຶ່ງ ພ້ອມກັບຈ້ອງມອງຂ້າພະເຈົ້າຢ່າງບໍ່ພັບຕາ ນາງຍື່ນມືອັນຂາວສວຍ ເລັບຕິບແຕ້ມດ້ວຍສີກຸຫລາຍຄາບເມັດ ເງີນມາແປງກະດຸມເສື້ອປາບໄຕຂອງຂ້າພະເຈົ້າ, ~~ຂ້າພະ~~ ເຈົ້າຄຶດວ່າ ນາງຈະກ່າວຂໍໂທດທີ່ໄດ້ລວງເກີນ ແຕ່ນາງກັບຖາມວ່າ:

"ຂໍໂທດ... ເຈົ້າແມ່ນຄົນມົງໂກນບໍ່?"

ຂ້າພະເຈົ້າຫລຸ້ນລຸກເຄົາ ເພາະນາງຖາມເປັນພາສາຣັດເຊຍ, ເພາະວ່າພາສາຣັດເຊຍນັ້ນເຖິງນາງຈະເວົ້າຈ້າ

ເວົ້າໄວແນວໃດ ນັ້ນກໍບໍ່ກະຕຶກຮູ້ຂ້າພະເຈົ້າເລີຍ, ຈົນໄດ້ແຕ່ຕອນທ້າຍຄຳຖາມ ກໍຟ້າວຕອບອອກໄປໂລດ ເພາະເປັນພາສາອັງກິດແບບນອຍວັດອິກຈຸ້ ໂດຍບໍ່ໄດ້ຄຳນຶງວ່າ ນາງຈະເຂົ້າໃຈຫລືບໍ່.

"ບໍ່, ຂ້ອຍແມ່ນຄົນລາວ"

ພໍແຕ່ໄດ້ຟັງຄຳຕອບປະກົດວ່າດວງຕາທັງຄູ່ ຂອງນາງເບີກກວ້າງຂຶ້ນ ຄືກັບວ່ານາງນອນຄືໃຈທີ່ໄດ້ພົບກັບຄວາມສົມຫວັງອັນໃດອັນໜຶ່ງ.

"ລາວ"

ນາງທວນຄຳຕອບຂອງຂ້າພະເຈົ້າສືບອີກເທື່ອໜຶ່ງເພື່ອຄວາມແນ່ໃຈ, ຂ້າພະເຈົ້າງຶກຫົວຮັບເປັນການຢືນຢັນ ສ່ວນນາງໄດ້ແຕ່ຍິ້ມໆ ຈົນກາຍເປັນຍິ້ມຄ້າງ.

ຈາກນັ້ນ ນາງໄດ້ຖາມເຖິງຄວາມຮູ້ສຶກຂອງຂ້າພະເຈົ້າທີ່ໄດ້ມາເຫັນນະຄອນຫລວງມົດສະກູ, ຂ້າພະເຈົ້າໄດ້ ເລົ່າເຖິງຄວາມຮູ້ສຶກພາກພູມໃຈຂອງຄົນລາວທີ່ໄດ້ມາເຫັນ ຖິ່ນແດນມະຫາປະຕິວັດເດືອນຕຸລາທີ່ຍິ່ງໃຫຍ່, ໄດ້ເຫັນ ຄວາມສີວິໄລຮຸ່ງເຮືອງ ໄດ້ເຫັນການດຳລົງຊີວິດອັນອຸດົມຮັ່ງມີຂອງຊາວໂຊວຽດ ໄດ້ເຫັນຄວາມຖູໝັ້ນອະໜີບພູນຂອງປະຊາຊົນໂຊວຽດ; ການເລົ່າຂອງຂ້າພະເຈົ້າກໍເລົ່າເປັນ ພາສາອັງກິດແບບກະທູກກະຕັກ ຈົນຕົ້ນຈົນປາຍ ມີບາງຄຳ ບາງປະໂຫຍກນາງກໍຊ່ວຍລົ້ມຄືນໃຫ້, ຂ້າພະເຈົ້າຈຶ່ງຮູ້ວ່າ ນາງໄດ້ພາສາອັງກິດລ່ຽນໄຫລດີກວ່າຂ້າພະເຈົ້າຢ່າງທຽບເທົ່າ ບໍ່ຕິດເລີຍ.

"ເຈົ້າຈະອອກປ້າຍໃດ?"

ນາງຖາມພ້ອມກັບສົ່ງຮອຍຍິ້ມ ແລະ ແສງຕາອັນ ໜ້າຮັກແພງ, ແຕ່ຕອນນີ້ນາງປ່ຽນມາຖາມເປັນພາສາ ອັງກິດ ແທນ ເພາະນາງຮູ້ວ່າ ພາສາລັດເຊຍນັ້ນ ຂ້າພະເຈົ້າໄປບໍ່ລອດແລ້ວ.

"ຍັງຢູ່ອີກ ໔ ປ້າຍ"

ຂ້າພະເຈົ້າຕອບ ພ້ອມກັບຊູນິ້ວສີ່ນິ້ວຂຶ້ນໃຫ້ນາງ ເບິ່ງ ນາງແຫງນໜ້າຂຶ້ນອ່ານປ້າຍເມໂຕຣທີ່ຂຽນໄວ້ຂ້າງຕູ້ ເມໂຕຣ ແລ້ວນາງກໍແນມມາເບິ່ງໜ້າຂ້າພະເຈົ້າອີກເທື່ອໜຶ່ງ ພ້ອມກັບງຶກຫົວເບົາໆ.

"ປ້າຍນີ້ຕ້ອງຂ້າມແມ່ນ້ຳມາສະກາວາໄປອີກສອງປ້າຍ"

ນາງອະທິບາຍໃຫ້ຂ້າພະເຈົ້າຮູ້ຕື່ມ ເຖິງທີ່ຕັ້ງຂອງປ້າຍ
2 ດັ່ງກ່າວ.

"ເຈົ້າເດຈະອອກປ້າຍໃດ?"

ຂ້າພະເຈົ້າຍ້ອນຖາມນາງຄືນ ແຕ່ແທນທີ່ນາງ ຈະຕອບຄຳຖາມ ນາງກັບຕັ້ງຄຳຖາມໃໝ່ວ່າ:

"ເຈົ້າຈະໄປຫາໃຜ ມີຄົນລາວຢູ່ແຖວນີ້ບໍ?"

"ມີ, ຂ້ອຍຈະໄປຢາມນັກສຶກສາລາວ"

ພໍສຸດຄຳຕອບຂອງຂ້າພະເຈົ້າ ນາງເຮັດຈີ່ງລີ່ງເບິ່ງຂ້າພະເຈົ້າກົບເກີຍ ຄືກັບວ່ານາງພວມທົບທວນຄວາມ ຈື່ຈຳຂອງນາງຄືນມາ.

"ໂອ! ແມ່ນແລ້ວ ຂ້ອຍເຄີຍເຫັນຄົນລາວຢູ່ແຖວ ເມໂຕຣນີ້ເລື້ອຍໆ"

ນາງຢຸດກືນນ້ຳລາຍອັ້ນກາງຄຳລາວໜຶ່ງ ແລວກໍ ບອກ ຕື່ມວ່າ:

"ເຮືອນພັກຂອງຂ້ອຍຢູ່ແຖວເມໂຕຣປີ້ຄີກັນ"

ເປັນອັນວ່າ ຄຳຖາມຂອງຂ້າພະເຈົ້າຫວ່າງກີ້ນີ້ກໍບໍ່ ຈຳ ເປັນລໍຖ້າຄຳຕອບຕື່ມວ່າ ບ້ານພັກຂອງນາງຢູ່ບ່ອນໃດ ແລະ ນາງຈະອອກເມໂຕຣປ້າຍໃດ.

ສຽງເຕືອນຈາກເມໂຕຣດັງຂຶ້ນ ຜູ້ໂດຍສານຈຳນວນໜຶ່ງ ກຽມຕົວຈະອອກ, ນາງວິກຕໍຣໃຫ້ສັນຍານເປັນການ ເຕືອນ ຂ້າພະເຈົ້າວ່າ ຮອດປ້າຍອອກແລວ; ພວກເຮົາທັງສອງພາ ກັນຄ່ອຍໆເລື່ອນຕົວມາທາງປະຕູທາງອອກ ນໍເມໂຕຣ ຈອດ ປ້າຍ ພວກເຮົາທັງສອງຟ້າວພາກັນຮີບຮ້ອນອອກ ເພື່ອ ໃຫ້ ທັນກັບເວລາ, ຂ້າພະເຈົ້າຍ່າງຮຽງກັບນາງມາຂຶ້ນ ຂັ້ນໄດ ເລື່ອນ ຂະນະທີ່ຍືນຢູ່ຂັ້ນໄດເລື່ອນ ນາງໄດ້ແນະນຳໃຫ້ ຂ້າ ພະເຈົ້າຮູ້ຊື່ຂອງນາງ:

"ຂ້ອຍຊື່ວ່າ ໂອນກາ, ເຈົ້າເອີ້ນຂ້ອຍວ່າ ໂອເລຍ ກໍ ໄດ້"

"ໂອເລຍ"

ຂ້າພະເຈົ້າເອີ້ນຊື່ຂອງນາງຄ່ອຍໆ ນາງວິກຕໍຣຮັບ ຂ້າ ພະເຈົ້າຕອບຂອບໃຈ ແລະ ສະແດງຄວາມດີໃຈທີ່ໄດ້ຮູ້ຈັກຊື່ ສຽງລຽງນາມຂອງນາງ ແລະ ຂ້າພະເຈົ້າກໍໄດ້ບອກຊື່ ຕົນ ເອງໃຫ້ນາງຮູ້.

"ຫໍພັກນັກສຶກສາຢູ່ໄກຈາກຮູເມໂຕຣບໍ?"

ໂອເລຍຖາມຕື່ມ ກ່ອນທີ່ຂັ້ນໄດເລື່ອນຈະພາ ພວກເຮົາ

ຂຶ້ນເທິງໜ້າດິນ.

"ຊີວິດປະຈຳທາງໄປອີກສອງຝ່າຍ"

ຂ້ອຍຕອບນາງ ພ້ອມທັງວິງວອນເປັນການ ເຊື້ອເຊີນ ນາງຍ່າງອອກຂຶ້ນໄດເລື່ອນ.

ຍ້ອນວ່າເວລາຍັງເຊົ້າຢູ່ ອອກຈາກສະຖານີລົດເມໄຕ ແລ້ວ ຂ້າພະເຈົ້າພາໄອເລຍແວະດື່ມກາເຟຄົນລະຈອກເປັນການຮອງທ້ອງ. ໂອກາດນີ້ ໄອເລຍ ໄດ້ບອກຂ້າພະ ເຈົ້າວ່າ ນາງມີຄວາມດີໃຈທີ່ໄດ້ຮູ້ຈັກກັບຄົນລາວ ກໍຄືຕົວຂອງຂ້າພະເຈົ້າເອງ ນາງວ່າ ນາງມີໝູ່ຄູ່ຮັກແພງກັນທີ່ເປັນ ຄົນຕ່າງຈາກຫລາຍຄົນ ໂດຍສະເພາະແມ່ນນັກສຶກສາ. ໄອເລຍ ຕັ້ງບັນຫາສົນໃຈເຖິງຊີວິການຊາວໜຸ່ມລາວ ຂ້າພະເຈົ້າກໍໄດ້ເລົ່າເຖິງການເຄື່ອນໄຫວຕ່າງໆຂອງຂະບວນຊາວໜຸ່ມປະຊາຊົນປະຕິວັດລາວໃຫ້ນາງຟັງ. ໄອເລຍ ໄດ້ຟັງ ນາງກໍຍິ້ມແຍ້ມແຈ່ມໃສ ພ້ອມກັບກ່າວສະໜັບສະໜູນວ່າ ດີຫລາຍໆ.

ພຽງເວລານ້ອຍດຽວທີ່ພົບ ແລະ ຮູ້ຈັກກັນ ຂ້າພະເຈົ້າສັງເກດເຫັນວ່າ ໄອເລຍ ໃຫ້ຄວາມສະໜິດສະໜົມ ແລະ ເປັນກັນເອງຄືກັບວ່າຮູ້ຈັກກັນມາເກົ້າມ້າສິບປີແລ້ວ ໄອເລຍໄດ້ຈວນໃຫ້ຂ້າພະເຈົ້າໄປຢາມເຮືອນຂອງນາງ, ຂ້າພະເຈົ້າຍົກໂມງຂຶ້ນເບິ່ງ ເຫັນວ່າຍັງມີເວລາເຫລືອອີກຕັ້ງ ໔ ຊົ່ວໂມງ ຈຶ່ງຈະເຖິງເວລານັດກັບນັກສຶກສາເອົາໄວ້, ຂ້າພະເຈົ້າຕົກລົງໃຈໄປຢາມເຮືອນໄອເລຍ ເພື່ອສ້າງຄວາມ ລຶ້ງເຄີຍຮັກແພງກັບນາງ.

ເຮືອນພັກຂອງ ໂອເລຍ ຫ່າງຈາກສະຖານີ ເມໂຕຣ ບໍ່ໄກເທົ່າໃດ ນາງຈຶ່ງຊວນຂ້າພະເຈົ້າຍ່າງລົມກັນໄປ ຂ້າພະເຈົ້າຕອບຍິນດີ ເພາະຈະໄດ້ຊົມຄວາມສວຍງາມຂອງ ນະຄອນຫລວງມົດສະກູ ເພາະວ່າການຊົມຄວາມງາມຂອງ ນະຄອນຫລວງໃຫຍ່ງຄືແນວນີ້ ຂີ່ລົດ ຫລືຈະສູ້ຍ່າງ, ໂອເລຍ ພາຂ້າພະເຈົ້າຍ່າງເລາະໄປຕາມແຄມຖະໜົນ ເຊິ່ງ ຮົ່ມລ້ອມໄປດ້ວຍຕຶກສູງທັງສອງຟາກທາງ, ພຽງແຕ່ເວລາ ໑໐ ກວ່ານາທີ ກໍໄປເຖິງເຮືອນພັກຂອງ ໂອເລຍ ນາງພັກຢູ່ຊັ້ນທີ ໓.

ເມື່ອຂຶ້ນໄປເຖິງຫ້ອງໂອເລຍໄດ້ແນະນຳໃຫ້ຂ້າພະເຈົ້າຮູ້ຈັກກັບແມ່ເຖົ້າຄົນໜຶ່ງ ແລະ ເດັກນ້ອຍຜູ້ຊາຍອາຍຸ ປະມານ ໔ ປີ, ຈາກນັ້ນ ໂອເລຍ ໄດ້ເຊີນໃຫ້ຂ້າພະເຈົ້ານັ່ງລົງຫ້ອງຮັບແຂກ. ໂອເລຍ ຟາວປຸງນ້ຳຊາ ແລ້ວຈັດ ແຈງຍົກມາພ້ອມກັບຈານເຂົ້າໜົມ ເພື່ອເປັນການຮັບຕ້ອນອາຄັນຕຸກະຄົນໃຫມ່ຂອງນາງ.

"ແມ່ເຖົ້າຜູ້ນີ້ແມ່ນແມ່ຂອງຂ້ອຍ ແລະ ເດັກນ້ອຍຜູ້ຊາຍກໍແມ່ນລູກຂອງຂ້ອຍ"

ໂອເລຍ ແນະນຳຕື່ມ ພ້ອມກັບຊີ້ມືໄປໃສ່ແມ່ເຖົ້າ ແລະ ເດັກນ້ອຍຜູ້ຊາຍ ເຊິ່ງນັ່ງອ້ອມໂຕະຮັບແຂກນຳກັນ.

"ໂອ! ໜ້າຮັກຫລາຍ"

ຂ້າພະເຈົ້າເວົ້າຂຶ້ນ ພ້ອມກັບຍົກມືໄປລູບຫລັງເດັກນ້ອຍຜູ້ຊາຍທີ່ເປັນລູກຂອງໂອເລຍ.

"ຂ້ອຍແຕ່ງດອງແລ້ວ"

ກໍບໍ່ເຫັນວ່າມັນຈະແປກປະຫລາດອັນໃດ ກັບຄຳ ບອກເລົ່າຂອງໄອເລຍ, ກໍຍ້ອນນາງແຕ່ງດອງແລ້ວນັ້ນ ແຫລະ ນາງຈຶ່ງມີລູກ; ແຕ່ສິ່ງທີ່ຂ້າພະເຈົ້າບໍ່ຢາກເຊື່ອສາຍຕາ ໂຕເອງກໍຄືຕົວຂອງໄອເລຍ ຖ້າຂ້າພະເຈົ້າບໍ່ໄດ້ມາຢາມ ເຖິງເຮືອນກໍຄົງບໍ່ເຊື່ອເດັດຂາດວ່າ ໄອເລຍແຕ່ງດອງແລ້ວແລະມີລູກໜຶ່ງຄົນ ເພາະວ່າຮູບພັນຮູບຮ່າງຂອງໄອເລຍຍັງໜຸ່ມແໜ້ນຄືສາວອາຍຸ ໑໘-໑໙ ປີ; ເມື່ອເຫັນວ່າຂ້າພະ ເຈົ້ານັ່ງນຶກຢູ່ ໄອເລຍ ຈຶ່ງຊວນໃຫ້ດື່ມນ້ຳຊາ ພ້ອມທັງຍົກ ຈານເຂົ້າໜົມຍື່ນໃຫ້ ຂ້າພະເຈົ້າຫຍິບເອົາເຂົ້າໜົມ ໃນຈານພ້ອມກັບກ່າວຂອບໃຈ, ທັງໄອເລຍ ແລະ ຂ້າພະເຈົ້າ ມາກັບຊູບນ້ຳຊາຄົນລະອຶກ ແລ້ວກໍແກະເຂົ້າໜົມໂມ່ນໃສ່ ປາກຄົນລະກ້ອນ.

"ດຽວນີ້ຂ້ອຍໄດ້ຢ່າຮ້າງກັບຜົວຂ້ອຍແລ້ວ"

ຫົວໃຈຂອງຂ້າພະເຈົ້າຕົກວູບລົງໄປໃນກະເພາະ ຂ້າພະເຈົ້າບໍ່ຢາກເຊື່ອຈັກດີ້ວ່າ ຜູ້ຍິງທີ່ສວຍງາມ ແລະ ພຽບພ້ອມໄປດ້ວຍກິລິຍາມາລະຍາດຂອງກຸນລະສະຕີຢ່າງໄອເລຍນີ້ຈະມີຜູ້ຊາຍຄົນໃດໃຈແຂງຄືເພັດຫອບພິກຊາໜີອາຍອຸ່ນຂອງນາງໄປໄດ້!

"ໄດ້ ໔ ປີກວ່າແລ້ວ"

ໄອເລຍກ່າວຢໍ້າເປັນການຢືນຢັນຄວາມຈິງທຸກຢ່າງ ທີ່ນາງບອກ, ຂ້າພະເຈົ້າໂຍກໂຕອອກຈາກພະນັກ ຂອງຊາໂລງ ຈັບເອົາຈອກນ້ຳຊາຈູບເຂົ້າທ້ອງອີກຄັ້ງໜຶ່ງ ໄອເລຍຍິ້ມນ້ອຍໆໃຫ້ຂ້າພະເຈົ້າ ພ້ອມກັບຖາມຂຶ້ນລອຍໆວ່າ:

"ເຈົ້າມັກດື່ມເຫຼົ້າບໍ່?"

ແຕ່ໂອເລຍຄົງຈະຖາມແບບຈອກຮູ້ຫຼາຍກວ່າ ຂ້າພະເຈົ້າແກວ່ງຫົວເປັນການຕອບປະຕິເສດວ່າ ໄຕເອງບໍ່ມັກດື່ມເຫຼົ້າ.

"ດີຫຼາຍ"

ໂອເລຍ ກ່າວຊົມເຊີຍ ຂ້າພະເຈົ້າເອງໄດ້ແຕ່ຍິ້ມແຫ້ງແຫ້ງ.

"ພົວເກົ່າຂອງຂ້ອຍມັກດື່ມເຫຼົ້າຫຼາຍ"

ໂອເລຍບອກກັບຂ້າພະເຈົ້າແບບກົງໄປກົງມາ ຈາກນັ້ນນາງໄດ້ເລົ່າຄືນຊີວິດໃນເວລາຄອງຮັກກັບ ນາງບອກ ວ່າ ນາງຮັກ ແລະ ຊື່ສັດສຸດຈະຫລິດຕໍ່ພົວ ແຕ່ນາງບໍ່ມັກພົວຂອງນາງດື່ມເຫຼົ້າຈົນກາຍເປັນນັກດື່ມຄໍທອງແດງ. ນາງໄດ້ເຕືອນ ແລະ ຫ້າມເຂົາຫຼາຍເທື່ອແລ້ວ ແຕ່ພົວຂອງນາງບໍ່ຍອມປ່ຽນແປງ ໃນທີ່ສຸດເຂົາຈຶ່ງຂໍຢ່າຮ້າງກັບພົວ.

"ດຽວນີ້ດີຫຼາຍ"

"ເຂົາເຊົາດື່ມເຫຼົ້າແລ້ວແມ່ນບໍ່?"

"ຂ້ອຍບໍ່ຮູ້ວ່າພົວເກົ່າຂອງຂ້ອຍເຊົາດື່ມຫລືບໍ່ ແຕ່ສິ່ງ ທີ່ຂ້ອຍວ່າດີຫຼາຍນັ້ນ ແມ່ນຂ້ອຍເຫັນດີນຳແນວທາງ ຂອງລັດຖະບານທີ່ຈຳກັດບໍ່ໃຫ້ຜະລິດເຫຼົ້າ ແລະ ບໍ່ໃຫ້ຂາຍ ເຫຼົ້າທົ່ວໄປ".

ໂອເລຍ ຢຸດເລົ່າຊົ່ວຄາວ ຍົກຈອກນ້ຳຊາຂຶ້ນມາ ດື່ມເປັນການຂັ້ນເວລາ.

"ດຽວນີ້ຜູ້ຊາຍດີຫຼາຍ ໂດຍສະເພາະຊາວໜຸ່ມ"

ຂ້າພະເຈົ້າວຶກຫົວຮັບເປັນການສະແດງຄວາມ ເຫັນດີ-ເຫັນພ້ອມກັບໂອເລຍ ທີ່ສະໜັບສະໜູນຕໍ່ແນວທາງຂອງລັດຖະບານໄອວຣດ.

ເຫລົ້າໃຫ້ໂທດຫລາຍກວ່າໃຫ້ຄຸນ ຄົນທີ່ດື່ມເຫລົ້າຫລາຍ ກາຍເປັນຄົນອ່ອນແອ ບໍ່ເຂັ້ມແຂງ ຂາດຄວາມຮັບຜິດ ຊອບ ເຫລົ້າບໍ່ໄດ້ຊ່ວຍໃຫ້ຄົນ ຫລີລ້ຽງຄົນກີຂັ້ນ ມີແຕ່ສ້າງ ຄວາມ ເສື່ອມເສຍທັງສຸຂະພາບ ແລະ ວຽກງານ"

ໂອເລຍສາທະຍາຍມາຢ່າງຍືດຍາວ ນາງຢຸດ ບຶດໜຶ່ງ ພ້ອມກັບແນມມາເບິ່ງໜ້າຂ້າພະເຈົ້າເປັນເຊີງຂໍໂທດ ໃນ ຖານະທີ່ຂ້າພະເຈົ້າເປັນບຸລຸດເພດຄົນໜຶ່ງ.

"ຜູ້ຍິງທີ່ລຳຄານໃຈຫລາຍທີ່ສຸດ ກໍຄືຜູ້ຍິງທີ່ມີຜົວຂີ້ເຫຼົ້າ"

ຂ້າພະເຈົ້າໄດ້ແຕ່ນັ່ງຍິ້ມ ຍອມຮັບຕໍ່ຄວາມເປັນຈິງທີ່ໂອ ເລຍຍົກຂຶ້ນມາກ່າວ.

ຈາກນັ້ນ ໂອເລຍ ໄດ້ເລົ່າເຖິງຊີວິດການເປັນຢູ່ ຂອງ ນາງ ແລະ ລູກ ນາງບອກວ່າ ຄວາມຈິງຫ້ອງທີ່ນາງ ພັກຢູ່ ນີ້ແມ່ນສ່ວນແບ່ງຂອງນາງກັບລູກສອງຄົນ ສ່ວນແມ່ນັ້ນ ພຽງ ແຕ່ມາຢ້ຽມຢາມຊົ່ວຄາວ, ຫ້ອງນີ້ແມ່ນໄດ້ຮັບຈາກການແບ່ງ ປັນຕາມນະໂຍບາຍຂອງລັດຖະບານທີ່ມີຕໍ່ພະນັກງານ ກຳມະ ກອນ ຕົວຂອງນາງກໍຄືຜູ້ອື່ນໆ ທີ່ຈະໄດ້ຮັບ. ນາງເອງເປັນ ກຳມະກອນຢູ່ໂຮງງານແຫ່ງໜຶ່ງ; ຊີວິດການເປັນຢູ່ ຂອງ ນາງ ແລະ ລູກ ແມ່ນໄດ້ຮັບການເອົາໃຈໃສ່ເບິ່ງແຍງເປັນ ຢ່າງດີຈາກການຈັດຕັ້ງ ລູກຂອງນາງກໍໄດ້ເຂົ້າຮຽນ ໜັງສື ຢູ່ໂຮງຮຽນອະນຸບານ.

ເວົ້າແທ້ຫ້ອງຢູ່ຂອງໄອເລຍ ກໍພໍເໝາະພໍດີອີ່ຫລີ ສຳຫລັບນາງ ແລະ ລູກ ຄືມີຫ້ອງນອນ ໑ ຫ້ອງ, ຫ້ອງ ຮັບແຂກ ໑ ຫ້ອງ, ຫ້ອງຄົວ ໑ ຫ້ອງ ແລະ ອັນເປັນຫ້ອງນ້ຳ ໑ ຫ້ອງຂ້າງໆຫ້ອງຄົວ, ແຕ່ອັນພິເສດແມ່ນໄອເລຍ ເປັນຜູ້ຍິງທີ່ເອົາຈິງເອົາຈັງໃນຄວາມເປັນລະບຽບຈຽບງາມ ນາງຈຶ່ງມີການຕົບແຕ່ງ ແລະ ຈັດວາງເຄື່ອງຂອງຕ່າງໆພາຍໃນຫ້ອງໃຫ້ເປັນລະບຽບສະອາດງາມຕາ ດຶງດູດຄວາມ ສົນໃຈຕໍ່ອາຄັນຕຸກະຜູ້ໄປຢ້ຽມຢາມ; ຂ້າພະເຈົ້າຍົກໂມງຂຶ້ນ ເບິ່ງອີກເທື່ອໜຶ່ງເວລາເກືອບ ໑໑ ໂມງແລ້ວ ຈຶ່ງຈັບມື ອຳລາໄອເລຍ, ແມ່ເຖົ້າ ແລະ ລູກຊາຍຂອງໄອເລຍ ເພື່ອໄປຢາມນັກສຶກສາຕາມທີ່ໄດ້ນັດໝາຍເອົາໄວ້.

"ລາກ່ອນ"

"ໂຊກດີ ພົບກັນໃໝ່"

ພຽງແຕ່ພົບໃນເວລາອັນສັ້ນໆ ຂ້າພະເຈົ້າກໍໄດ້ຮູ້ຈັກກັບຊີວິດຈິງຂອງກຳມະກອນຄົນໜຶ່ງ ທີ່ມີຊີວິດການເປັນຢູ່ທີ່ ອົບອຸ່ນ ໄດ້ຮູ້ຈັກກັບສ່ວນເລິກຂອງຕົວອົກຜູ້ຍິງ ທີ່ມີຜົວເປັນ ນັກຄົນ, ພາບພົດທັງໝົດ ເຮັດໃຫ້ຂ້າພະເຈົ້າຍ້ອນ ຫວນ ຄິດເຖິງປະເທດຊາດທີ່ແສນຮັກ ຂ້າພະເຈົ້າຫລັບຕາ ວາດພາບຄືນພຽງແຕ່ເວລາ ໑໐ ກວ່າປີຜ່ານມາ ພາຍຫລັງ ປະເທດຊາດໄດ້ຮັບການປົດປ່ອຍແລ້ວ ພັກ, ລັດ ກໍໄດ້ເອົາ ໃຈໃສ່ຕໍ່ການສ້າງສາພັດທະນາ, ຊີວິດການເປັນຢູ່ຂອງປະຊາ ຊົນລາວເວົ້າລວມ ພວມຢູ່ໃນໄລຍະປັບປຸງໃຫ້ດີຂຶ້ນເທື່ອລະກ້າວອີກບໍ່ດົນ ຊີວິດການເປັນຢູ່ຂອງພະນັກງານ ກຳມະກອນລາວ

ກໍຈະໄດ້ຊົມໃຊ້ຫມາກຜົນຂອງການຜະລິດ ຄືກັບຊີວິດຂອງໂອເລຍ ທີ່ໄດ້ຮັບໃນເວລານີ້.

ຈາກມື້ນັ້ນເຖິງມື້ນີ້ ເວລາໄດ້ລ່ວງເລີຍໄປແລ້ວ ເກືອບປີກວ່າ ຂ້າພະເຈົ້າຍັງບໍ່ຮູ້ວ່າ ໂອເລຍ ໄດ້ແຕ່ງດອງ ເທື່ອໃຫມ່ແລ້ວຫລືຍັງ ແຕ່ສິ່ງທີ່ຂ້າພະເຈົ້າຫວັງ ແລະ ເຊື່ອຫມັ້ນໃນຕົວຂອງໂອເລຍ ກໍຄືເດັດຂາດ ໂອເລຍຈະບໍ່ຍອມ ຂອດຮັກກັບຊາຍຫນຸ່ມຜູ້ຕົກເປັນທາດຂອງສຸລາ, ຄົນຮັກໃຫມ່ຂອງໂອເລຍຕ້ອງແມ່ນຊາຍຫນຸ່ມຜູ້ພຽບພ້ອມໄປດ້ວຍຄຸນສົມບັດ ມີຄວາມຮູ້ ຄວາມສາມາດ ມີວຸດທິການສູງ ແລະ ສິ່ງ ສຳຄັນກໍຄືເປັນຜູ້ເດີນສວນທາງກັບຄວາມມຶນເມົາທັງຫລາຍທັງປວງຄວາມຮັກຄັ້ງໃຫມ່ຂອງໂອເລຍຄົງເປັນຄວາມຮັກຄັ້ງສຸດທ້າຍແລະ ອະມະຕະ ເຕັມປ່ຽມໄປດ້ວຍຄວາມສຸກສົມຫວັງ ສົດຊື່ນແຈ່ມໃສ ພ້ອມກັບກ້າວເດີນໄປຕາມຈັງຫວະຂອງ ຍຸກສະໄຫມ.

# ວງພະບາງທີ່ຮັກ



ໂດຍ ດວງໄຊ ຫຼວງພະສີ



ວັນພະຫັດ ທີ ໗/໒/ ໑໙໘໔
ທີ່ເຮືອນຕຶກການບິນພາຍໃນປະເທດ,
ນະຫ້ອງພັກລໍຖ້າຂອງຜູ້ໂດຍສານ
ວຽງຈັນ-ຫລວງພະບາງ.

ຫລັງຈາກແຈ້ງໃບເດີນທາງ ແລະ ຜ່ານການ ກວດກາຂອງເຈົ້າໜ້າທີ່ກວດຄົນແລ້ວ.

ຂ້ອຍຍ່າງມາວາງກະເປົ໋າ ແລ້ວນັ່ງລົງມ້າຍາວ ເພື່ອລໍເວລາທີ່ຈະອອກເດີນທາງ ຂ້ອຍຄິດໝຸ່ນຢູ່ໃນໃຈວ່າ "ຫຼວງພະບາງບ່ອນທີ່ຂ້ອຍໄດ້ເກີດຢູ່ທີ່ນັ້ນ ແລະ ໄດ້ພັດພາກ ໄປຫລາຍປີ ໃນບໍ່ເທົ່າໃດຊົ່ວໂມງທາງໜ້ານີ້ ຂ້ອຍກໍຈະໄດ້ໄປເຫັນແລ້ວ" ຂ້ອຍນຶກຝັນຫວານຢູ່ແນວນັ້ນ.

ເມື່ອຜູ້ໂດຍສານທະຍອຍກັນເຂົ້າມາພາຍໃນຫ້ອງ ແລະ ສາຍຕາຂອງຂ້ອຍໄປປະສົບເຂົ້າກັບສາວນາງໜຶ່ງພອນພາຍ ຊິ່ວຍ່າງເຂົ້າມາ, ເຮັດໃຫ້ຂ້ອຍຈ້ອງເບິ່ງນາງ, ຈ້ອງແລ້ວຈ້ອງອີກ... "ເປັນໄປໄດ້ບໍ່? ບໍ່! ເວລາຜ່ານໄປ ຕັ້ງເກືອບຊາວປີແລ້ວ ບໍ່ອາດເປັນຄືແນວນັ້ນໄດ້ອີກ, ບໍ່... ? ບໍ່!..."

ພໍດີມີສຽງຂອງຜູ້ຍິງປະກາດຂຶ້ນວ່າ:

"ທ່ານຜູ້ໂດຍສານຫລວງພະບາງໂປດຊາບ!

ຂໍໃຫ້ທຸກທ່ານກຽມຕົວອອກສູ່ເດີ່ນ ເພາະຍົນຈະໄດ້ອອກເດີນທາງແລ້ວ"

ເວລາບໍ່ມີສຳຫລັບຂ້ອຍອີກແລ້ວ ທຸກບ່ອນນັ່ງໃນຍົນອານ ໒໔ ເຕັມໄປແຕ່ຜູ້ໂດຍສານ, ຊິ່ງວາກໜ້າງວາກຫລັງຈອກ

ຫາ ກໍເຫັນວ່າເປັນການເສຍມາລະຍາດເກີນໄປ ເລີຍ ບໍ່ຮູ້ວ່ານາງຜູ້ນັ້ນນັ່ງຢູ່ທີ່ໃດ.

໓໔ ນາທີຕໍ່ມາ...

ພໍຂ້ອຍລົງອອກຈາກຍົນທີ່ເດີ່ນບິນຫລວງພະບາງກໍ່ບໍ່ເຫັນນາງອີກ.

ແລວນັ້ນ ຂ້ອຍຈຶ່ງຄິດຢາກລືມຄວາມຫລັງທີ່ມີການ ພົບພົນກັບຕົວອັກສອນ "ຫລວງພະບາງ" ແຕ່ກໍລືມບໍ່ລົງ ເພາະເວລານີ້ຂ້ອຍພວມຍ່າງກິນອາກາດໄປຕາມທາງຕົວ ເມືອງຫລວງພະບາງ ບໍ່ຈັກຄິດຫຍັງຕໍ່ຄິດຫຍັງ ຈົນມາຮອດ ກາງອິວນຳຄານ ແຕ່ເວລາໃດບໍ່ຮູ້ເນື່ອ.

ເຫັນຜູ້ທີ່ພວມຍ່າງສວນທາງຂ້າມຂົວມາຫາງຂ້ອຍ ນັ້ນແມ່ນຜູ້ຍິງທີ່ຫາກໍ່ຂຶ້ນມາຈາກການລົງອາບນ້ຳຄານ:

"ຂໍໂທດເຫາະນາງ"

ຂ້ອຍປ່ອຍສຽງຖາມອອກໄປຢ່າງຍັງບໍ່ທັນຕັ້ງໃຈໄວ້ກ່ອນ ພໍແຕ່ເບິ່ງໜ້າຄັກງແລວ ຮູ້ວ່າແມ່ນຄົນດຽວກັບຜູ້ທີ່ ເຫັນ ຢູ່ເດີ່ນບິນວັດໄຕ ກໍຟ້າວເອີ່ຍຖາມໂລດ, ນາງຂານຕອບວ່າ:

"ຈ້າວ, ອາວມີວຽກຫຍັງນໍ?"

ນາງຫັງຖາມຄືນທັງເອົາມືແປງແພຕຸ້ມໃຫ້ນາປົກ ທີ່ໜ້າອົກຕື່ມ "ສົມຄວນແລ້ວທີ່ພວກນາງອາຍຸ ໑໓-໑໘ ຈະ ຕ້ອງເອີ້ນຂ້ອຍວ່າອາວຫລືລຸງ" ຂ້ອຍຄິດ, ທັງເປັນການບອກໃຫ້ຕົວເອງຮູ້ສຶກຕໍ່ສັງຂານຕົວເອງວ່າ "ບໍ່ແມ່ນວ່າເວລາໃດ ກໍ່ໜຸ່ມເລີຍໆ ທັ້ງງອາຍຸເວລານີ້ກໍເກີນເລກສີ່ໄປແລວ".

"ບ້ານຫລານອາດຈະຢູ່ແຖວນີ້ບໍ?"

"ຈ້າວ"

"ຂ້າອາວຢາກຂໍຮູ້ຈັກເຮືອນຊານບ້ານຊ່ອງ ພໍ່ແມ່ ຂອງຫລານຊິໄດ້ບໍ່?"

"ດ້ວຍຄວາມຍິນດີຕ້ອນຮັບສະເໝີ ຂ້າອາວບໍ່ລັງກຽດ"

"ແຕ່..."

ນາງຍິ້ມໃຫ້ຂ້ອຍ ລັກສະນະເຈື້ອເຈີນ ແລ້ວຍ່າງ ອອກໜ້າພາທາງທັນທີ:

"ພໍ່ຂອງຫລານລົງໄປວຽງຈັນໄດ້ສອງທິດແລ້ວ"

ນາງບອກໃຫ້ຂ້ອຍຮູ້ໃນເວລາກ້າວເຂົ້າປະຕູຮົ້ວບ້ານ :

"ກະຈັ້ນຢູ່ເຮືອນກໍ່ມີແຕ່ແມ່ກັບລູກໆ?"

"ບໍ່ມີລູກໆຄືອາວຄິດດອກ ແມ່ກັບພໍ່ມີແຕ່ຫລານ ຄົນດຽວເປັນລູກ"

ພຽງເທົ່ານັ້ນຂ້ອຍກໍ່ຮູ້ໂລດວ່າ "ນາງອາດເປັນລູກ ສາວດຽວຂອງຄອບຄົວນີ້"

ນາງຟ້າວແລ່ນຂຶ້ນຂັ້ນໄດຕາມນິໄສຂອງສາວນ້ອຍທີ່ບໍ່ທັນຮູ້ຫຍັງ ປາກກໍ່ຮ້ອງຫາແມ່ເອີກໆ:

"ແມ່, ແມ່ຢູ່ບໍ່, ມີແຂກມາຢ້ຽມ?"

ຍິງໄວສາມສິບກວ່າປີ ຮູບຮ່າງສູງຂາວຄີ້ວກົມຍ່າງອອກມາຈາກເຮືອນຄົວ ໃນເວລາທີ່ຂ້ອຍພວມກ້າວຂຶ້ນມາຮອດຫົວຂັ້ນໄດພໍດີ:

"ສະ...ບາຍ..."

ຂ້ອຍບໍ່ສາມາດເວົ້າຫຍັງຕໍ່ໄປໄດ້ອີກ ແລະ ນາງ ເຈົ້າຂອງເຮືອນກໍຢຸດຢືນນິ້ງເຂັ່ງຕົວແຂງຢູ່ກັບທີ່ ເມື່ອສາຍ ຕາຂອງຂ້ອຍ ແລະ ຂອງນາງປະສານເຂົ້າຫາກັນ.

ຕ່າງຄົນຕ່າງຢືນນິ້ງເໝືອນຄົນຖືກສາບໃຫ້ກາຍເປັນຫີນ

ໄປແລ້ວ ປະປ່ອຍໃຫ້ນາງຜູ້ເປັນລູກສາວຈ້ອງເບິ່ງ ດ້ວຍຄວາມແປກໃຈ.

ສີໜ້າຂອງຍິງເຈົ້າຂອງເຮືອນຊືງລືງແບບຂະນາ ຂ້ອຍກ້າວມາທາງໜ້າອີກກ້າວໜຶ່ງ, ແລ້ວຖາມ:

"ສົດຕີແມ່ນບໍ່?"

ຂ້ອຍຮ້ອງຖາມນາງເຄິ່ງແຮງເຄິ່ງຄ່ອຍດ້ວຍຫົວໃຈ ຕື່ນເຕັ້ນຢ່າງບອກບໍ່ຖືກ ແລ້ວຖາມຢ້ຳຕື່ມອີກ:

"ນ້ອງຄືສົດຕີແມ່ນບໍ່?"

ນາງເຈົ້າຂອງເຮືອນບໍ່ຕອບ ກົ້ມໜ້າລົງແລ້ວ ອ່ວາຍໜ້າໄປທາງອື່ນ.

"ບໍ່, ເປັນໄປບໍ່ໄດ້ເດັດຂາດ"

ນາງຟ້າວແລ່ນເຂົ້າໃນຫ້ອງນອນ ພ້ອມກັບອັດຕູໃສ່ກອນມີແຕ່ສຽງສະອື້ນທີ່ນທວງເທົ່ານັ້ນລຸດລອດອອກມາ.

ຂ້ອຍກໍໄດ້ແຕ່ເຮັດໜ້າເສົ້າ ຫັນໄປເບິ່ງສາວນ້ອຍ ທີ່ນອນຈ້ອງສາຍຕາມາໃສ່ຂ້ອຍຢ່າງບໍ່ພັບ ຄືວ່າພວນຕໍ່ວ່າ ຕໍ່ຂານແນວໃດແນວໜຶ່ງທີ່ຂ້ອຍໄດ້ເຮັດໃຫ້ແມ່ຂອງລາວມີ ສະພາບເປັນຄວາມເສົ້າຄືແນວນັ້ນ.

ຂ້ອຍພະຍາຍາມຮ້ອງບອກໃຫ້ສົດຕີໄຂປະຕູອອກມາເວົ້າລົມກັນ ແຕ່ນາງບໍ່ຍອມ ຍິ່ງຮ້ອງຂໍກໍຍິ່ງໄດ້ຍິນສຽງ ສະອື້ນຕອບດັງແຮງຂຶ້ນຈົນຮຸກໃຈ:

"ອາວກັບເມືອກອນເທາະ, ຫລານວ່າ"

ນາງສາວຄົນນັ້ນຍ່າງເຂົ້າມາໃກ້ຂ້ອຍແລ້ວບອກດ້ວຍໃບໜ້າເຄັ່ງງ ແລະ ດວງຕາແດງງ ຄືຄົນພວມອິດກັນ ແລະ

ຝືນຕໍ່ສິ່ງທີ່ມັນພອມສຽງດສີກັບຢູ່ໃນຫົວໃຈ:

"ແຕ່, ອາວຕ້ອງການພົບ..."

"ເອົາໄວ້ໂອກາດໜ້າຈາເຫາະອາວ ຢ່າຫາວ່າຫລານໄລ່ເລີຍ ຫລານພຽງແຕ່ຂໍຮ້ອງ"

ຂ້ອຍງຶກຫົວຊ້າງ ຫັນໄປທາງຝາທີ່ມີສຽງສະອື້ນ ລອດອອກມາ ແລ້ວຫັນມາຈ້ອງສາຍຕາເບິ່ງຍິງສາວອີກເທື່ອໜຶ່ງກ່ອນຈະລົງຈາກເຮືອນໄປ:

"ບອກກັບແມ່ຂອງຫລານແດ່ວ່າ ແລ້ວອາວຈະກັບມາອີກເພາະອາວມີເລື່ອງຢາກລົມນຳ"

໖

ທີ່ໂຮງແຮມ ພູສີ ...

ເຖິງວ່າ ໄຟຟ້າຈະດັບໄປແລ້ວ ແຕ່ຂ້ອຍຍັງນອນ ບໍ່ຫລັບເລີຍ ພິກໄປປິ້ນມາຢູ່ຄົນດຽວຄືແນວນັ້ນ ເພາະບໍ່ຄິດວ່າເຫດການຈາກຊີວິດຂອງຂ້ອຍທີ່ມັນກາຍເລີຍມາເກືອບ ໖໐ ປີແລ້ວນັ້ນຈະຫວນຢອນຄືນມາພົບອີກ ເພາະນັ້ນມັນໝາຍເຖິງນ້ຳຕາ ແລະ ຊີວິດຈົນເກືອບຈະເອົາຕົວບໍ່ລອດ.

... ປີ ໑໙໔໔ - ໑໙໔໕ ຈາກການເລົ່າຂອງພໍ່.

ໃນເວລາສະພາບການຢູ່ລາວພອມ ສັບສົນ ອົນລະມ່ານຈາກໄພສົງຄາມໂລກຄັ້ງທີສອງ ເຊິ່ງພວກລ່າເມືອງຂຶ້ນ ຝະລັ່ງໄດ້ກັບຄືນເຂົ້າມາລາວອີກເປັນເທື່ອສອງ.

ການຂ້າຟັນລັນແທງກັນປານຜັກປານປາ ເຮັດໃຫ້ ຜູ້ຄົນລົ້ມຕາຍເກືອນກາດ ເລືອດຂອງຄົນລາວແດງໄປທົ່ວ ຈົນແມ່

ນ້ຳຂອງຈິ່ງກາຍເປັນສາຍເລືອດ.

ທ້າວຈັນເພັງ ໄດ້ຖືກແຕ່ງຕັ້ງໃຫ້ເປັນທຳມະໂລງ ຮັກສາບືກໄທດການເມືອງ ທີ່ພວກລ່າເມືອງຂຶ້ນຝະລັ່ງຈັບ ເອົາມາຂັງໄວ້ຈົນລົ້ນຄຸກທີ່ "ສິງກະໂລກ" ແລ້ວພວກມັນ ກໍນຳອອກໄປຍິງເປົ້າລົງນ້ຳຂອງບໍ່ເວັ້ນແຕ່ລະວັນ:

"ປິດຈຳນວນສິບຄົນນີ້ໄວ້ໃຫ້ແໜ້ນໆ ມື້ອື່ນເຈົ້າ ແປດໂມງເອົາໄປຍິງເປົ້າ!"

ທະຫານຝະລັ່ງບັກນັ້ນບອກດັ່ງສັ່ງ ແລ້ວກໍຍ່າງອອກຈາກປະຕູຄຸກໄປ.

ໜຶ່ງໃນຈຳນວນສິບນັກໂທດນັ້ນ ຕົວເຂົ່າອ່ອນ ໄຍບລົງຕັ້ງຮ້ອງໄຫ້ ຫົງອອນວອນ ຍ້ອນວ່າໄດ້ຮູ້ກັບທ້າວຈັນເພັງມາກ່ອນ:

"ຊ່ວຍແດ່ທ້ອນ ຊ່ວຍເຂົາແດ່ທ້ອນຈັນເພັງ, ຊິປະ ໃຫ້ເຂົາຕາຍຕໍ່ໜ້າຕໍ່ຕາຈັ້ນບໍ ເຂົາໃຫ້ສັນຍາວ່າ...ຕະຫລອດຈົ່ວຊີວິດ ເຂົາຈະຂໍເປັນໜີ້ບຸນຄຸນຂອງໄຕຢ່າງບໍ່ມີວັນ ສຸດສິ້ນ"

ເລື່ອງນີ້ ທ້າວຈັນເພັງໄດ້ຄິດອ່ານມາແຕ່ກ່ອນແລ້ວ ວ່າຈະຫາວິທີໃດ ເພື່ອຊ່ວຍຊີວິດຂອງຄົນລາວຫຼຸດລອດອອກຈາກປາຍກະບອກປືນຂອງຄົນຕ່າງຊາດນີ້ໄດ້.

ໃນທີ່ສຸດ, ຄືນນັ້ນ ທ້າວຈັນເພັງຕັດສິນໃຈໄຂປະຕູ ຄຸກນຳພານັກໂທດລົງແພລ່ອງຕາມນ້ຳຂອງມາເຊີງວຽງຈັນ.

ກ່ອນຈະແຍກຍ້າຍກັນ ເພື່ອເອົາຕົວລອດໄປຕາມ ເສັ້ນທາງໃຜ ເສັ້ນທາງລາວນັ້ນ ທ້າວປະເສີດເຂົ້າມາກອດສຽວ

ຈັນເພັງໄວ້ແໜ້ນ ແລ້ວວ່າ:

"ເຮົາສະບານວ່າຈະຮັກສາສັນຍາທີ່ໃຫ້ໄວ້ນີ້ຕະຫລອດຊີວິດ ເວລານີ້ຕ່າງຄົນຕ່າງກໍ່ຫລົບຫລີກໄປຊ່ອນດາວກ່ອນ ເມື່ອສະພາບຊຸມຊົນແລ້ວເຮົາຈິ່ງພົບກັນໃໝ່ ສິ່ງທີ່ເຮົາ ກັບໂຕຈະເວົ້າກັນຄືນກໍຄື ຖ້າເຮົາມີລູກເປັນຜູ້ຍິງ ແລະ ໂຕມີລູກເປັນຊາຍ ພວກເຮົາຈະໃຫ້ເຂົາເອົາກັນ ເພື່ອເຮັດ ໃຫ້ຄຳໝັ້ນສັນຍານີ້ໝັ້ນຄົງຕະຫລອດໄປ"

ເປັນດັ່ງໄດ້ເວົ້າກັນໄວ້ແທ້...

ພໍ່ຈັນເພັງ ແລະ ແມ່ຄຳຕັນ ໄດ້ໃຫ້ກຳເນີດຂ້ອຍ ອອກມາເປັນຊາຍ ແລະ ພໍ່ປະເສີດກໍໃຫ້ກຳເນີດນາງສັດຕີ ອອກມາເຊັ່ນກັນ.

ເມື່ອສະຖານະການບໍ່ມີຫຍັງຄືຮ້າຍພໍປານໃດແລ້ວ ພໍ່ຈັນເພັງ ກັບພໍ່ປະເສີດ ກໍ່ຜູກຂໍ່ຕໍ່ແຂນໃຫ້ຂ້ອຍກັບນາງສັດຕີເພື່ອເປັນສັນຍາລັກໝັ້ນໝາຍໄວ້ຕໍ່ກັນ ນອກຈາກຄວາມຕາຍເທົ່ານັ້ນທີ່ສາມາດພັດພາກພວກຂ້ອຍທັງສອງອອກຈາກກັນໄດ້.

ແຕ່, ເໝືອນລາງສັງຫອນບອກໃຫ້ຮູ້ລ່ວງໜ້າ.

ການໝັ້ນໝາຍໃຫ້ແອນ້ອຍທັງຄູ່ທີ່ມີອາຍຸພຽງຂວບປາຍນັ້ນ ຜ່ານໄປບໍ່ພໍເທົ່າໃດ.

ພໍ່ຈັນເພັງຂອງຂ້ອຍກໍຖືກທະຫານຝະລັ່ງມາຈັບເອົາ ໄປໃສ່ຄຸກດ້ວຍຂໍ້ຫາທີ່ວ່າ:

"ເປັນເຈົ້າພະນັກງານ ແຫກຄຸກພານັກໂທດໂຕນໜີ"

ພໍ່ຖືກທະຫານຝະລັ່ງຂ້ຽນຕີຢ່າງທຸກທໍລະມານເກືອບ ຊີເອົາຊີວິດບໍ່ລອດ ພວກມັນຕັ້ງໃຈຈະເອົາພໍ່ຈັນເພັງໄປ ຍິງ

ເປົ້າ ແຕ່ຍ້ອນການຮ້ອງໄຫ້ອ້ອນວອນຂອງຜູ້ເປັນແມ່ຂ້ອຍທັງເອົາເຮືອນຊານບ້ານຊ່ອງ ດິນໄຮ່ດິນນາໄປຮັບປະກັນ ໂທດປະຫານຈຶ່ງລຸດຜ່ອນລົງແດ.

ແລະ ເວລາຄຽວກັນ ນໍ່ປະເສີດຈ່ຳມັດຖືກແຕ່ງຕັ້ງ ໃຫ້ຂຶ້ນເປັນອາດຍາເຈົ້າເມືອງ ແມ່ຄຳຕັນຈຶ່ງແລ່ນມາຫາ ເພື່ອຈະໄດ້ຊ່ວຍໃຫ້ຜູ້ເປັນຜົວຫລຸດພົ້ນອອກຈາກຄຸກ.

"ເສຍໃຈນຳເດີແມ່ຄຳຕັນ ຈັ້ນຕຳແໜ່ງຂອງຂ້ອຍບໍ່ສາມາດຊ່ວຍຫຍັງທ້າວຈັນເມັງໄດ້ດອກ"

ແທນທີ່ອາດຍາປະເສີດຈິເວົ້າວ່າ: "ສ່ຽວຈັນເມັງ" ຄືແຕ່ກ່ອນ ມາເວລານີ້ຈ່ຳມັດເວົ້າວ່າ "ທ້າວຈັນເມັງ" ເປັນຄວາມເວົ້າທີ່ສະແດງໃຫ້ເຫັນຄວາມຫ່າງໄກ ແລະ ຕ່າງຄົນຕ່າງພວມຢືນຢູ່ຄົນລະຂອບຂັ້ນຂອງຈັ້ນຄົນໄປແລ້ວ.

ມີແຕ່ສຽງສະອື້ນ ແລະ ນ້ຳຕາທີ່ແມ່ຄຳຕັນໄດ້ຮັບ ຈາກການຊ່ວຍເຫລືອ "ອະດີດນໍ່ສ່ຽວ" ກັບຄືນມາ ແລະ ນັ້ນ ກໍ່ໝາຍຄວາມວ່າ...ຊະຕາກຳຂອງທ້າວຈັນເມັງກໍ່ຕ້ອງປ່ອຍໄປເປວນັ້ນ ໂດຍບໍ່ມີຄຳທີ່ວ່າ: "ຄຸນທີ່ເຄີຍທຳມາ" ອັນໃດ, ຈຳກຸໃດ? ບໍ່ມີເຂົ້າມາຊ່ວຍເຫລືອເລີຍ.

໓

ວັນເວລາໄດ້ຜ່ານໄປ ໑໘ ປີ...

ໃນເວລາທີ່ຂ້ອຍພວມຮຽນໜັງສືຢູ່ໂຮງຮຽນວິທະຍາໄລສ້າງຄູດົງໂດກປີທີສາມ.

ແລະ ໃນເວລາສະຖານະການທາງທະຫານ ແລະການ

ເມື່ອຢູ່ໃນຕົວເມືອງວຽງຈັນພວມສັບສົນວຸ້ນວາຍ ຍ້ອນ ຈັກກະພັດອາເມລິກາ ແລະ ພວກປະຕິການຂາຍຊາດ ພວມປີ້ນຂຶ້ນໄດ້ກໍ່ສົງຄາມໜັກມືຂຶ້ນຢູ່ລາວ ກະແສຟອງແຫ່ງການປະຕິວັດໄດ້ພຸ່ງຂຶ້ນສູ່ລະດັບສູງ ພາຍໃຕ້ການນຳພາຂອງການປະຕິວັດລາວ.

ເພື່ອສູ້ຢັນກັບຂະບວນການປະຕິວັດດັ່ງກ່າວ ອາເມລິກາ ແລະ ພວກປະຕິການຂາຍຊາດຈຶ່ງອອກແຮງຈັບກຸມເອົາຊາວໜຸ່ມ ນັກຮຽນ ນັກສຶກສາ ຕະຫລອດຮອດຄູບາຢູ່ວັດຢູ່ວາເພື່ອເອົາໄປເປັນທະຫານໃຫ້ແກ່ພວກມັນ.

ຂ້ອຍຖືກພວກທະຫານໄລ່ກວາດມາແຕ່ດົງໂດກ ຈຶ່ງຕ້ອງແລ່ນຫົວຊຸກຫົວຊຸນເຂົ້າໃນເມືອງ ຈຸດແລກທີ່ຂ້ອຍຈະໄປ ກໍຄືເຮືອນຂອງສັດຕີ ຄູ່ໝັ້ນຂອງຂ້ອຍມາແຕ່ນ້ອຍນັ້ນ.

ສັດຕີອາໄສຢູ່ນຳພີ່ນ້ອງທີ່ທົ່ງສາງນາງ ນາງພວມຮຽນຢູ່ລີເຊ ປີທີສອງ ພໍ່ແມ່ຄອບຄົວຂອງນາງຢູ່ຫລວງພະບາງ ເຊິ່ງໄດ້ກາຍເປັນເຈົ້າໃຫຍ່ນາຍໂຕໄປແລ້ວ ຈຶ່ງສົ່ງເສີມໃຫ້ລູກສາວມາຮຽນຕໍ່ທີ່ນະຄອນວຽງຈັນ.

ຟ້າມືດພໍດີ ເມື່ອມາເຖິງເຮືອນຂອງສັດຕີ:

"ມີຫຍັງເກີດຂຶ້ນເບາະອ້າຍສົມດີ ຈຶ່ງແລ່ນມາແບບເຫື່ອໄຫລໄຄຍ້ອຍຄືແນວນີ້?"

ຂ້ອຍບໍ່ມີເວລາຕອບ ໄດ້ແຕ່ບອກໃຫ້ສັດຕີພາເຂົ້າໄປໃນເຮືອນ ເຊິ່ງເປັນເວລາທີ່ບໍ່ມີໃຜຢູ່ເຮືອນເລີຍ:

"ພວກທະຫານໄລ່ຈັບເອົາອ້າຍໄປເປັນທະຫານ"

"ບໍ່ທັນໄດ້ຊັກຖາມຫຍັງຫລາຍໄປກວ່ານັ້ນ ເມື່ອມີ ສຽງ

ອີກກະທຶກຂຶ້ນທີ່ເດີ່ນບ້ານ.

ສັດຕີຟ້າວເອົາຂ້ອຍເຂົ້າໄປເຊື່ອງໄວ້ໃນຫ້ອງນອນສ່ວນຕົວຂອງນາງ ແລວອອກມາຮັບໜ້າກັບພວກທະຫານຢ່າງກາຫານ:

"ເຮືອນຂອງຂ້ອຍບໍ່ມີຄົນຊີ່ສົ້ນດີ"

ນາງຕອບພວກທະຫານໄປດ້ວຍໜ້າຕາເສີຍ:

"ແຕ່ພວກເຮົາເຫັນໜໍ່ນັ້ນແລ່ນເຂົ້າມາບ້ານຫລັງນີ້ແທ້ໆມາ"

"ຂ້ອຍບໍ່ເຫັນມີໃຜເຂົ້າມາຈັກຄົນດຽວ"

"ເວົ້າມາຕາມຄວາມຈິງເທາະນາງ ຊຸກເຊື່ອງຄົນຫລົບຫລີກຈາກການເຂົ້າເປັນທະຫານມີໂທດສະຖານໜັກໄດ ຈະບອກໃຫ້ຮູ້"

"ແລວແຕ່ພວກເຈົ້າຈິເຂົ້າໃຈ ເພາະຂ້ອຍບໍ່ຮູ້"

ພໍດີລົດເກັງສີດຳຄັນງາມຂອງເຈົ້າຂອງເຮືອນຄ່ອຍໆຄານເຂົ້າປະຕູຮົ້ວມາ ຜູ້ທີ່ກ້າວລົງອອກມາຈາກລົດຄື ທ່ານ ເອກອະທິບໍດີຕຳຫລວດຜູອາວຸໂສ ເຊີ່ງພວກທະຫານຕຳຫລວດຮູ້ດີ ເມື່ອພວກເຂົາແນມເຫັນກໍພາກັນໜ້າລາຕາຕາຍໄປ ຕາມໆກັນ:

"ມີຫຍັງເກີດຂຶ້ນຫລານສັດຕີ?"

"ຍາລຸງຂ້ານ້ອຍ, ທະຫານພວກນີ້ຫາວ່າເຮືອນ ຂອງເຮົາຊຸກເຊີອງຄົນທີ່ບໍ່ຍອມເຂົ້າເປັນທະຫານວ່າຊັ້ນ"

ດວງຕາອັນໃຫຍ່ແດງເຫລືອດໄປທາງນາຍທະຫານແລະພວກທະຫານເຫລົ່ານັ້ນ ເຮັດໃຫ້ພວກມັນຍິ່ງກົ້ມຫົວລົງຕ່ຳຕື່ມ

ອີກ:

"ໄປ, ໄປໃຫ້ພົ້ນ! ພວກສິກກະປົກ!"

"ໂດຍ, ຂ້ານ້ອຍ! ພວກຂ້ານ້ອຍບໍ່ຄິດວ່າຊິແມ່ນເຮືອນຂອງອາດຍາ..."

ຄືນນັ້ນ ຂ້ອຍຕ້ອງຈຳເປັນຕິດຄ້າງຢູ່ໃນຫ້ອງຂອງ ສົດຕີ ເພາະຫາເວລາທີ່ຈະອອກຈາກເຮືອນບໍ່ໄດ້ ຕາມຈິດໃຈຂອງສົດຕີແລ້ວກໍບໍ່ຢາກໃຫ້ຂ້ອຍມີຄວາມພະຍາຍາມແນວນັ້ນເພາະເຖິງແນວໃດ "ພວກເຮົາ" ໝາຍເຖິງ "ຂ້ອຍແລະນາງ" ກໍເປັນຄູ່ໝັ້ນຄູ່ໝາຍກັນມາແຕ່ນ້ອຍພຸ້ນແລ້ວ.

ເມື່ອເປັນຄືແນວນັ້ນ ຂ້ອຍ ແລະ ນາງກໍໄດ້ເສຍ ກັນ ຕາມວິສາຈະຂອງບ່າວສາວທີ່ຢູ່ຮ່ວມຫ້ອງດຽວກັນຕະຫຼອດທັງຄືນ:

"ຫລັງຈາກຮຽນຈົບແລ້ວ ອ້າຍຈະບອກໃຫ້ພໍ່ຂຶ້ນ ເມືອຫລວງພະບາງ ເພື່ອເວົ້າເຖິງບັນຫາທີ່ພວກເຮົາຈະເປັນຜົວເມຍກັນສາທີ"

"ອ້າຍເຊື່ອບໍ່ວ່າພໍ່ຂອງນ້ອງຈະອະນຸຍາດ?"

"ຄືຊິບໍ່ມີບັນຫາຫຍັງດອກຕີ ເພາະສອງຄົນເຮົາ ກໍແມ່ນຄູ່ໝັ້ນກັນມາແຕ່ນ້ອຍພຸ້ນ"

"ແຕ່ນ້ອງບໍ່ເຊື່ອໃຈປານໃດ"

"ເພາະຫຍັງ?"

"ເພາະຄວາມຫ່າງເຫີນຂອງຜູ້ໃຫຍ່ທັງສອງ ນ້ອງຈຳໄດ້ວ່າ, ແຕ່ພວກເຮົາໃຫຍ່ມາຈົນຮອດດຽວນີ້ ບໍ່ເຫັນພໍ່ຂອງອ້າຍ ແລະ ພໍ່ຂອງນ້ອງພົບປະສັງສັນກັນຈັກເທື່ອ"

ຂ້ອຍຖອນຫາຍໃຈຍາວແລ້ວວ່າ:

"ອາດຈະແມ່ນຕາຊີວບໍ່ກ້ຳເກິ່ງກັນ ແມ່ນຢູ່ວ່າ ພໍ່ຂອງເຮົາທັງສອງເປັນສ່ຽວກັນ ແລະ ກໍໄດ້ໝັ້ນສອງຄົນເຮົາໃຫ້ກັນໄວ້ແຕ່ນ້ອຍພຸ້ນ ແຕ່, ແຕ່ນັ້ນນັ້ນມາຮອດມື້ນີ້ ເວລາກໍລ່ວງເລີຍມາເກືອບຈາວປີແລ້ວ ວັນເວລາໄດ້ເຮັດໃຫ້ຕາຊີວທາງດ້ານພໍ່ຂອງນ້ອງໜັກຂຶ້ນຈົນຊິແບນບໍ່ເຫັນ ສ່ວນຕາຊີວ ທາງດ້ານພໍ່ຂອງອ້າຍ ອາດຈະເວົ້າໄດ້ເຕັມປາກວ່າ... ເປັນເສດກະຖາດທີ່ສັງຄົມພໍ່ເພິ່ງປາຖະໜາໄປແລ້ວ ນີ້ແລ້ວເຮັດໃຫ້ອ້າຍໜັກໃຈ"

ສົດຕີຍິ້ມນ້ອຍໆ ແລ້ວເວົ້າຂຶ້ນຊ້າໆ:

"ນ້ອງຈ້ຳພົດບໍ່ໄດ້ຄິດແນວນັ້ນ ການຍອມຮັບເປັນໃຈກັບອ້າຍໃນຄືນນີ້ ເປັນການຢັ້ງຢືນແລ້ວດວ່າ...ກ່ອນນີ້ເກືອບຈາວປີມາຮອດວັນນີ້ ບໍ່ມີຫຍັງປ່ຽນແປງ ສັນຍາຕ້ອງເປັນສັນຍາ"

"ອ້າຍກໍເຊື່ອໝັ້ນຄືແນວນັ້ນ"

໔

ເມື່ອສົດຕີບອກກັບຂ້ອຍວ່າ:

"ນ້ອງອາດມີທ້ອງໄດ້ເດືອນໜຶ່ງແລ້ວ"

ຂ້ອຍຟ້າວເອົາເລື່ອງນີ້ໄປເລົ່າໃຫ້ພໍ່ກັບແມ່ຮູ້ ແລະ ກໍ້ເປັນເວລາດຽວກັບຍາພໍ່ປະເສີດລົງມາວຽງຈັນ. ເພື່ອບໍ່ໃຫ້ເລື່ອງນີ້ພິແພ່ໄປທາງນອກ ແລະ ເພື່ອແກ້ໃນສະຖານະການໃຫ້ທັນທ່ວງທີ.

ພໍ່ຈັນເພັງ ກັບແມ່ຄຳຕັນ ຈຶ່ງແບກໜ້າເຂົ້າໄປຫາເພື່ອນເກົ່າ ເພື່ອເຈລະຈາກັບຫາທາງແກ້ໄຂ.

"ບັກຈັນເພັງ, ລູກຂອງມຶງບັງອາດຍິ່ງໜັກ! ແມ່ນຢູ່ກ່ອນນີ້ກູກັບມຶງເຄີຍໄດ້ເວົ້າໄດ້ວ່າຫຍັງນຳກັນ ນັ້ນມັນ ໄດ້ກາຍເປັນອະດີດໄປແລ້ວ, ດຽວນີ້ກູຄືໃຜມຶງຮູ້ບໍ? ແລະ ມຶງຄືໃຜເປັນຫຍັງບໍ່ກຽມກະລາຕົວຂອງມຶງແດ່, ໄປ! ເລື່ອງທີ່ເກີດຂຶ້ນກັບລູກສາວຂອງກູຈະແກ້ໄຂເອົາເອງ ຈົ່ງ ຮັບຮູ້ເອົາໄວ້ວ່າ... ສັນຍົມສັນຍານັ້ນພວກມຶງໄດ້ທຳລາຍມັນໄປແລ້ວ!"

ແຕ່ນັ້ນມາ...

ຂ້ອຍບໍ່ໄດ້ພົບສັດຕີອີກເລີຍ ຮູ້ຂ່າວແຕ່ວ່ານາງຖືກພໍ່ ບັງຄັບໃຫ້ຂຶ້ນເມືອເມືອງຫລວງແລ້ວ ແລະ ຂ່າວທີ່ເຮັດໃຫ້ ຫົວໃຈຂອງຂ້ອຍ "ຈັອກ" ທັງຍືນກໍຄື "ສັດຕີກຽມຈະແຕ່ງງານ"

ຂ້ອຍຕັດສິນໃຈບິນດ່ວນຂຶ້ນເມືອຫລວງ ແລະ ນັດພົບກັບສັດຕີເປັນຄັ້ງສຸດທ້າຍທີ່ຝັ່ງນ້ຳຄານຂອງຄືນທີ່ມາເຖິງນັ້ນເອງ.

"ພານ້ອງໜີເທາະອ້າຍສົມດີ ໜີໄປທາງໃດກໍໄດ້ ທີ່ພໍມີທາງພວກເຮົາຈະໄດ້ຮ່ວມຊີວິດຢູ່ນຳກັນໄປຕະລອດຊີວິດ"

"ເຮັດແນວນັ້ນໄດ້ຫລືສັດຕີ?"

ນາງໄດ້ແຕ່ຮອງໄຫ້ຮ່ຳໄຮກອດຂ້ອຍອ້ອນວອນ ເພື່ອໃຫ້ພານາງໜີ ຂ້ອຍກໍບໍ່ຮູ້ຈະຕັດສິນໃຈແນວໃດ ຮູ້ແຕ່ວ່າ, ຖ້າເຮັດຕາມຄຳເວົ້າຂອງສັດຕີນັ້ນເປັນທາງອອກທີ່ບໍ່ ຖືກຕ້ອງເລີຍ:

"ໝາຍຄວາມວ່າ, ອ້າຍບໍ່ຮັກນ້ອງແລ້ວແມ່ນບໍ່ອ້າຍສົມ

ຄື?"

"ອ້າຍບໍ່ເຄີຍຄິດ ແລະ ບໍ່ໄດ້ຄິດແນວນັ້ນຈັກເທື່ອ"

"ກະຊັ້ນພວກເຮົາໜີເທາະ ໜີໄປຫາແນວລາວ ທີ່ຢູ່ບໍ່ໄກນີ້ ແລ້ວພວກເຮົາ..."

ໃນເວລາທີ່ຂ້ອຍນອນຄຶບຄິດຢູ່ວ່າຈະຫາວິທີອອກແນວໃດຢູ່ນັ້ນ ສຽງຂອງຜູ້ໃດກໍດັງຂຶ້ນຢູ່ດ້ານຫລັງ:

"ບັກສິນຄື, ເມື່ອມຶງກ້າຕາມຂຶ້ນມາຮອດນີ້ໄດ້! ມຶງ ກໍຈົ່ງໜີໄປຄືນດຽວໄດ້!"

ຂ້ອຍແກະມືຂອງສັດຕູອອກ ເມື່ອແນມເຫັນເລົາປືນສີດຳສອງກະບອກພົ້ນອອກມາຈາກປ່າພຸ່ມ, ເພາະນັ້ນ ມັນໝາຍເຖິງຊີວິດ, ໝາຍເຖິງຄວາມຕາຍ:

"ລາກ່ອນສັດຕູທີ່ຮັກ, ຈົ່ງໄຈກຄີ!... ຖ້າຊາດໜ້າມີຈິງ ເຮົາຈຶ່ງຄ່ອຍພົບກັນ!"

ຂ້ອຍໄດ້ຍິນສຽງປືນ ແລະ ສຽງສະອື້ນດັງຂຶ້ນຕາມຫລັງມາ ເມື່ອຕີນຕົວຂອງຂ້ອຍມຸ່ງຫລາວລົງສູ່ນ້ຳດານທີ່ໄຫລແຮງນັ້ນ.

໕

ລ່ອງໄຫລໄປໄດ້ໃກ້ໄກປານໃດບໍ່ຮູ້ເລີຍ, ຄວາມໜາວເຢັນ ຄວາມອິດເມື່ອຍ ບວກກັບຄວາມຢານກົວ ຂອງຍາມລາຕີການ ແລະ ກໍບໍ່ຮູ້ຈັກວ່າ ບ່ອນໃດເປັນບ່ອນໃດ.

ເມື່ອໃຈເຈຂຶ້ນມາຮອດຕະຝັ່ງ ຂ້ອຍກໍລົ້ມໝົດສະຕິໄປ.

ຮູ້ເມື່ອຂຶ້ນມາອີກເທື່ອໜຶ່ງ ແມ່ນໄດ້ມາຢູ່ກາງປ່າ ບ່ອນ

ໃດນີ້ແລ້ວ ນັ້ນແມ່ນການປ່າແຫວບາດກ້າວທໍາອິດທີ່ຊີວິດຂອງຂ້ອຍໄດ້ເຂົ້າມາຢູ່ໃນອ້ອມເອິກຂອງ "ການປະຕິວັດ"

ບໍ່ມີຫຍັງແປກປະຫລາດເລີຍ ເມື່ອຂ້ອຍສະຫມັກໃຈເຂົ້າຮ່ວມຂະບວນການຕໍ່ສູ້ປົດປ່ອຍຊາດ ເປັນນັກຮົບທີ່ໃຫມ່ ແລະ ຫນຸ່ມນ້ອຍເຄື່ອນໄຫວຢູ່ນໍາຂະບວນການ ພາຍໃຕ້ການນໍາພາຂອງການປະຕິວັດລາວ.

ບໍ່ພໍເທົ່າໃດນີ້ ພວກສັດຕູກໍເປີດບັ້ນກວາດລ້າງແຖວ ບໍລິເວນຕີນພູເຫລັກ ແລະ ພູຊາງ ອັນເປັນທີ່ຕັ້ງສໍານັກ ປິດລັບຂອງການປະຕິວັດ.

ປືນໃຫຍ່ຈາກພູເຫລັກ ແລະ ພູຊ້າງສູນລົງມາໃສ່ຢ່າງຫູດັບຕັບໄຫມ້ ແລ້ວຈາກນັ້ນກໍແມ່ນທະຫານລາຍຈໍານວນ ກໍ້ວສາມກອງຮ້ອຍ ໂດຍແມ່ນຮ້ອຍເອກສິນຈິດເປັນຜູ້ບັນຊາ.

ການສູ້ຮົບກັນໄດ້ດໍາເນີນໄປເລື້ອຍໆ. ຈາກບັ້ນນີ້ ຕໍ່ໃສ່ບັ້ນອື່ນໆ ຈາກການເຄື່ອນໄຫວຢູ່ເຂດຫລວງພະບາງກໍໄປເຄື່ອນໄຫວຢູ່ເຂດແຂວງຫົວພັນ, ຊຽງຂວາງ, ວຽງຈັນ ທາງທິດເຫນືອ. ສະຫນາມຮົບໄດ້ສ້າງໃຫ້ຂ້ອຍເປັນນັກຮົບທີ່ກ້າແກ່ນ ເປັນນັກປະຕິວັດທີ່ຫນຽວແຫນ້ນ ເປັນບຸກຄົນທີ່ຈົງຮັກພັກດີ ຕໍ່ພັກ ແລະ ການປະຕິວັດ ຈົນຮອດວັນສຸດທ້າຍຂອງໄຊຊະນະ ຄື ປົດປ່ອຍທົ່ວປະເທດ ປະກາດປະເທດລາວເປັນ ປະເທດສາທາລະນະລັດປະຊາທິປະໄຕປະຊາຊົນລາວຢ່າງ ສະຫງ່າຜ່າເຜີຍ.

ແຕ່, ສິ່ງທີ່ຂ້ອຍຢາກລືມ ແຕ່ກໍລືມບໍ່ໄດ້, ລືມບໍ່ໄດ້ເລີຍ ເພາະມັນເປັນຄວາມຮັກຄັ້ງທໍາອິດຂອງຊີວິດ.

ນັບແຕ່ປະເທດຊາດໄດ້ຮັບການປົດປ່ອຍມາ ຂ້ອຍ ບໍ່ຮູ້ຂ່າວຄາວຫຍັງຈາກສັດຕີ ມີແຕ່ຄິດເອົາວ່າ, ປານນີ້ ນາງອາດຈະມີລູກມີເຕົ້າໄປເກືອບເຄິ່ງໂຫລແລ້ວ.

ເມື່ອຂ້ອຍຂຶ້ນມາຫລວງພະບາງເພື່ອເຮັດວຽກ ເກັບກໍ່ຂ່າວຄາວ ບໍ່ຄິດຈັກຫນ່ອຍເລີຍວ່າ ຈະພົບສັດຕີ ແຕ່ ... ເປັນຫຍັງສັດຕີຈຶ່ງຕ້ອງຮ້ອງໄຫ້? ເປັນຫຍັງສັດຕີຈຶ່ງສະແດງອອກມາແນວນັ້ນຕໍ່ຂ້ອຍ:

"ບໍ່, ນ້ອງບໍ່ຕ້ອງເຮັດແນວນັ້ນສັດຕີ!"

"ອ້າຍ, ອ້າຍສິນດີ..."

ຂ້ອຍມະໂງມະເງີສີຫູສີຕາລຸກຂຶ້ນທົ່ວນອນ:

"ອ້າຍຝັນຮືຫຍັງຄືມາຮ້ອງຈົນສຽງດັງທົ່ວຫ້ອງຄື ແນວນີ້ແທ້ອ້າຍ?"

"ອ້າຍຮ້ອງສຽງດັງຈັ້ນຫວະ?"

"ແມ່ນແລ້ວ, ອ້າຍຮ້ອງ ອ້າຍຮ້ອງຫາຄົນທີ່ມີຊື່ວ່າ ສັດຕີ..."

ຂ້ອຍແນມອອກໄປທາງປ່ອງຢ້ຽມ ຮູ້ທັນທີວ່າ ຟ້າບໍ່ ທັນແຈ້ງເທື່ອ ຈຶ່ງຄ່ອຍໆເປີ້ງຕົວລົງນອນອີກ. ພະນັກງານ ຮຸ່ນນ້ອງທີ່ຮ່ວມເດີນທາງຂຶ້ນມາເຮັດວຽກເກັບກໍ່ຂ່າວ ນອນຢູ່ຕຽງຂ້າງໆກັບຂ້ອຍ ແນມເບິ່ງຫນ້າຂ້ອຍແລ້ວຖາມ:

"ສັດຕີອາດແມ່ນແຟນຂອງອ້າຍລະຕິ?"

"ວ່າແນວນັ້ນກໍ່ຫາກແມ່ນ ເມື່ອກ່ອນນັ້ນ, ແຕ່ເວລາ ນີ້ນາງໄດ້ມີລູກມີຜົວໄປແລ້ວ ລູກສາວຂອງນາງໃຫຍ່ເປັນສາວເຕັມຕົວເລີຍລະ"

ນ້ອງຊາຍຫຼ້າອ່າວຂີ້ດື້ແດ່ຖາມຕໍ່ອີກວ່າ:

"ເວລານີ້ອາຍກໍເປັນໂສດ ເມື່ອບໍ່ໄດ້ແມ່ກໍເອົາ,ເອີະ.
.. ເອົາລູກເລີຍຊິເປັນຫຍັງໄປລະ?"

"ບະ! ຄິດແບບນັ້ນມັນກໍບໍ່ຖືກ"

ແລ້ວພວກຂ້ອຍມາກັນຫົວຂັ້ນ. ເມື່ອພວກນ້ອງ ທັງສອງ ອໍ້ອອງ ອ້ອຍກໍໄດ້ເລົ່າຣ ~~ຕຄການທີ່ເກີດຂື້ນກັບຕົວຂ້ອຍ~~ ທີ່ມີການພົບພັນແບບໃດກັບສັດຕີສູ່ພວກເຂົາຟັງຢ່າງລະອຽດ ທັດຕອນ.

ການທີ່ຈະຄິດວ່າ "ນອນຈັງເຈົ້າ" ເລີຍກາຍເປັນການເລົ່າທີ່ໜ້າຟັງ ເຮັດໃຫ້ບັນຍາກາດຂອງຕອນເຈົ້າວັນນັ້ນ ມີຊີວິດຊີວາຂອງວັນຕໍ່ມາໃນອາລຸນວັນໃໝ່ໃຕ້ທ້ອງຟ້າ ໃນຕົວເມືອງຫລວງພະບາງ ເຊິ່ງພວກຂ້ອຍໄດ້ມາເຖິງທີ່ໂຮງແຮມພູສີ.

ເມື່ອຂ້ອຍຍ້ອນໄປເຮືອນຂອງສັດຕີອີກເທື່ອໜຶ່ງ:

"ສະບາຍດີຫລານສາວ?"

"ຈ້າວ, ສະບາຍດີ"

"ແມ່ຂອງຫລານເດ?"

"ແມ່ບໍ່ສະບາຍ"

"ຄິດວ່າຈະບໍ່ເປັນການລົບກວນ ຖ້າອາວຈະຂຶ້ນ ເມືອຢ້ຽມເບິ່ງແມ່ຂອງຫລານຢູ່ເທິງເຮືອນ?"

ນາງສາວນ້ອຍບໍ່ປາກ ຟ້າວນຳໜ້າພາຂ້ອຍ ຂື້ນເມືອເທິງເຮືອນ.

ເທິງຕຽງຫ້ອງໃນ ສັດຕີນອນຢູ່ໃນຜ້າຫົ່ມຜືນອ່າວເກົ່າ,

ໃບໜ້າຂອງສັກດີ ມີສີລ່າເຫລືອງຈົນເກີນໄປ ເຄົ້າ ໂຄງ ຂອງໃບໜ້າກ່ອນນີ້ເກືອບຈາງປີດຸແນວໃດ, ເຖິງຈະມີການ ປ່ຽນໄປຕາມໄວອາຍຸສັງຂານ ແຕ່ຄວາມອ່ອນໂຍນ ເຖິງຈະ ມີການເສື່ອມຖອຍໄປແດ່ ກໍຍັງບົ່ງບອກເຖິງຄວາມຫລັງ ຈາກ ວັນນັ້ນມາເຖິງວັນນີ້:

"ນ້ອງສັກດີ?"

ນາງມີນຕາແນມມາເບິ່ງຂ້ອຍ ແລ້ວຟ້າວມຶກໜ້າ ເຂົ້າ ຫາຝາດີເກົ່າ.

ຂ້ອຍນັ່ງລົງຕັ່ງ ຄ້ອນນໍຄີສາວນ້ອຍຜູ້ນັ້ນນຳເອົາຈອກນ້ຳ ມາໃຫ້ ແລ້ວກໍອອກໄປ:

"ອ້າຍບໍ່ເຂົ້າໃຈເລີຍວ່າ ເປັນຫຍັງນ້ອງຈຶ່ງມີພຶ.ຕິການ ແນວນັ້ນກັບອ້າຍ ໃນເມື່ອ..."

"ອ້າຍບໍ່ເຂົ້າໃຈເລີຍວ່າ ເປັນຫຍັງນ້ອງຈຶ່ງມີພຶດຕິການ ແນວນັ້ນກັບອ້າຍ ໃນເມື່ອ..."

"ພໍແລ້ວອ້າຍສັກດີ ຂໍໃຫ້ອ້າຍຢຸດເວົ້າພຽງແຕ່ ທີ່ນັ້ນ ເສາະ, ນ້ອງຂໍຮ້ອງ"

ເຖິງແນວໃດຂ້ອຍກໍຍັງບໍ່ເຂົ້າໃຈຢູ່ນັ້ນເອງ, ເພາະ ກ່ອນນີ້ ນາງກໍໄດ້ແຕ່ງງານໄປແລ້ວ ນາງສາວນ້ອຍຜູ້ນີ້ ໃບ ໜ້າຄ້າຍຄືກັນກັບສັກດີຜູ້ນີ້ຈະບໍ່ແມ່ນອື່ນໃດໄປອີກ ນອກຈາກ ສາຍເລືອດຂອງນາງເອງ.

ແລະ ແລ້ວ, ສັກດີຄ່ອຍໆຫັນໜ້າກັບຄືນມາ ລູກນັ່ງ ຈ້ອງສາຍຕາເບິ່ງຂ້ອຍ ຈົນເຮັດໃຫ້ຂ້ອຍສະທ້ານໄປທົ່ວຮ່າງ ກາຍ, ນາງເບັ້ນຮິມສົບເອີ່ຍຂຶ້ນຈາງ:

"ອ້າຍຄິດແນວໃດຈິ່ງຂຶ້ນມາເມືອງຫລວງ?"

"ເພື່ອຢາກຮູ້ຂ່າວຂອງຄົນທີ່ຊື່ວ່າ ສີດາ"

"ມີຫຍັງອີກບໍ່? ນ້ອງບໍ່ໄດ້ໝາຍເຖິງຄວາມ ຂອງອ້າຍ"

ຂ້ອຍງຶກຫົວ ແລ້ວຍິ້ມອອກມານ້ອຍໆ:

"ອ້າຍດີໃຈທີ່ໄດ້ພົບຄົນຊື່ສີດາ ທັງມີພົວທີ່ດີ ມີລູກ ສາວງາມດີກິນກັບແມ່ຈຶ່ງຊູ້"

ສີດາພອມຊີ້ຢູ່ມືໄປເອົາເມັດຢາ ແລະ ຈອກນ້ຳ ທີ່ວາງຢູ່ໂຕະຂ້າງຕຽງດ້ານເສື້ອ ຂ້ອຍຟ້າວຊ່ວຍເອົາໃຫ້ນາງດ້ວຍຄວາມເຫັນອົກເຫັນໃຈ:

"ອີ່ນາງນ້ອຍບອກວ່າ ພໍ່ລົງວຽງຈັນ"

ຂ້ອຍເອີ້ຍຂຶ້ນແລ້ວສາຍຕາເຫລືອງຫາງຕາອອກປະຕູໄປທາງນອກ ເພື່ອຢາກຮູ້ວ່າ "ສາວນ້ອຍ" ຢູ່ຂ້າງນອກຫັ້ນຫລືບໍ່?:

"ມັນເວົ້າຢອກອ້າຍໄດ໋ຫັ້ນ"

"ໝາຍຄວາມວ່າແນວໃດສີດາ?"

ນ້ຳຕາໄດ້ຫລັ່ງໄຫລອອກມາຈາກແກ້ວຕາທັງສອງ ຂອງນາງອີກ ສຽງສະອື້ນຄ່ອຍໆລອດລອຍອອກມາຈາກຮູດໍ.ນາງເອົາແພຍຸ້ນຂຶ້ນມາເຊັດນ້ຳຕາ ແລ້ວເລີ່ມຕົ້ນເລົ່າເໝືອນກັບວ່າເປັນຄົນອົມທຸກໄວ້ດົນນານມາແລ້ວ:

...

ນັບແຕ່ນີ້ທີ່ອ້າຍໂຕນລົງນ້ຳຄານໄປແລ້ວ, ນ້ອງບໍ່ ໄດ້ຂ່າວຄາວຫຍັງຈາກອ້າຍເລີຍ.

ຄວາມຕັ້ງໃຈຂອງພໍ່ ແມ່ນຢາກໃຫ້ນ້ອງແຕ່ງງານ ກັບ

ຂ້ອຍເອົາສິນຈິດ ເມື່ອນ້ອງເລົ່າສະພາບທັງໝົດ ໃຫ້ລາວຟັງ ແລະ ຍັງບອກວ່າ "ນ້ອງພ້ອມມີຫ້ອງກັບອ້າຍ ສິນທີ" ການອໍແຕ່ງງານຈຶ່ງຖືກຍົກເລີກ.

ພໍຮອດກຳນົດ ນ້ອງຈຶ່ງຄອດແພງປະພາ ອອກມາ ແລະ ຕັດສິນໃຈບໍ່ເອົາໃຜອີກ. ພໍ່ກັບແມ່ເຫັນໃນຄວາມຕັດ ສິນໃຈແນວນັ້ນຂອງນ້ອງ, ເພິ່ນກໍຕາມໃຈ ແລ້ວຫວ່າງ ສອງສາມປີຫລັງນີ້ ພວກເພິ່ນກໍຈາກໂລກໄປ.

ນ້ອງບໍ່ຄິດຈັກໜ່ອຍວ່າຈະໄດ້ພົບກັບອ້າຍຄືແນວນີ້ອີກ:

"ໝາຍຄວາມວ່າ...?"

"ແມ່ນແລ້ວ, ອ້າຍສິນທີ ນາງແພງປະພາຜູ້ທີ່ອ້າຍເອີ້ນວ່າຫລານນັ້ນ ທີ່ຈິງແລ້ວກໍແມ່ນກ້ອນເລືອດຂອງອ້າຍ ແມ່ນພະຍານຮັກທີ່... ທີ່ພວກເຮົາໄດ້ສາບານເອົາໄວ້ນຳກັນ"

ຂ້ອຍກ້າວເຂົ້າໄປກອດສັດທີໄວ້ໃນເອິກ:

"ອ້າຍຂໍບູຊານ້ຳໃຈອັນປະເສີດຂອງນ້ອງ"

ເວລາດຽວຈຸ້ກໍມີສຽງສະອື້ນຫືບໆ ຢູ່ຟາກທາງນອກ, ຂ້ອຍຈຶ່ງໄປເບິ່ງ ເຫັນຍິງສາວທີ່ຂ້ອຍເອີ້ນວ່າ "ຫລານສາວ " ແລະ ສັດທີຫາກໍບອກວ່າ "ນາງຄືແພງປະພາລູກສາວ ຂອງຂ້ອຍ" ພວມກົ້ມໜ້າກົ້ມຕາຮ້ອງໄຫ້ດ້ວຍຄວາມນ້ອຍໃຈແລະດີໃຈ:

"ລູກ, ແພງປະພາຂອງພໍ່!..."

ຂ້ອຍຈ້ວາມເອົາລູກສາວສຸດທີ່ຮັກໃຫ້ລຸກຂຶ້ນ ແລ້ວກອດໄວ້ແນບເອິກ:

"ພໍ່. ພໍ່... ຂ້ອຍເປັນຄົນບໍ່ມີພໍ່!"

ນາງພະຍາຍາມຕື່ນ ເມື່ອມືດອອກຈາກໄປ ແຕ້ຂອງ ກໍ່ຈູງເອົານາງເຂົ້າໄປຫາທູເປັນແມ່:

"ໃຜຈະຄິດວ່າເຫດການຈະເກີດຂຶ້ນແນວນີ້"

ແມວປະພາກົ້ມໜ້າຮ້ອງໄຫ້ເຂົ້າໄປຫາທູເປັນແມ່, ສິດຕິໃຈມີລູບໄລຕາມເສັ້ນພົມດ້ວຍຄວາມຮັກ ແລະ ສົງສານ ທີ່ເກີດມາບໍ່ເຄີຍເຫັນໜ້າແມ່ຈັກເທື່ອ.

"ອ້າຍກໍ່ນຶກສົງໄສ ແຕ່ຕອນພົບເທື່ອທຳອິດຢູ່ ເດີ່ນບິນວັດໄຕ້ພຸ້ນແລ້ວ ວ່າເປັນຫຍັງສາວນ້ອຍຜູ້ນີ້ຈຶ່ງມີໃບໜ້າຄືສິດຄືແທ້?"

ໃບໜ້າຂອງສິດຕິຍິ້ມແຍ້ມຂຶ້ນມາແດ່ ນາງພະຍາ ຍາມຂອຍໃຈລູກສາວຕະຫລອດເວລາ ເມື່ອໄຫ້ເຂົ້າໃຈບັນຫາ , ແລ້ວສິດຕິຫັນມາຖາມຂ້ອຍວ່າ:

"ຢ່າງນ້ອຍອ້າຍກໍມີລູກມີເຕົ້າໄປແລ້ວ ໔-໕ ຄົນ ແມ່ນບໍ່?"

"ນ້ອງອາດຈະເບິ່ງອ້າຍຜິດໄປແລ້ວສິດຕິ ແຕ່ພຸ້ນ ຈົນຮອດດຽວນີ້ ອ້າຍຍັງຮັກສາຫົວໃຈໄສຕາໄວ້ຕະຫລອດເວລາ, ເພາະອ້າຍເຊື່ອໃນຕົວເອງວ່າ ບໍ່ວັນໃດກໍວັນໜຶ່ງ ອາດຈະໄດ້ພົບແພງ"

"ຄິດວ່າອ້າຍຈະເວົ້າແຕ່ຄວາມຈິງສູ່ນ້ອງມັ້ງ?"

ພໍ່ຖືນ້ອງຊາຍທັງສອງປີລໍ້ຫົວເຂົ້າມາເວົ້າຂຶ້ນ ພ້ອມກັນໄລດວ່າ:

"ນອກນ້ອງຂໍເປັນພະຍານໃຫ້ໄດ້ ວ່າ... ອ້າຍສິນຄືຍັງໂສດ ແລະ ບໍລິສຸດສຳຫລັບເອື້ອຍຢູ່ສະເໝີ"

ຂ້ອຍ ແລະ ສັດຕູໂຕວຂັ້ນ ຈົນເຮັດໃຫ້ແພງປະພາ ອຶດບໍ່ໄດ້ ຈຶ່ງຫົວອີກຈຶ່ງຂັ້ນຢູ່ໃນເອິກຂອງແມ່. ແລ້ວຫັນມາ ຈອງເບິ່ງໜ້າຂ້ອຍ ພິນິດພິຈາລະນາຢູ່ຄາວໜຶ່ງ ຈຶ່ງຮ້ອງ ອອກມາດ້ວຍນ້ຳສຽງທີ່ພາກພູມໃຈວ່າ:

"ພໍ່!..."

ຂ້ອຍເອົາມືລູບຫົວ ແລ້ວກອດເອົາລູກສາວສຸດທີ່ຮັກ ຢັ້ນຢ່າງພາກພູມໃຫ້ແກ່ສັດຕູເນຍສຸດທີ່ຮັກ.

"ເວລາໃດ ອ້າຍກໍຍັງເຊື່ອໝັ້ນວ່າ... ຫລວງພະບາງຍັງເປັນທີ່ຮັກຂອງອ້າຍທຸກເວລາ ແລະ ກໍເປັນ ຫລວງພະບາງທີ່ຮັກຂອງອ້າຍແທ້".

ສ. ວິ ບ່ລະສິບ

# ດ່າດວນ





ສຽງຈັກຈັ່ນດັງລະງົມທົ່ວທົ່ງກວ້າງ ແລະ ປ່າດົງ ເໝືອນຈະກືນກິນຄວາມຫວາງເປົ່າຂອງມະນາໄມແຫ່ງນີ້ໄດ້ ຢູ່ໃນອ່ານາດແຫ່ງຄວາມງຽບສະຫງົບ... ແສງແດດກ້າສົ່ງ ແສງປະກາຍຍິບຢັບກັບໃບໄມ້ເມື່ອຕ້ອງແສງລົມ. ອື່ໄງ່ ສີ ຂາວປົວມ່ວງສັ້ນເທິງຟ້າເປັນຮູບເໝືອນຈອຍໃຫຍ່ ເມື່ອໃກ ລົມທົວກຸດຫອບທົ່ວເຂົາ... ສິ່ງເຫຼົ່ານີ້ບໍ່ໄດ້ເປັນອຸປະ ສັກ ຕໍ່ການເດີນທາງຂອງເຂົາເລີຍ ເບິ່ງທ່າທີຄືວ່າເຂົາມີຄວາມ ຍິນດີກັບການພົບພໍ້ສິ່ງເຫຼົ່ານີ້ສາອີກ. ຈາຍໄນກາງຄົນ ຍັງ ຄົງເດີນກ້າວຖີ່ຢ່າງໝັ້ນຄົງ ເວລາຈັກຜ່ານໄປເທົ່າໃດເຂົາ ຂອງກໍບໍ່ໄດ້ຈົດຈຳໄວ້. ຄວາມປ່ຽນແປງຂອງທຳມະຊາດຕົ້ນ ໄມ້, ກໍໄຜ່, ທົ່ນທາງກວຽນ ບາງບ່ອນເປັນໂສກເລີກພູຽງ ແອວ. ແຕ່ສິ່ງດັ່ງກ່າວກໍບໍ່ໄດ້ເຮັດໃຫ້ຈິດໃຈຂອງເຂົາ ຕ້ອງ ປ່ຽນເຂວອອກຈາກຈຸດໝາຍປາຍທາງຄືບ້ານເກີດ ເມື່ອ ນອນ ຈຶ່ງໄດ້ພັດພາກຈາກໄປໄດ້ຊາວກວ່າປີ. ເຂົາກະຄື ຊື ລົ້ນຢາກເຫັນພີ່ນ້ອງ. ຍາດມິດ. ນອກເຂົາຄົງຈະສະ ແດງ ຄວາມຍິນດີປີຕາໃນການກັບຄືນມາຂອງເຂົາໃນເທື່ອນີ້. ໃນ ທີ່ສຸດເຂົາມານັ່ງເຊົາເມື່ອຍຢູ່ກ້ອງຮົ່ມກົກຄໍໃຫຍ່ຢູ່ນອກບ້ານ. ກົກຄໍ້ໃຫຍ່ກົກນີ້ຍັງມີໃບດົກໜາການກອງ ເປັນຮົ່ມເຢັນເປັນ ທີ່ພັກແວ່ເຊົາເມື່ອຍຂອງໄທບ້ານທີ່ເດີນທາງໄກ ກ່ອນທີ່ ຈະ ເຂົ້າໄປໃນບ້ານ. ນັບທັງໄທບ້ານອື່ນອີກ ນອກຈາກ ເປັນ ບ່ອນແວ່ເຊົາເມື່ອຍແລ້ວ ຮົ່ມກົກຄໍໃຫຍ່ນີ້ຍັງເປັນ ສະຖານທີ່ ແວ່ເຊົາພັດເຂົ້າແປ້ງນ້ຳແຕ່ງຂອງຊູ້ສາວໄທບ້ານອື່ນຍາມບຸນ ມະເຫວດ, ບຸນກະຖິນ ແລະ ປາງບຸນຕ່າງໆກ່ອນຈະ ເຂົ້າ

ໄປໃນບ້ານອີກດ້ວຍ.

ເຂົານັ່ງເຫົ້ງໃສ່ກັບເຫງົ້າກົກຄໍ້ໃຫຍ່ ນາງສຳຫລວດເບິ່ງສະພາບແວດລ້ອມທີ່ເຄີຍມີເມື່ອແຕ່ກ່ອນນີ້... ໂອ!.. ເຄືອຈານ ທີ່ເຄີຍເປັນໂອນຈາຂອງເຂົາເມື່ອຍັງນ້ອຍນັ້ນບັດນີ້ໄດ້ຊຸມຸ່ຍໄປຕາມການເວລາ... ກົກຕີນເປັດກໍຍັງ ເຫລືອແຕ່ຕໍ... ປ່າຕ້ວນ້ອຍ ກົກຫລີວ ທີ່ຢູ່ອ້ອມແອ້ມທີ່ເຄີຍ ເປັນບ່ອນຢີດຫຸກກໍຖືກຖາງໄປຈີນແປນໝົດ... ແຕ່...ນັ້ນ ກົກດຳດວນຍັງຢູ່! ເໝືອນມີສິ່ງກະຕຸ້ນໃຫ້ຫົວໃຈຂອງເຂົາຕ້ອງເຕັ້ນແຮງ ເມື່ອນຶກເຖິງໃຜຜູ້ໜຶ່ງຂຶ້ນມາ.

× ×

×

ໂອເດັກ... ຄວາມຄື້ ຄວາມດ້ານ ໄຫບ້ານໝົດບ້ານຍົກໃຫ້ນັກຊາຍທອງສີມຮວງອາຍຸ ໑໘ ປີ ເຂົາ ສາມາດສານກະຕາ, ສານຂ້ອງນ້ອຍ ຖາສີມຫຣບໃສ່ກັບໝູ່ ຜູ້ອື່ນແລ້ວ ເຂົາມີອັນລື່ນຫລາຍອັນ ເຄື່ອງດົນຕີທີ່ເຂົາມັກທີ່ສຸດກໍຄືໝາກກະຈັບປີ່ສາມສາຍ. ເຂົາສາມາດຕ່ອຍຈັງຫວະ ລືມນັດໃສ່ ແມ່ສາວກອນລູກ, ນີ້ວມືຊ້າຍທີ່ນັບຂັ້ນກະຈັບປີ່ໃດ້ ເປັນສຽງມ່ວນປານວ່າໄກຕອດເຫຍື່ອ. ນອກຈາກຈະເປັນນັກສີບລະປືນຜູ້ມີຄວາມຈຳນານຢູ່ໃນບ້ານແລ້ວ ເຂົາຍັງເປັນ ນາຍພານທີ່ມີຝີມືແມ່ນຢຳໃນການໃຊ້ໜ້າ. ປີເທື່ອໜຶ່ງ ນົກອີກຈ້າງຮ້ອງ ປີກ-ປີກຢູ່ເທິງປາຍໄມ້ໃຫຍ່ຢູ່ແຄມ ນາໜອງໄມ້ ທຶດສິງໄດ້ທ້າທາຍວາ:

"ຕົ້ນນິ້ວຍິ່ງນົກປີ້ຊີກ ກູຈິເຈ່ຍນິ້ວຂອດຕິດຂຶ້ນໄດເຂື້ອນມີງ" ທອງສີບໍ່ປາກຈັບເອົາລູກໝາ ແລະ ຂັ້ນໜາເລົ່ວໃສ່ນົກຂີກຈາງທີ່ຮອງ ປີກ-ປີກແກວງຕິດໄປມາ, ຄວາມສູງຂອງນົກແບນເອັ້ນຈ້າຕິດແນວອັນ ເອົາເລົ້ງໜ້າ ແລະ ລິວຕາເບື້ອງຈ້າຍນໍສຽງຖົ່ວເປີກເທົ່ານັ້ນ ນົກຂີ້ກຈາງໄດນັ້ນ ກໍພາລູກໝາຂວາງໄຕຂອງມັນເຈີດລົງມາແຕ່ປາຍໄມກລົງດິນຢ່າງບໍ່ມີຈັງໜວະຍິນ. ທິດສີງກໍຕ້ອງຈ້າໃຈເຈຍເອົາຮອດຂຶ້ນໄດເຮືອນ. ເວລານັ້ນຈຶ່ງເປັນເລື່ອງກາວລານກັບວາທອງສີເຈົ້າປັນຍາ ຫລືວາຈຮວໜຽງນ້ອຍ, ຈຶ່ງເປັນທີ່ ຮັກໃຄ່ຂອງພູເຖົ້າພູແກ່ ແລະ ເດັກນ້ອຍຈ້າຮານປ່ານດຽວກັນ. ທີ່ວ່າເປັນທີ່ຮັກໃຄ່ຂອງພູເຖົ້າພູແກ່ນັ້ນ, ເອົາຮູ້ຈັກຄາ ຈັກສູງຮູ້ຈັກແລງຈັກວາຍ. ຈະເປັນຍອນມີຄວາມໃກຊິດ ຮ່າງຽນນ້າຄູບາອາຈານຢູ່ວັດວາອາຮາມ ຫລືໄດເຄີຍບວດເປັນສ້ານ້າພູເຖົ້າ ແລະ ສິ່ງສ້າຄັນອີກອັນໜຶ່ງ ເອົາເປັນພູນ້າ ຫລືຫົວໜ້າເດັກນ້ອຍຢູ່ໃນບ້ານນັ້ນ ແລະ ທັງເປັນນັກ ປະດິດດອກໄມ້ສະໂບກົ້ວທີ່ສຸດເວລາບຸນພະເວດ.

... ຈາກຊີວິດທີ່ຖືກຄີຢູ່ກັບກິ່ນຕຸ່ມສາບຄວາຍ, ທອງສີກໍປຽບເໝືອນທຸກສິ່ງທີ່ມີຊີວິດ. ຈາກບາວແລວກໍກາຍເປັນຈາວໜຸ່ມເຕັມຕົວ ການເວລາໄດ່ປ່ຽນແປງ ທ້າມະ ຊາດແລະ ປັບໂຕໃຫ້ເຂົ້າກັບສະພາບສິ່ງແວດລ້ອມ ແລະ ກໍເປັນເລື່ອງທ້າມະດາທີ່ສຸດ ທີ່ອາຍບາວຢ່າງທອງສີທີ່ມີຄວາມ ສາມາດສະຫລາດສ່ອງໃສ ທັງດູໝັ້ນຈວານແລວຈວານວາຍ ນໍ່ແນ່. ກາຍເປັນເປົ້າໝາຍສາຍຕາຂອງສາວຈ້າຮານ ປ່ານ

ດຽວກັນຢູ່ໃນບ້ານ ແລະ ແຖວບ້ານໃກ້ເຮືອນຄຽງ ຖ້າວ່າ ໃຫ້ໄດ້ແຕ່ງດອງນຳກໍສະບາຍ ປານວ່າໄດ້ນັ່ງເມືອງ ຈັ້ນເຕາະ ແລະ ໃນບັນດາສາວຊຳຮານປານດຽວກັນ ທອງສີໃຫ້ຄວາມສົນໃຈນຳ ບົວວັນ ເປັນພິເສດ ເພາະວ່າ ນອກຈາກຈະໃກ້ຊິດກັນແລ້ວ ກໍຍັງມີແມ່ແຮງຊຸກຍູ້ອີກຄື ພໍ່ແມ່ ທັງສອງກໍເຫັນດີນຳ ແລະ ໃນທີ່ສຸດທັງສອງກໍໄດ້ແຕ່ງດອງກັນ.

... ບ້ານໂນນຍາງແມ່ນບ້ານໜຶ່ງທີ່ຢູ່ຫ່າງໄກສອກຫລີກຈາກຄວາມຈະເລີນ ເວລານັ້ນຍັງບໍ່ທັນໄດ້ເປັນຕາແສງເໝືອນດຽວນີ້ ແຕ່ກ່ອນຍັງເປັນບ້ານທຳມະດາຂັ້ນກັບ ຕາແສງສຸຂຸມາ ແຂວງຈຳປາສັກຢູ່ ແລະ ກໍເປັນບ້ານທີ່ ທອງສີ ແລະ ບົວວັນ ທີ່ມີສຳນະໃນໂຕເລກກັບບ້ານດັ່ງກ່າວ.

ຊີວິດການຄອງເຮືອນສອງຜົວເມຍ ຄວາມຫວານຊື່ນຢູ່ໄລຍະຂອງເຂົ້າໃໝ່ປາມັ້ນ ທັງສອງຊ່ວຍກັນຄືນລະໄນລະມື້ ເວລານັ້ນບົວວັນຖືພາໄດ້ສາມເດືອນແລ້ວ ເດືອນ ໔ ຂອງປີນັ້ນ ທັງສອງກໍມາກັບເມືອແປງຖຽງນາ ແລະ ກຽມ ຫາງອນໄຖໃບພະບຽງ ແລະ ອຸປະກອນຈຳເປັນຕ່າງໆ ເພື່ອເຮັດນາໃຫ້ທັນລະດູການ.

ມື້ໜຶ່ງນະບຳສາວຕາເລື່ ບ່ອນຊົ່ງເຂົາໄດ້ຮູ້ຈັກ ກັບຄຳວ່າ "ອິດສະຫລະ" ເປັນເທື່ອທຳອິດໃນຊີວິດ... ນັ້ນບຸນເຂົາລູກແຕ່ເດິກໄປຕົກມັນ ເພື່ອໃຫ້ໄດ້ຫລາຍຂອງກວ່າໝູ່, ທັງປີ່ຍອມອ່ານນຳສາວດັ່ງກ່າວເວລາຕົກແລງມາຈະອອກບໍ່ຈາໃຫ້ໄປກ່ອນຈະໄດ້ນຳໃສ ແລະ ບໍ່ໄດ້ຖາດິນ... ບໍ່ລື່ຈາຮີບຈີບຂໍເກາະວອງຈຸລົງສາວຢ່າງໄວວາ ເພາະຍັງບໍ່ທັນ ມີໃຫ້

ມາຮອດຈັກຄືນ. ເຂົາຕື່ນຢຸບເມື່ອໄດ້ຍິນສຽງຮ້ອງຢູ່ຂ້າງ ກໍ ໄຜ່ບ້ານ... "ຫອງມານີ້" ເຂົາງວາກໄປຕາມທີ່ມາ ຂອງ ສຽງຮ້ອງ ເຫັນຄົນຢືນກົອກມືໄວ ໃນເງົາມືດ ຕົວຢ້ານຕົວ ຕົກໃຈ ສຽງນັ້ນຍັງເນັ້ນອອກມາອີກຢ່າງຂຶງຂັງ "- ມານີ້ ບັກຫອງ!" ເຂົາຕັດສິນໃຈຍ່າງເຂົ້າໄປຫາຢ່າງນ້ອຍ ກໍ ຕ້ອງແມ່ນຄົນຮູ້ຈັກກັນ ຈຶ່ງເອີ້ນຊື່ຖືກ ຖ້າບໍ່ຊັ້ນກໍຄົງບໍ່ ເອີ້ນ ຢ່າງເປັນກັນເອງດອກ. ເມື່ອເຂົ້າໄປໃກ້ຈຶ່ງຮູ້ວ່າ ອ້າຍດຳ ມີ.

ອ້າຍດຳມີ ແມ່ນຜູ້ໜຶ່ງຢູ່ໃນບ້ານໃນນຍາງ ທີ່ເປັນ ປີລະປຸກກັບທະຫານຝະລັ່ງ ລາວຖືກເກນໄປເປັນທະຫານຝະ ລັ່ງແຕ່ລາວບໍ່ມັກ ບໍ່ໄດ້ຖືປືນທະຫານຝະລັ່ງເທົ່ານັ້ນ ລາວກໍ ເອົາປືນເບີດເຂົ້າປ່າລັດຍິງຕົວພວກທະຫານຝະລັ່ງລຽນຕິດ. ພວກທະຫານຝະລັ່ງຈຶ່ງສັ່ງຈັບເປັນ ຫລືຕາຍ ຖ້າໃຜພໍ້ ໃຫ້ ລາຍງານດ່ວນ.

ແຕ່ນີ້ນັ້ນມາ ການພົວພັນຕິດຕໍ່ກັບກໍນັບມື້ນັບໃກ້ຊິດຂຶ້ນ ຮູ້ ຈັກວ່າຕ້ອງເຮັດຫຍັງແດ່ໃນໜ້າທີ່ ທີ່ໄດ້ມອບໝາຍໃຫ້ . ພວກທີ່ຖືກຂົນຂວາຍໃຫ້ເປັນອິດສະຫລະນຳກັບກໍມີບັກສ່ຽວບົວ ລາ ແລະ ບັກສ່ຽວເປີຍ.

"ເດັດຂາດຄວາມລັບນີ້ຫ້າມຈອດອອກໄປທາງນອກ, ຖ້າຄວາມລັບຫາກຮົ່ວຈາກໃຜຜູ້ນັ້ນຕາຍ!" ດຳສັ່ງ ຢ່າງ ເດັດຂາດຂອງອ້າຍດຳມີບອກແກ່ພວກເຂົາ. ແຕ່ນັ້ນມາວຽກ ງານໄຮ່ນາກໍທາງເຫີນໄປຫລາຍເຕີບ. ເປັນເຫດໃຫ້ພໍ່ເຖົ້າ ແມ່ເຖົ້າຂອງເຂົາບໍ່ພໍໃຈ ແຕ່ສ່ວນຄວາມຮັກເມຍຖະໜູ ຖະ

ໜອນໃນເວລາພວມຖືພານີ້ຍິ່ງໄດ້ເອົາອົກເອົາໃຈໃສ່ ອີຫລີ ການເຄື່ອນໄຫວຂອງພວກເຂົາແມ່ນປິດລັບສຸດຂີດ ພໍ່ແມ່ ລູກ ເມຍບໍ່ມີໃຜຮູ້ ແລະ ກໍບໍ່ຕ້ອງການໃຜສອດຮູ້ອີກ, ເວລານັ້ນ ແມ່ນເດືອນ ໙ ແມ່ນຍາມໃກ້ຈິຕໍ່ເຂົ້າສະຫລາກ ໄຫບານໃຜ ໃຜກໍພາກັນລ້ຽງຕ້ອນລ້ຽງລີ້ໜີດແລ້ວ ເຫລືອພຽງແຕ່ເຂົາ ຈຶ່ງ ເປັນເຫດໃຫ້ພໍ່ເຖົ້າບໍ່ມີຄວາມພໍໃຈຢ່າງໃຫຍ່ຈົ່ມໃສ່ຫູ ເມຍ ແລະ ຈົ່ມໃສ່ຫູເຂົາ ເມຍກໍໄດ້ແຕ່ໄຫ້ຈົ່ມໃຫ້ວ່າ ເພາະເຫຼືອ ໃຈ ແລະ ບ້ອຍໃຈໃນຖານກະທຳຂອງພົວ.

"ອ້າຍທອງເອີ່ຍ ໃຫ້ເຈົ້າເຮັດຄືບ້ານ ຄືເມືອງເພິ່ນ ແດ່ ຍາມໝູ່ລ້ຽງຕ້ອນລ້ຽງລີ້ເຈົ້າກໍຟ້າວເຮັດຟ້າວທຳ ອີພໍ່ເພິ່ນ ຈົ່ມໃສ່ຫູຂ້ອຍບໍ່ເລີກບໍ່ແລ້ວສູ້ມື້ສູ້ມື້ ເຈົ້າມີແຕ່ໄປບ້ານນັ້ນບ້ານ ນີ້ຢູ່" ຄວາມຈິງແລ້ວ ເຂົາກໍຢາກເຮັດຄືບ້ານຄືເມືອງເພິ່ນ ຢູ່ ແຕ່ວ່າຍັງມີໜ້າທີ່ໜຶ່ງທີ່ບໍ່ສາມາດບອກໃຫ້ເມຍ ແລະ ຫູ ອື່ນໆຮູ້ນຳ. ການໄປບ້ານນັ້ນບ້ານນີ້ຂ້ອຍກໍແມ່ນໄປ ຂາຍ ເຄື່ອງຂອງທີ່ຮັບເອົານຳເຈັກຢູ່ສູຂຸມາໄປຂາຍ. ການທີ່ ເຂົາເຮັດແບບນີ້ກໍເພື່ອວ່າຈະໄດ້ເຄື່ອນໄຫວນັດພົບອ້າຍ ຄຳ ມີ ແລະ ໝູ່ເພື່ອນໄດ້ສະດວກ ຈຶ່ງໃນເວລານັ້ນຈັດຕັ້ງເປັນ ໜ່ວດໜຶ່ງແລ້ວຢູ່ໃນເຂດນັ້ນ.

ໃນທີ່ສຸດ ພໍ່ເຖົ້າແມ່ເຖົ້າອົດທົນບໍ່ໄດ້ຕໍ່ພຶດຕິກຳ ຂອງ ເຂົາ ຈຶ່ງເອີ້ນພໍ່ແມ່ເຖົ້າແກ່ເວົ້າຄວາມກັນ ໄລ່ເຂົາໜີຈາກ ເຮືອນໃຫ້ປະກັບລູກສາວຂອງເພິ່ນ. ຍ້ອນເຫດພົນວ່າ ເຂົາ ເປັນຄົນບໍ່ຮູ້ດ້ານເຮັດນາ ບໍ່ເອົາຫົວໃສ່ໃຈການທຳຄອບ ນຳຄົວ ເກີດເປັນນີ້ມີແຕ່ເລາະບ້ານນັ້ນໄປບ້ານນີ້ ໄຮ່ນາຕາການບໍ່ລ້ຳ

ໄລອັດນ້ຳໃສ່ ຊຶ່ງຈາກຄວາມດຸໝັ່ນໃນເບື້ອງຕົ້ນ ກາຍເປັນດິນຊີ້ດານ. ເຂົາຍອມຮັບທຸກຢ່າງຕັ້ງແຕ່ຄ້ຳກຳເມຍ ຫາຟືນກຳ ເວລານັ້ນ ບົວອົບໄດ້ແຕ່ໄຫ້ບໍ່ຍອມກິນເຂົ້າກິນນ້ຳ ... ກ່ອນມື້ລົງໜີຈາກເຮືອນ ເຂົາໄດ້ສັ່ງເມຍວ່າ:

"ອ້າຍຍັງຮັກເຈົ້າຢູ່ ແຕ່ພໍ່ແມ່ເຈົ້າເຫັນວ່າອ້າຍເປັນດິນຊີ້ດ້ານ ອ້າຍບໍ່ກ້າຈິສູ້ໜ້າໄທບ້ານໄທເມືອງ ອ້າຍຂໍໂທດນຳເຈົ້າຫລາຍໆ ທີ່ອ້າຍຈິບໍ່ໄດ້ຢູ່ຄ້ຳກຳ ແຕ່ເຖິງຢ່າງໃດຟືນກ່າອ້າຍໄດ້ກຸ້ມໄວ້ແລ້ວຢູ່ນາສອງແຫລ່ງ ຖ້າຊາດນີ້ ບໍ່ຕາຍອ້າຍຄົງຈິໄດ້ກັບຄືນມາພໍ້ກັນ".

ນາງໄຫ້ປານວ່າໃຈຈິຂາດ ເປັນສິ່ງສະເທືອນໃຈສາອັນປຽບບໍ່ໄດ້ທີ່ພໍ່ເມຍໄດ້ຈາກກັນ ທັງໆທີ່ຍັງຮັກກັນຢູ່ ແຕ່ສິ່ງສຳຄັນທີ່ສຸດແມ່ນຖືພາແກ່ ແລະ ກໍແມ່ນແມ່ຕົວສາວ ຍິ່ງຕ້ອງການຄົນເອົາໜັກເອົາໃຈແດ່ ແຕ່ຄວາມລັບແລະຄວາມຮັກນັ້ນຢູ່ກັບຄົນລະເສັ້ນຂະໜານ ຊຶ່ງເຂົາບໍ່ສາມາດ ຈະມີປາກອອກໃຫ້ໃຜໄດ້ຍິນທັງໝົດໄດ້! ແລະ ແລ້ວເວລາ ນັດໝາຍກໍໄດ້ມາຮອດ. ຄວາມກະວົນກະວາຍຈິດໃຈກໍຍິ່ງເພີ່ມທະວີ, ເຂົາບໍ່ຮູ້ຈັກວ່າຈະເຮັດແນວໃດດີ. ໃນຄືນດ່ຳມືດຂອງວັນນັ້ນ ຕາມເສັ້ນທາງບໍ່ມີໃຜເອີ່ຍໜັງອອກມາ ຈັກຄວາມ, ສຽງນົກເຄົ້າແນວຮ້ອງແໜ່ຄວາມມືດຈາກຕີນຄົງ ແວກ- ງເຂົາເມື່ອຍຄືຄົນກຳລັງລຸກຈາກຝັນໃໝ່... ຄວາມຮູ້ສຶກເວລານັ້ນແມ່ນວົງທີ່ສຸດ ຄາຍໆຄືເຄິ່ງຫລັບເຄິ່ງຕື່ນ ທຸກສິ່ງ ທຸກຢ່າງແມ່ນຈິດຈໍ່ໃສ່ແຕ່ເມຍຜູ້ດຽວ ນອງເຫັນພາບການເຄື່ອນໄຫວຂອງນາງທຸກໆອາລິຍະບົດ ມັນເປັນພາບທີ່ສະເທືອນໃຈ

ທີ່ຫາອົບປຽບບໍ່ໄດ້. ເພາະມັນເປັນການຈາກກັນທີ່ບໍ່ຮູ້ ວັນທີ່ຈະພົບພໍ້.

"ເຮັດໃຈດີໆ ນ້ອງຊາຍ ລູກຜູ້ຊາຍຕ້ອງ ເຂັ້ມແຂງ ເຂົາໄປເຮັດໜ້າທີ່ເພື່ອຊາດ ເພື່ອປະຊາຊົນ ເພື່ອ ໝົດທຸກຄົນ" ອ້າຍຄຳມີປອບໃຈ ເໝືອນເຂົ້າໃຈຄວາມຮູ້ສຶກຂອງເຂົາໄດ້ ແລະ ເຂົາໄດ້ແຕ່ງຶກຫົວຮັບຕອບ. ຄິດເຖິງພາບທີ່ນາງຈະອອກລູກ ອາການເຈັບປວດດວນຄາງຍິ່ງເປັນແມ່ຫົວສາວຊູ້. ຄວາມຈິງແຜນການພາຍໃນຂອງພວກເຂົາກໍແມ່ນລໍຖ້າໃຫ້ນາງອອກລູກກ່ອນ ແຕ່ສະພາບການ ມັນໄດ້ສຸກງອມກ່ອນແລ້ວ ຍິ່ງຊ້າກໍຍິ່ງຈະເສຍລັບ ຈຶ່ງມັນ ໝາຍເຖິງຄວາມປອດໄພຂອງຊີວິດນຳອີກດ້ວຍ. ເວລານັ້ນ ພວກເຂົາໄດ້ອອກຈາກເຂດເມືອງສຸຂຸມມາ ແລະ ເຂົ້າຮອດເຂດດົງຕົ້ນທຸງແລ້ວຍິ່ງໄກຈາກບ້ານກໍຍິ່ງຄິດເຖິງ... ນີ້ໜຶ່ງສຽງປືນໄດ້ດັງ ໂປ່ງ! ໂປ່ງ! ຢູ່ຂ້າງຄ້າຍປົດລັບຂອງພວກເຂົາ.

"ສັດຕູ" ສຽງອ້າຍຄຳມີຮ້ອງສັ່ງພວກເຂົາ ຕ່າງມາກັບສຸມລະອົບຫາບ່ອນກັ້ງບັງ. ເວລານັ້ນພວກເຂົາ ໑໔ ຄົນມີແຕ່ປືນ ອັງກະເລ ໔ ກະບອກ ຄວາມຢານກົວ ຂອງເຂົາຕໍ່ສຽງປືນເຮັດໃຫ້ປວດຂີ້ປວດຍ່ຽວພໍທ່ງກັນ. ຈຶ່ງເປັນ ເທື່ອທຳອິດໃນການຖືກປະທະກັບສັດຕູ... ສຽງລະເບີດ ຕູມ! ເຂົານິ່ງໄປຫູດັບບໍ່ໄດ້ຍິນສຽງໝົດ ສີແສງສວາງ ແລະ ຫົວພໍວິນເບິ່ງເຫັນເລືອດເທົ່ານັ້ນ ກໍໝົດສະຕິໄປເລີຍ. ເປັນລາວງຄືກັບຝັນ ປະກົດວ່າເຫັນບົວອີນກຳລັງພົວເມົາ ຢູ່ກັບ

ການປິ່ນປົວພັນຍາດແຜຢ່າງເອົາໃຈໃສ່ ທັງເຮັດ ທັງປອບໂຍນໄປນຳ "ອ້າຍຫອງອົດທົນເຮັດໃຈໃຫ້ດີ ບໍ່ເປັນຫຍັງດອກ ອ້າຍມີຄວາມປວດໄໝແລ້ວ ພັກຜ່ອນອີກໜ້ອຍໜຶ່ງ ກໍເຊົາ" ປະກົດວ່ານາງບັນຈົງໂຊມເອົາເຂົາຢ່າງ ທະນຸທະຫນອມ ຣອຍຍິ້ມທີ່ປະກົດອອກຈາກຣິມສົບຂອງນາງ ເຮັດໃຫ້ລືມຄວາມເຈັບປວດໄປຫມົດ. ເຂົາພະຍາຍາມຈະຂະຫຍັບໂຕລຸກຂຶ້ນ ແຕ່ແລ້ວກໍບໍ່ສາມາດຈະເຫນັງໂຕໄດ້... ກິ່ນຄຳດວນແຊມພົມນາງທີ່ເຂົາຂຶ້ນ ແລະ ເອົາມອບໃຫ້ນາງ ມັນໄດ້ເຮັດໃຫ້ພູມໃຈເຫລືອທີ່ສຸດ ທີ່ຍາມໃດກໍຍັງປັກໄວ້ພົມເພື່ອເປັນສັນຍາລັກເມື່ອເວລາພວກເຂົາຮັກກັນໃຫມ່ໆ ແລະປຽບຄວາມຮັກນັ້ນວ່າ "ບໍ່ມີສິ່ງໃດຫອມໄປກວ່າຄວາມຮັກ ຂອງພວກເຂົາເຫມືອນກິ່ນຫອມຂອງດອກຄຳດວນ" ແລະ ແລ້ວຮ່າງຂອງນາງກໍຫາຍວັບໄປເຫມືອນປະຕິຫານ ເຂົາ ລະເມີຮ້ອງນຳຢ່າງຫລົງຕົວ "ບົວວັນ!" ຄວາມເຈັບປວດໄດ້ເພີ່ມຫນັກຂຶ້ນອີກ ເມື່ອຮູ້ເນື້ອຄືງ.

"ເປັນແນວໃດຫອງ?" ອ້າຍຄຳມີຖາມເປັນຄົນທຳອິດ. ເຂົາກັດແຂ້ວກາດໆ ຕາງຄຳຕອບຫມູກອງນັ້ງ ດັ່ງໄປອ້ອມຂ້າງເຝົ້າດູອາການຢ່າງເປັນຫວງ ໃນເວລາຫມົດສະຕິນັ້ນ ພວກຫມູໄດ້ນຳເອົາເຂົາອອກຈາກບ່ອນສູ້ຮົບໄປສູ່ ບ່ອນປອດໄພ. ໃຜກໍຖາມອາການດ້ວຍຄວາມເປັນຫວງ ໃນນັ້ນມີຜູ້ຍິງສາວແປກຫນ້າຮ່ວມນຳຜູ້ຫນຶ່ງນັ່ງຄຽງຂ້າງເຂົາຢູ່ ເວລາລະເບີດແຕກນັ້ນ ແຮງຂອງມັນໄດ້ເຮັດໃຫ້ຂອຍໄມ້ທີ່ເຂົາຫມູບຢູ່ນັ້ນປະທະໃສ່ກັບຂະຫນັບຢ່າງແຮງ ແລະ ສະເກັດລະ

ເບີດໄດ້ປີກເຂົ້າສວ້າງເລີກເຕີບ. ຕ້ອງໄດ້ຜ່າຕັດອອກ ເວລານັ້ນ ອ້າຍຄຳມີ ແລະ ນາງແພດສະມາຊິກໜ້າໃໝ່ ໄດ້ມາປອບໃຈໃຫ້ອົດທົນການຜ່າຕັດຈະໃຊ້ເວລາປະມານ ໑໕ ນາທີກໍ່ແລ້ວ ຄວາມເຈັບປວດເວລານັ້ນ ສຸດທີ່ຈະອົດກັ້ນ ໄດ້ຈຶ່ງໄດ້ແຕ່ຄາງ ແລະ ກັດແຂ້ວກາດໆ.

ການຜ່າຕັດແບບງ່າຍໆໄດ້ດຳເນີນໄປທ່າມກາງຄວາມເຈັບປວດ. ເພົາມີດໃຫ້ແດງ ເພື່ອຂ້າເຊື້ອໂລກ ມືຂາ ຖືກມັດໄວ້ຈົນຕິງບໍ່ໄດ້ ປາກມັດຜ້າຂາວມາໄວ້ ເພື່ອກັນ ສຽງຮ້ອງຄາງ, ເຫື່ອປານເມັດໝາກເຂົ້າໂພດໄຫລ ຜ່ານໜ້າເມັດແລ້ວເມັດເລົ່າ. ເວລາ ໑໕ ນາທີເໝືອນ ໑໕ ຊົ່ວໂມງ. ໃນທີ່ສຸດສະເກັດລະເບີດກໍອອກມາໄດ້ ນາງແພດໄດ້ເອົາຢາຟື້ນຊຳຕົວໄປມືປ້ອນໃສ່ປາກເຂົາ ແລ້ວບອກວ່າ ທຸກຢ່າງປອດໄພໝົດ ແກ້ມັດໄດ້... ໃນທີ່ສຸດເຂົາກໍຫລັບນອນໄປອີກ...

... ຈາກວັນນັ້ນ ເຖິງວັນນີ້ເປັນເວລາ ໔໐ ກ່ວາປີ ເຂົາຍ່າງໄປຍັງນາທີ່ເຂົາໄດ້ຖອກເຫ ແລະ ອຸທິດຄວາມເປັນໜຸ່ມຄະນອງທັງຊີວິດຈິດໃຈໃສ່ພື້ນແຜ່ນດິນນີ້ ເພື່ອສ້າງພື້ນແຜ່ນດິນແມ່ໃຫ້ອຸດົມສົມບູນ. ກົກຫວ້າໃຫຍ່ທີ່ພວກໄທບ້ານຊາວ່າມີພີເພດບອນພວກເຂົາເຄີຍນັດພົບສົ່ງຂ່າວຄາວເຄື່ອນໄຫວຂອງສັດຕູເວລາກາງຄືນ ໄດ້ຕາຍໄປຕາມການ ເວລາຍັງຄົງເຫລືອແຕ່ຄວາມຫວ່າງເປົ່າທີ່ເປັນຄວາມຊົງຈຳ ພໍເລື່ອນລາງ. ແຕ່ກົກດຳດວນທີ່ເຄີຍຂຶ້ນ ແລະ ເໜັບ ແຊມພົມໃຫ້ກັບບົວວັນຍັງຄົງຍືນຍົງ ສົ່ງກິ່ນຫອມຫວນ. ເຖິງການ

ເວລາຈະຜ່ານໄປນານແສນນານ ດອກລຳດວນດອກນັ້ນທີ່ປັກລົງໃສ່ເກົ້າຫີນເໝືອນດວງໃຈຂອງເຂົາໄດ້ປັກໄວ້ ຊຶ່ງກາງໃຈນາງຕະຫລອດເວລາ. ເຖິງປະເທດຊາດໄດ້ປ່ຽນແປງລະບອບການປົກຄອງຈາກລະບອບສັກດີນາມາເປັນ ລະບອບປະຊາທິປະໄຕຂອງປະຊາຊົນຢ່າງສົມບູນກໍຕາມ ແຕ່ສິ່ງໜຶ່ງທີ່ບໍ່ປ່ຽນແປງຈາກບົວວັນກໍຄືຫົວໃຈທີ່ຍັງລໍຄອຍ ແລະ ຄວາມຫວັງຈາກເຂົາ. ເຂົາໝ້າອາຍໃຈທີ່ສຸດ ທີ່ຮັກສາ ຄຳເວົ້າຂອງລູກຜູ້ຊາຍໄວ້ບໍ່ໄດ້.

"ຕາບໃດທີ່ຫອຍຂະໜວນບໍ່ອັ້ນ ຫົວໃຈຂອງອ້າຍຈະຍັງຫວ່າງໄວ້ສຳລັບນ້ອງສະເໝີ" ຄຳເວົ້າປະໂຫຍກ ນີ້ມັນບໍ່ໄດ້ຕາຍໄປກັບການເວລາເລີຍ, ມັນຍັງຢູ່ຄຽງຄູ່ກັບຫົວໃຈບົວວັນ ແລະ ລຳດວນທີ່ສົ່ງກິ່ນຫອມຫວນຢ່າງບໍ່ຮູ້ເສີຍ!.

# ເຊິຍບ້ານດ່ານ



ໂດຍ

ໄຊສຸອັ້ບ ແພງພິງ



ລູກເຂີຍປະທານບ້ານເຊີນຂ້ອຍຂຶ້ນນັ່ງເທິງ ເຮືອນເຊຍ. ລາວນຸ່ງແພອີໂປ້ຜືນເກົ່າຫມາງ ໃນມືຍັງມີ ຜ້າ ລືມເຫລື້ອມມາບາງ. ມືວຊີ້ເບື້ອງຂວາຖໍ້າຄ້ອຍຜ້າຂາດ ສັງເກດສຶກຈຶ່ງຮູ້ວ່າຕັ້ງໃຈໄວ້ຮອງມືຍາມເຫລົ້າຕອກ. ເບື້ອງໜຶ່ງ ມືບຫໍ້ຕານແກຫຸ້ມຫໍ້ອນຊີ້ນໄວ້ເປັນປັ້ນງ ເມື່ອແຍງໃສ່ ນາງເນຍແລວປາບກາດຈາບໄຂ. ຄອນຊີ່ຍິ້ມຄໍາວ່າ "ຫນານິນຮູບໄຂ່" ຂອງເມີ່ນມາຫລູບ ເພາະໃບໜ້າຂອງນາງ ເກືອບຄືຮູບໄຂ່ອີ່ຫລີ ປະກອບດ້ວຍຂົນສີບບາງ, ໜັງຕາສອງ ຊັ້ນ, ອືນຕາອາວຍາວ. ພົມເປັນລອນຫຍໍ້ານະຈາດ. ແລະ ເມື່ອເສືອຕຕາເບິ່ງແລວໂລດບໍ່ເຫັນ ເພາະນາງໄດ້ກິນເຂົ້າຫຼາມບໍ່ສຸກມາຫລາຍເດືອນນັ້ນເອງ.

ສີໄມ້ທຶກໄມ້ພາງ ແລະ ຫຍ້າມຸງຫາໃຫ້ຄຶດອອກໂລດວ່າເຮືອນນ້ອຍແບບພັ້ນເມືອງລາວລຸ້ມຫລັງນີ້ປູກບໍ່ທັນຮອດປີ.

- ເຊີນກິນບຫໍ້ກີນທ່າ ກອນອາຍມິນມອນ, ນາງວິລະວອນ ເຈົ້າພາຍປີນໆອກນຫໍ້ໃຫ້ຂອຍ. ຜູ້ພົວນັ່ງຖຶດໄປພື້ນຕຸະກັບຢາສູບມາສູ.

- ເຊີນອາຍ... ນ້ອງແຫມັກຢາປູກ ບໍ່ຮູ້ວ່າອີຖືກຄໍອ້າຍຫຼ.

- ເອົາໄດ້ທັງນັ້ນແຫລະ! ຂ້ອຍເລີ່ມເອົາໃບຕອງແຫ້ງມັນຢາ.

- ຢູ່ເຮືອນສົ່ມເຖົ້າມີຫລາຍພີ່ຫລາຍນ້ອງ ຢ້ານອ້າຍອີທີ່ນຫວາຍ ມາແວເຈົ້າຢູ່ເຮືອນນ້ອງນີ້ ໄດໄຂ.

- ບໍ່ຕີບໍ່ຮິດອກ, ຕົກບ້ານຄາວເມືອງໄດ້ພົບພໍ້ຜູ້ຮັກ ຊູ້

ແນວແບບນີ້ ກໍນັບວ່າໂຊກເຂົ້າຂ້າງແລ້ວໄດ໋ຫນີ້.

ຂ້ອຍຄິດບໍ່ເຖິງວ່າ ຄືນທີ່ສາມຂອງການເດີນທາງ ເຮືອຈາກຫລວງພະບາງຂຶ້ນຫາຕ້ວຍຈາຍໃນລະດູນ້ຳນ້ອຍ ຈະໄດ້ແວ່ກິນເຂົ້າເຈົ້າເຮືອນນ້ຳທິດບຸນທີ ລູກເຂີຍຂອງປະທານບ້ານບ້ານດ່ານ. ສອງຄືນຜ່ານມານັ້ນ ນອກຂ້ອຍຕ້ອງນອນ ນຳເຮືອ. ນອນຟັງສຽງນ້ຳກະທົບຝັ່ງແລ້ວກັບມາກະທົບເຮືອດັງລ້ຽງແລບງ ຫນ້າບໍ່ມີແຕ່ລະສອງຊົ່ວໂມງແອັດເຮືອ ຕ້ອງຕຶດຈັກສູບນ້ຳອອກຈາກເຮືອ. ສະຫລຸບແລ້ວໄດ້ຫລັບແຕ່ຕາ,ສ່ວນຫູຕ້ອງເຝົ້າຍາມຮ່າງກາຍຢູ່ຍັ້ງຄືນ.

ຄືນນີ້ຈັ່ງໃດກໍຈະຂໍຢຽດເບິ່ງດັກາງ !

- ອ້າຍພິນພອນ, ສູບຫວານສູບຢາແລ້ວລົງອາບນໍ.ຄົນຄ່າຫລາຍມັນຈິຍາກ...ນ້ອງຢາກວ່າມັນບໍ່ຢາກປອດໄພ.

ທິດບຸນທີກັບຂ້ອຍອາບຢູ່ທ່າເຫນືອ ອາວທາງຈາກ ຜູ້ຄົນແດ່. ດວງຕາເວັນລີ້ຢູ່ສັນພູເບື້ອງຝັ່ງໄທ ສາດສີເຫລືອງປົນແສດກະທົບກັບຟອງນ້ຳ ເຮັດໃຫ້ຂ້ອຍຄິດພໍ້ແສງໄຟຟ້າ ຂອງນະຄອນຫລວງ, ສຽງອຶກກະທຶກຂອງລົດລາ ແລະ ກິ່ນຄາວເຫື່ອຂອງຜູ້ຄົນຕອນແຫຍ້ກັນເບິ່ງຈ່ວງເຮືອ ຢູ່ແຄມຂອງ ຕໍ່ຫນ້າທາວັດຈັນ.

ທິດມູດຈ້ວມລົງບາດໜຶ່ງ ໄປໄລຂຶ້ນມາເອົາມື ເສີຍຜົມແລ້ວກໍປິ່ນຫນ້າໄປຫາຝັ່ງເບື້ອງກົງກັນຂ້າມ.

- ອ້າຍພິນພອນ ທັນໄດ້ຍິນແລ້ວບໍ່ເລື່ອງໂຈນມາ ລັກຄວາຍ ?

- ບໍ່! ຂ້ອຍຈົງໃຈຕອບ.

- ຄວາຍຂອງຕາແສງບ້ານດ່ານນີ້ ເສຍຢາກວ່າເຖືອນລະສືບກວ່າໄຕ - ຍອນພວກໄຈນ ສິນທິບກັບນັດທຶ່ນຂ້າມມາລັກ. ກອງຫຼອນ ແລະ ເຈົ້າໜ້າທີ່ພວກເຮົາສຸດທີ່ ສະກົດລັດຕ້ອນ ແຕ່ກໍຍັງເສຍຢູ່. ແນວວ່າຄວາຍປ່ອຍໄປຕາມ ດົງຕາມປ່າ.

- ເປັນແນວນີ້ກໍຈິໜີດແທ້ໄດ໋. ເປັນຫຍັງບໍ່ຜູກບໍ່ລ່າມ?

- ລ່າມໄວ້ໃຕ້ລ່າງໃຕ້ເລົ້າກໍເສຍ ລ້າຍພອນເຮີຍ . ບາງຄັ້ງເຈົ້າຂອງຕັ້ງເຈດຕະນາເຮັດເສຍ ເພາະ ລາຄາມັນແພງແດ່ ໂຕໜຶ່ງໄດ້ຕັ້ງ ໔-໕ ພັນພູນກໍ!

ຂ້ອຍຄຶດນ~~ອນຸນ່າສານວນທອງທີ່ບຸທີ່ຂອງລາວສີສະງວໄຕ~~ເມືອງ ພິພັອນແດ່ບາງຄຳ ອັນພິເສດແມ່ນຄຳວ່າ ເຈດຕະນາເຮັດເສຍຫັ້ນແຫລະ.

ຢູ່ໃສກໍດີ ຈະແມ່ນຢູ່ການະຄອນຫລວງຫລື ທ້ອງຖິ່ນແບບນີ້ ຖ້າຫາກວ່າຍັງມີພວກບໍ່ດີ ພວກໜອນແທບຊີໃນໄສແລ້ວ ຈິສະກັດອັດຕີນປາກໃດມັນກໍມີຮູຈອດຊຸຊຶ່ວ... ຄັນເອັ້ນໄປເວົ້າວ່າຕັກເຖືອນ ກໍກຸ້ນແຕ່ຫົວທີ່ ບໍ່ພໍຄາວກໍ ເຮັດຄືນອີກ. ເມື່ອຍເວົ້າເມື່ອຍວ່າແລວ ຄັນບາໄປກົກກັນ ຈຸມຊັງພັດເວົ້າໃສ່ອ້ານາດການປົກຄອງວ່າ ຊຸນແຮງ ໂພດ . ບາດໂຕເອງກໍ່ຄວາມບໍ່ສະຫງົບໃຫ້ສັງຄົມໂລດບໍ່ຄິດນໍ້ ຢາກເວົ້າວ່າຫາງຫາບໍ່ຮູ້ເມື່ອ. ຢູ່ທ້ອງຖິ່ນແມ່ນລັກຂາຍຄວາຍ , ສ່ວນພວກໜອນຢູ່ໃນໂຕເມືອງໃຫຍ່ໂລດຂາຍແມ່ຈ້າງ... ເອີ່ເອີ້... ພາກັນເຮັດຜິດກົດໝາຍບ້ານເມືອງແລ້ວ ຈັງພັດຮ້ອງໄຮໄຫສະກາ ຢາກໃສ່ຈາດຮ້ຽງມີເຂັ້ມແຂງ ໄວ ໆ

ໂອງ... ພວກບໍ່ມີຫົວໃຈ, ພວກໝອນແຫຍ່ຊື່ເຊີ້ຍ!

ຄືນນັ້ນ ທິດບຸນທີ ຂ້ຽວຈິດເຂົ້າຈອຍກ້ຽວຊ້ອຍແລ້ວ ກໍ ພາຍປືນເຫລັກຍາວລົງເຮືອນເກືອບລືມລາຂ້ອຍ. ເຫລືອ ພ້ຽງພໍ່ເຖົ້າ, ວິລະວັນ ນ້ອງສາວຫູຖືດແມ່ເຈົ້າເຮືອນ ຢູ່ ນ້ຽນມາເຂົ້າມາປາ.

ແມ່ເຈົ້າເຮືອນນັ່ງອີງຝາຢູ່ໃນເວີ້າມືດ ດົນໆຈຶ່ງໄດ້ຍິນ ສຽງພິກສົງອິດອາດເທື່ອໜຶ່ງ. ຕາມຮູ້ຫວ່າງດ້າຍແລ້ງ ນີ້ ວ່າ ຄອງສູ້ນີ້ ແລະ ຂ້ອຍກໍໄດ້ຍິນລາວເວົ້າກັບພົວວ່າຫອງ ປື້ນຂັ້ນມາຫລາຍເທື່ອແລ້ວ. ເລື່ອງນີ້ບໍ່ເຮັດໃຫ້ທິດບຸນມີວິດ ເອັ້ນວຽກງານກອງຫລອນແຕ່ຢ່າງໃດ. ຫລືບາງທີ ເຂົາ ອາດຈະໄວ້ໃຈພໍ່ເຖົ້າ ແມ່ເຖົ້າ ໂດຍສະເພາະຢ່າງຍິ່ງ ວິ ລະວັນນ້ອງເມຍຜູ້ເປັນແມດປະຖຽວຄືນປະຈຳຕາແສງກໍເປັນ ໄດ້.

- ແຕ່ກ່ອນຕອນບໍ່ທັນມາເປັນເຂີຍ, ພໍ່ນີ້ບໍ່ເຂົ້າໃຈມັນ ມີນພອນເຂີຍ, ພໍ່ເຖົ້າລາກສຽງເຄືອນາຫາຂ້ອຍ ພາຍທັງ ທົ່ງດວັນຢາອອກຈາກປອດ.

- ບໍ່ເຂົ້າໃຈບ່ອນໃດ? ລູກເຫັນວ່າສະຫາຍບຸນທີເປັນ ຄົນເອົາການເອົາງານດີຢູ່. ເກັ່ງທັງວຽກບ້ານ ເກັ່ງທັງ ວຽກເຮືອນ!

ສາວແມດຍິ້ມອາຍໆວາກໜ້າຫລົບແສງໄຟ ກະຕຽວ ນ້ຳມັນກາດ.

- ກໍຍ້ອນມັນເກັ່ງ ມັນຂະຫຍັນ ມັນເຄັ່ງຂັດຕໍ່ ຄຳສັ່ງ ຫລັກລາຫລັກການໂພດທັ້ນແລ້ວ. ພີ່ນ້ອງບາງຄົນບໍ່ຄ່ອຍມັກ

ນຳປານໃດ...ເວົ້ານັ້ນຕອນວານໄຫບ້ານໄປ ສ້ອນແປງ ຫາງ ມັນກໍໄປນຳຮອງນຳຮຽກໃຫ້ຄືບຈຳນວນຕາມ ເພີ່ນ ສັ່ງ. ຜູ້ແອວຍາວແດກໍເລີຍອັດຂອງຈິ່ມວ່າສຳມະປີ.ຄົນອ່າ ວານໄຫບ້ານປູກໂຮງຮຽນແປງໂຮງໝໍ ມັນກໍເປັນ ເຈົ້າກີ້ ເຈົ້າການແບ່ງເຮືອນນັ້ນໃຫ້ໄດ້ຊື່, ເຮືອນນີ້ໃຫ້ໄດ້ ເສົາ. ຍານຕົ້ວຍານຍົກກໍຊຸມແຫຼຸມວ່າ ແນວເຄີຍສ້າງເປັນເດືອນ ເປັນປີ ບັກທິດກໍຊຸມເຮັດແຕສອງສີ່ນເນີ້ວ. ຜູ້ອິດຜູ້ເມື່ອຍກໍ ຈົ່ມຂັ້ນຈົ່ມລົງຮອດຫູມໍ່ຈົນບໍ່ເປັນຕາຟັງ.

- ລູກວ່າແນວນັ້ນມັນຄືລະບໍ່ພໍ່ເອີ້ຍ, ສະຫາຍ ບຸນທີ ຍັງໜຸ່ມແໜ້ນໃຈຮ້ອນ ຈິດຫ້າວ ກໍຫາມະດາແລວ. ຮອນ ໃສ່ວຽກໃສ່ງານ... ໃຈກໍ້ຮອນວຽກກໍແລວ! ຄືລະບໍ!

- ຄືຢູ່ຫາກຜູ້ອື່ນຫັ້ນເດ!

- ຈີໃຫ້ເພີ່ນເຢີ້ຍວ່າ: ຈາວໜຸ່ມ-ເອັນຍານ- ຄານ ເຄື່ອຍ-ເມື່ອຍອ່ອນ-ນອນຫລາຍຈົ້ນບໍ! ເຮົາບໍ່ຈາແລ້ວຜູ້ມີ ປາກຫາກເວົ້າຫາກຈົ່ມ, ແນວຜູ້ຮັກມີຜູ້ຈັງມີ. ທິດບຸນທີຍັງ ໜຸ່ມ, ສະໄໝພໍ່ຍັງໜຸ່ມເດຈົ້ນນາ ?

- ~~ໂພດ ພໍ່ກໍຄືດດັ້ນແຫລວ-~~ ບໍ່ແມ່ນຂອງຢອກເຮັດ ວຽກບໍ່ຮູ້ເມື່ອຍ ກິນກໍບໍ່ຮູ້ອີ່ມ ເຂົ້າແອບນີ້ຢາກວ່າບໍ່ມໍ...

- ພໍ່ເອີຍ ຮອດດຽວນີ້ຍັງມີບາງຄົນ ນັກຄືແຕ່ຄົນໜຸ່ມ ເລືອດຮ້ອນ, ເຄັ່ງຄັດ, ເອົາກີ້ເອົາການໂພດ!

- ອີ່ພໍ່ນີ້ກໍຜູ້ໜຶ່ງ ທີ່ເຄີຍເວົ້າແບບນັ້ນ. ເພີ່ນລືມຄາວ ສະໄໝເພີ່ນເປັນບາວ, ລູກສາວສະແດງຄຳເຫັນຕອບໂຕ ພໍ່ ເພື່ອເຂົ້າຂ້າງຂ້ອຍ. ແລວນາງກໍເວົ້າຕໍ່:

- ອ້າຍເຊີຍເກືອບບໍ່ໄດ້ກັບເອື້ອຍວອນກໍຍ້ອນອີ່ມ່! ຄັນບໍ່ທໍ່ໄດ້ຄວາຍຄືນໄລດແມ່ນແລ້ວຊາດ! ພວກເຮົາມີດວງຮບໜ້ອຍໜຶ່ງ.

ຍິນສຽງລົມພັດປາຍໄຜ່ຄອບກັບສຽງພຶກຸຄີງຂອງ ວີລະວອນເທີງພື້ນປາກ ພ້ອມທັງສຽງຄວນຄາງຄ່ອຍໆ. ວີລະວັນໂຍລຸກໄປເບິ່ງເອື້ອຍແລ້ວກັບມານັ່ງເທົ້າແຂນຢູ່ຕໍ່ ໜ້າຂ້ອຍຕາມເຄີຍ.

ພໍ່ເຖົ້າຄິດສະເດືອກພໍ້ແກ້ວເຫຼົ້າ ຈຶ່ງເຊີຍບຸນທີ ບອງຢາຄີປີແຮງ ຈຶ່ງຊວນຂ້ອຍຊີມ ແຕ່ກໍຖືກລູກສາວຄັດຄ້ານວ່າຂ້ອຍຫາກໍກິນຢາຕ້ານໄຂ້ຍຸງ ບໍ່ຄວນໃຫ້ກິນເຫຼົ້າ ເພາະຢາຈະໝົດລິດ. ພໍ່ເຖົ້າເຫັນພ້ອມນຳ.

ຂ້ອຍຄິດວ່າພໍ່ຈະຊຸຊີຄືຜູ້ອື່ນ ເພາະນິດໃສເກົ່າແກ່ຂອງລາວເຮົາແມ່ນຢາກຊຸຊີໃຫ້ແຂກກິນເຫຼົ້າ, ເມົາຫລາຍຍິ່ງຮັກແພງຫລາຍ ວ່າຊັ້ນ! ເອີ້ຄັນແມ່ນພວກເຮົາເອງ ກໍຍັງໄດ້ແດ່ ສ່ວນໄທເມືອງອື່ນເມືອງໄກຜູ້ມີປະເພນີຕ່າງ ເຮົາເພີ່ນຈິເຂົ້າໃຈພວກເຮົາແນວໃດ? ແນວເກົ່າແກ່ທີ່ບໍ່ ເຂົ້າທ່າ ກໍຄວນຄິດນຳກັນຫັ້ນແລ້ວ.

ພໍ່ເຖົ້າຂໍຕົວກັບຄືນເມືອເຮືອນຫລັງໃຫຍ່ ເໝືອນ ຕັ້ງແກ້ງໃຫ້ຂ້ອຍຢູ່ນຳລູກສາວເພິ່ນຕາມລຳພັງ...

ພາຍຫລັງທີ່ກຽວວຽນຖານເຖິງຊີວິດການເປັນຢູ່ ແລະວຽກງານຈຳນວນໜຶ່ງແລ້ວ ວີລະວັນ ກໍເລົ່າເລື່ອງສູ່ຂ້ອຍຟັງວ່າ:

"ແຕ່ກ່ອນພໍ່ເຖົ້າບໍ່ມັກອ້າຍບຸນທີ ເພາະລາວເປັນ ທົວ

ໜ້າກອງຫລອນບ້ານທີ່ເຄັ່ງຄັດ ເຂັ້ມງວດຕໍ່ໄທບ້ານ, ເວລາໄປມາກາງຄ່ຳກາງຄືນກໍ່ຄືເວລາອອກແຮງງານລວມ , ລາວມັກຊຸ່ມຊ້ອນຕ່າງໝູ່ມິລຶກ. ນັ້ນອງບາງຄືນກໍ່ເອົາ ໃຕເຊື້ອຍວວອນວ່າ ເອົາໄປແລ້ວຈິ່ບໍ່ມີຄວາມສຸກ, ເກີດເປັນນີ້ເປັນເວັນຈະຖືກອ້າຍທຶດບັງຄັບ, ຈະມີແຕ່ພາຍປືນ ໄປນຳກອງຫລອນເຄື່ອນທີ່ສະກັດລັດຕີສຶດຢູ່ຈັ່ງຊີ້ນ ຈິເອົາ ຍານໃດມາເບິ່ງແຍງເຮືອນຈານ... ບັດແລ້ວຄືນໜຶ່ງໂຈນມາຈູງເອົາຄວາຍຢູ່ກອງເລົ້າເຂົ້າ. ພວກມັນມີອາວຸດຄົບມືຫັ້ນແລ້ວຈຶ່ງກ້າຢາມນັ້ນ. ອ້າຍທຶດບໍ່ຢູ່ ບໍ່ມີໃຜຮູ້ວ່າລາວ ໄປທາງໃດ, ກອງຫລອນກໍບໍ່ເຫັນຈັກຄົນ. ໄທບ້ານໃກ້ເຮືອນຄຽງ, ໄທເຮືອນເຮົາ ແລະ ກະໄຕອີ່ມ່ອງກໍໄດ້ແຕ່ຈອງຟາເບິ່ງ ໔-໕ ຄົນເຂົາປ່ອງຄວາຍໄປຢ່າງສະບາຍ... ກະວ່າຄົນເຕີບຈຶ່ງໄດ້ຍິນສຽງປືນທາງໃຕ້ບ້ານ, ແດນທ່າຕົ້ນງີ້ວໃຫຍ່ ໃຕ້ບ່ອນເຮືອພວກອ້າຍຈອດຫັ້ນແຫລະ. ຕໍ່ສູ້ກັນດົນເຕີບ. ຕື່ນເຊົ້າມາຈຶ່ງຮູ້ວ່າພວກໂຈນມັບຄາທີ່ ຕົວໜັດພ້ອມກັບຄວາຍອີກສອງໂຕ ສ່ວນເຫລືອເຈັດໂຕ ອ້າຍທຶດກໍຈູງຄືນມາມັດໄວ້ກອງເລົ້າຄືເກົ່າ. ຄັນບໍ່ທໍ່ອ້າຍທຶດແນ່ບໍ່ມີຮອດຄວາຍຈິເຮັດນາ ! ແລ້ວນັບແຕ່ມື້ນັ້ນມາ ອີ່ ມ່ຈຶ່ງຄ່ອຍເຂົ້າໃຈລາວ ແລະ ຍອມຮັບຮັບໜາກອ້າຍທຶດບຸນທີ".

ຂ້ອຍນຶກຟັງການເລົ່າຈາກຮີນສີບບອບບາວ ຂອງຍິງສາວ ພ້ອມທັງຄິດຕໍ່ໄປວ່າ ຄັນຈັ້ນອ້າຍບ່າວທານບ້ານຢ້ານບ່າ ຢ້ານຄວາມມຶດຄືບ່າວວຽງຈັນນີ້ຄືຈິບໍ່ມີຫວັງໄດ້ ເປັນ

ເຂີຍເມີ້ນລະນໍ.

- ອ້າຍມິນນອນ, ຖ້າບຶດໜຶ່ງເບີ ນ້ອງເບິ່ງ ເອື້ອຍ ວຽນຫຼີກກ່ອນ.

ຂ້ອຍໄດ້ຍິນສຽງຄວນຄາງຂອງວິລະວອນດັງແລ້ວ. ຄວາມເຈັບປວດຕອນນີ້ ແມ່ຍິງເທົ່ານັ້ນຮູ້ດີດອກ. ວິລະວັນ ເສີບເອົາໄປເກັບກ້ຳຢູ່ໃນຄີວ ແລ້ວອອກມາຖາມເອື້ອຍຢູ່ຊຸມ ຊຸມ. ຂ້ອຍບໍ່ຮູ້ຈະເຮັດແນວໃດຈຶ່ງມັນຢາປູກສູບ.

ພໍດີຈະໄດ້ຢາສູບກໍໄດ້ຍິນສຽງປືນ ແລະ ສຽງລະເບີດ ດັງມາແຕ່ທາງໃຕ້ບ້ານ. ຈຶ່ງແຕ່ວ່າ ມີສຽງລະເບີດ ສາມ ເທື່ອ.

ເປັນແນວໃດກໍບໍ່ຮູ້ ຂ້ອຍຟ້າວຈັບກະຕຽງໝັ້ນໄປຫາວິ ລະວອນ. ນາງລຸບທ້ອງຂອງໄຫ້ຄວນຄາງ, ໜ້າບຶດປາກ ບຽວບ່ອນຄວາມເຈັບປວດ, ເມັດເຫື່ອຟູ້ຂຶ້ນຕາມໃບ ໜ້າ ແລະ ຄອກຄໍ.

ຂ້ອຍລືງເຮືອນໄປເອີ້ນພໍ່ເຖົ້າແມ່ເຖົ້າຢູ່ເຮືອນໃຫຍ່. ພວກແມ່ປ່າແມ່ນາຍ ຊຶ່ງຜ່ານຊີວິດມາຫຼາຍແລ້ວ ມາກົ້ນ ຫຸ້ມເບິ່ງແຍງຈົນເກືອບເຕັມເຮືອນ ໂດຍບໍ່ລຳໄລ ນຳສຽງ ປືນສຽງລະເບີດ ຫລືນອກເມີ້ນລ້ວງແລ້ວຕໍ່ບໍ່.

ພໍ່ເຖົ້າຈວນຂ້ອຍລົງໄປນັ່ງສູບຢາຢູ່ຂອບໄມ້ ກ້ອງຮົ່ມ ຂາມໃຫຍ່ແຄມຕະຫລິ່ງ. ເມີ້ນເລົ່າພິດຕິກຳອັນອົງອາດກ້າ ຫານ ໃນການປົກປັກຮັກສາບ້ານເກີດເມືອງນອນຂອງຈາວ ໜຸ່ມກອງຫລອນບ້ານຖ່ານ ຮວມກັບທະຫານຕຳຫລວດໜຸ່ມ ຊຶ່ງບໍ່ໄດ້ຫລັບໄດ້ນອນເປັນປົກກະຕິ...

ຄວາມລົມພວກຂ້ອຍຍືດຍາວ ເພາະບໍ່ຮູ້ວ່າຈະ ເຮັດຫຍັງດີ ຖ້າຂຶ້ນໄປເທິງເຮືອນກໍຊ່ອຍຫຍັງບໍ່ໄດ້

ເດິກທ່ຽງຄືນແລ້ວ ທິດບຸນທີ ຍັງບໍ່ທັນກັບມາ. ຂ້ອຍຮູ້ສຶກເປັນເວິ່ງວາງ ເພາະຢ້ານວ່າຈະມີອັນເປັນໄປ. ພໍ່ເຖົ້າກໍເຊັ່ນກັນ...

ໄດ້ຍິນສຽງແອນ້ອຍເກີດໃຫມ່ຮ້ອງໄຫ້ອະແງ່-ອາແງ້ ພ້ອມກັບໄກ່ເຈົ້າຫລິກຂັນຂ້ອນແຈ້ງ. ຫລານຊາຍ ແລ່ນມາບອກວ່າ ວິລະວອນ ອອກລູກແລ້ວ ເປັນຜູ້ຊາຍ.

ພໍ່ເຖົ້າຕົບເອິກດີອົກດີໃຈ - ຂ້ອຍສະແດງຄວາມຍິນດີນຳ ທີ່ຕະຫລອດປອດໄພ ທັງແມ່ທັງລູກ.

ແສງຕາເວັນພຸ່ງຫລຸບຫລູ່ຄ່ອຍໆພົ້ນຈາກສັນພູ. ທິດບຸນທີພາຍປືນຍາວມາແຕ່ທາງໃຕ ເບັດມາຫາພວກຂ້ອຍ.

- ອ້າວ! ອ້າຍພິນພອນ, ພໍ່ເຖົ້າ, ພວກເຈົ້າຄື ລູກແຕ່ເດິກແທ້ ?

- ຕັ້ງບໍ່ໄດ້ນອນ. ເປັນແນວໃດຄືນນີ້? ຂ້ອຍ ຟ້າວຖາມ.

- ມັນຫມາຄາທີ່ສອງບັກ ຄືຊິໄຫລນ້ຳອີກສອງ. ຄວາຍໂຕຫນຶ່ງບໍ່ທັນຕາຍຍັງຢູ່ກາງທາດ. ພວກເຮົາຕ້ອງ ເຝົ້າຫມົດຄືນ ພໍຈອບພວກມັນຈະມາເອົາຈາກສົບອີກ.

- ເກັ່ງອີ່ຫລີ! ເຂີຍນີ້ມັນຕັ້ງເກັ່ງໄດ້ພໍ່ເຖົ້າເວີ້ຍ!

ໄປຂຶ້ນໄປເບິ່ງອີ່ວອນແຕກແລ້ວ. ເປັນຜູ້ຊາຍວ່າຈັ່ນ!

ຄວາມວ້ວງນອນເລື່ອນຫາຍໄປຈາກໃບຫນ້າທິດບຸນທີ.

- ວ່າແລ້ວນ່າ! ຕ້ອງໄດ້ຜູ້ຊາຍ! ເກີດໃນມື້ ຈະນະ

ມານຈ້າ ມັນບູຕ້ອງເຂັ້ມແຂງເດັດດ່ຽວ ເກັ່ງໄດ້ພໍ່ມັນເວີຍ! ໄດ້ແນວລູກບ້ານດ່ານ!...

ຂ້ອຍລົງເຮືອນ ເພື່ອເດີນທາງຕໍ່ ໂບກມືອຳລາ ວິລະວັນ ຈຶ່ງນຳມາສົ່ງຂອດຝັ່ງນ້ຳ. ພໍຫົວເຮືອອ່ວາຍ ຂອກວັງ ຂ້ອຍກໍ່ຈົ່ມນ້ອຍຜູ້ດຽວວ່າ ຈິມີໂອກາດວາດສະໜາ ໄດ້ມາເປັນເຂີຍບ້ານດ່ານຄືທິດບຸນທີຫລືບໍ່?.



# ຫຽສາຍຂາດ

ໂດຍ
ບຸນເສີນ ແສງມະນີ



• ລົມທີວງູດພອຍເອົາຝຸ່ນຊາຍພົງເທິງທາດດອນຈຸ້ມລອຍຂຶ້ນສູ່ທ້ອງຟ້າຈົນເປັນວົງຈອຍ... ແລະຈອຍນັ້ນກໍ່ແຜ່ ກະຈາຍໄວກົ້ວແລ້ວຫາຍໄປໃນອາກາດ... ແສງແດດ ແຕກເພົາຍາມທ່ຽງວັນໄດ້ເຮັດໃຫ້ໜ້ານ້ຳເຫຼື້ອມລະຍິບ ລະຍັບສະຫລົບສີ... ທ້ອງຟ້າເບື້ອງເໜືອທີ່ມີຂອບຈຸກັບ ແລວປ່າສີມູນມົວຢູ່ໄກໆນັ້ນໄດ້ເປັນບ່ອນຈຸດຈອດຂອງສາຍຕາ...

ສຸກັນ ຮີດກອກຢາເຂົ້າປອດບາດແຮງໆ ແລ້ວ ພົ່ນອອກແບບໃຈລອຍ... ເຂົາຢືນເອື່ອຍຫລັງໃສ່ລຳຕົ້ນ ສານສາແຄມທາ... ເໝືອນກຳລັງນັດພົບຄອງຄອຍໃຜຜູ້ໜຶ່ງ ທີ່ພວມໜັບບໍ່ເຂົ້າມາ... ບາງເທື່ອເຂົາໄດ້ຈັບເອົາກ້ອນຫີນແໜອຍໆແກວ່ງອອກກາງຂອງ... ແຕ່ອັນນັ້ນບໍ່ໄດ້ຍິນຮອດສຽງຂອງມັນຕົກ ຍ້ອນການເລືອດປ່ອງທີ່ເປັນຕົ້ນມາ ກະທົບໃສ່ແຄມຝັ່ງ ຍ້ອນການແລ່ນກາຍໄປມາຂອງເຮືອຈັກ ທາງຍາວ... ສຸກັນ ຍົກຝ່າມືຂຶ້ນງຸມໜ້າ ໃຊ້ນີ້ວມືບີບເນີ້ນ ລົງໃສ່ຂະໜົບສອງເບື້ອງແລ້ວແກວ່ງຫົວ...

"ບົວວັນ... ອ້າຍຖ້ານ້ອງບໍ່ໄດ້ດອກ ເຖິງຈະ ຍັງບີດຽວ... ແຕ່ບີດຽວນັ້ນກໍ່ແມ່ນເລື່ອງທີ່ເຈັບປວດທີ່ລະ ນານທີ່ສຸດສຳລັບການດຳລົງຊີວິດຂອງຂ້ອຍ..." ແລ້ວເຂົາ ກໍລຸກຂຶ້ນຫັນຫລັງອອກຈາກນະທີແຫ່ງນັ້ນ... ລົດຫລາຍ ຄັນແລ່ນສວນກັນຂຶ້ນລົງຕາມຖະໜົນແຄມຂອງ... ສຸກັນ ປົ້ງຍາດຕີນໃສ່ເທິງລະບຽງທາງຍ່າງເຄື່ອນຕົວອອກໄປແບບລາເລື່ອຍຄືບໍ່ມີຈຸດໝາຍປາຍທາງ. ໃບສັກສຽດສີກັນດັງ ຊວດຊາດເນື່ອສາຍລົມພັດຜ່ານ... ນະທີຮານຂາຍເຄື່ອງເຂກະ

ຈົນແຕ່ງໜຶ່ງໄດ້ຕ້ອນຮັບຊາວໜຸ່ມລຳສັນແບບປະຈົບປະແຈງ ຈົນເຂົາຮູ້ສຶກໝຸດໝິດຈິ່ງຈຸ່ມ.

"ອ້າຍກັບ... ລົດຈັກຢູ່ເຮືອນເຂົາກໍມີ... ຖ້າຕ້ອງການກໍເອົາໄປໃຊ້ໄດ...

ນ້ອງບໍ່ຢາກເຫັນສະພາບຂອງອ້າຍຊຶ່ງເຕະຝຸ່ນກຸ້ງເກືອກ ນ້ຳຂອກແດແຫຼ້ວແນວນີ້... ບໍ່ມີວຽກ...ກະມາຊ່ວຍນ້ອງ ເພາະວຽກບ້ານແຕ່ລະວັນກໍເຫລືອມືຢູ່ແລ້ວ.

ຍິງສາວຮ່າງສູງໂປ່ງເປ່ງໜຸ່ມກ່ອນອາຍຸຍ້ອນການແຕ້ມແຕ່ງແປງໂສມນັ້ນໄດ້ເວົ້າກັບຊາຍໜຸ່ມແບບເປັນຫ່ວງ ເປັນໃຍດີ່ນັກຍຸ່ມໃນເທບນິຍາຍ ສຸກັນ ຍິ້ມຈົນແກ້ມສອງ ເບື້ອງທິດບຸ່ມປີ້ແຕແຫວງກະແດງອາດສີສົນ... ແລ້ວຕອບວ່າ:

"ເຮັດແນວນີ້ກໍເພື່ອທົດສອບຄວາມເຂັ້ມແຂງ ແລະ ຮູ້ລົດຊາດຂອງຄວາມທຸກຈັ້ນຕິ່ງ"

"ຮືຍ!... ຈຸ່ໄປໄດ້ຈັກບ່ອນ... ຖ້າບໍ່ມີເງິນໃນ ກະເປົາ...ບໍ່ມີເຂົ້າຢູ່ທ້ອງ...ບໍ່ຈຳເປັນຈະທົດສອບດອກ ທັງກຳນົດມັນຫາກຈະບັນຊາອ້າຍເຮັດເອງ..."

- ນາງຫົວຖົ່ງຕົວແລ້ວຖົ່ມຫາຍດ້ວຍການເຢາະເຢີ້ຍ - ສຽດສີ... ແລ້ວນາງກໍເວົ້າຕໍ່ກ່ອນທີ່ ສຸກັນ ຈະມີ ຄຳເຫັນໃດໜຶ່ງສະເໜີຂຶ້ນ...

"ນີ້ ອ້າຍກັນ ໕-໖ ປີທີ່ອ້າຍໄປຮຽນວິຊາ ສະເພາະຢູ່ຕ່າງປະເທດທັ້ນເກາະ ນ້ອງກໍເຫັນດີຢູ່ດອກ ແຕ່ມາຄິດຕຶກຕັກນຳກັນເບິ່ງດູ...ຕອນນີ້ອ້າຍມີໜ້າຍັງດີຂຶ້ນ ແລະ ອ້າຍໄດ້ຮັບຕຳແໜ່ງອັນໃດ... ອັນເປັນທີ່ພໍອົກພໍໃຈ ສົມກັບວ່າໄປ

ຮຽນມາແຕ່ຕ່າງປະເທດພຸ້ນນາ ດຽວນີ້ຍັງຄ້າງຢູ່ກິນລໍຖ້າລົງພື້ນຖານ... ຢູ່ເຮືອນພັກລວມຊາຍໄສດນ້ອງໄປເຫັນແລ້ວ, ຫາຍໃຈຝືດນ້ຳຂະໜາດ..."

"ຕ້ອຍ... ຄ່ອຍແດ່... ນ້ອງເວົ້າກະຖືກ ແຕ່ວ່າຂັ້ນຕົ້ນໃໝງກະຄືກັນ ຕ້ອງມີການທົດສອບເສຍກ່ອນ...

"ທົດສອບຈັ້ນຫວະ...ຂີ ເຊີນທົດສອບໄປໂລດ ....

ນາງລຸກຂຶ້ນຢ່າງປິ່ງປິ່ງ ຖົກຢາດຕີນໜັກງອອກ ຈາກຫ້ອງຮັບແຂກໄປໜ້າຮ້ານ ປະໃຫ້ ສູກຸ້ນ ນັ່ງກົ້ນໃຈຫລັບຕາເຊື່ອບຖ້ອຍການຕໍ່ສູ້ທາງດ້ານແນວຄິດຢ່າງໜັກໜ່ວງ ... ເອົາເອນກາຍໃສ່ເບາະເອື່ອຍ... ແລວຫາຍໃຈຍາວຍາວຍາວ...

"ອ້າຍ ສູກັນ... ຍັງອີກປີດຽວບໍ່ມີບັນຫາ...ເຊື່ອແນ່ວ່າອ້າຍຄົງລໍຖ້າການກັບມາຂອງນ້ອງດ້ວຍຄວາມບໍລິສຸດ ຈິງໃຈ ຄິດເຖິງອ້າຍສະເໝີ".

ເນື້ອໃນຈົດໝາຍ ສະບັບຫລ້າສຸດຂອງປະໂຫຍກ ສຸດທ້າຍ ຊຶ່ງ ບົວວັນ ຝາກມາໄດ້ເປັນຕົ້ນສຽງທີ່ແຈ້ວໃສ ລອຍວົນວຽນຢູ່ໃນຮູຫູຂອງຊາຍໜຸ່ມ... ເຂົານອນຈະລຸກ ໂຢ່ງໄຢຂຶ້ນ .ແຕ່ກໍເຫັນຕອຍຢ່າງເຂົ້າມາດ້ວຍໃບໜ້າຍິ້ມແຍ້ມແຈ່ມໃສ...

"ອ້າຍກັນ ມື້ນີ້ແຂກລູກຄ້າຫລາຍໆ ຂາຍເຄື່ອງດີ ຂະໜາດເລີຍ ຖ້າເປັນແນວນີ້ທຸກວັນມີຫວັງລວຍແນ່ນອນ.ອ້າຍກັນ ແລງຂອງມື້ອື່ນ ນ້ອງຈິເຊີນແຂກຂາປະຈຳ ແລະ ຈັດອາຫານລຽງຕ້ອນຮັບເປັນພິເສດ; ອ້າຍຫູໜຶ່ງກໍແມ່ນ ເຈົ້າ

ນາຍຄືກັນ ສະນັ້ນຂາດບໍ່ໄດ້ເດັດຂາດ..." ແລ້ວນາງ ກໍ່ເຊັດສີໜ້າ ແລະ ແວວຕາແບບສຳອອຍ ອ້ອນວອນໃສ່ຊາຍໜຸ່ມ...

ສຸກັນ ອອກຈາກບ້ານຫລັງນັ້ນແລ້ວຍ່າງໄປຕາມ ທາງສາຍໜຶ່ງ ຈຶ່ງຕັດອອກມາໃສ່ຖະໜົນ ລ້ານຊ້າງ... ສຽງຂອງຕ່ອຍຍັງເກາະຫຼອຍຢູ່ໃນໂກນຫູ... ເຂົາອິ່ມຍິ້ມໃຫ້ແກ່ໃຈກຈາຕາຄື ໝາຈອຍຕົກຖົງເຂົ້າສານ... ຊາຍໜຸ່ມຊຸ່ມງາມ ຈຶ່ງໝູ່ຄູ່ເຄີຍຂະໜານນາມວ່າຄື ພະເອກຮູບເງົາໄດບາງເຕະສີຟຸ່ນແບບອິ່ມເອີບຕໍ່ຄວາມໂຈກກີ... ສຸກັນ ນັກອຶຊາວະກອນໜຸ່ມບໍ່ເຄີຍຄິດແຕ່ໜ້ອຍດຽວວ່າຕົນຈະມາຕົກ ຢູ່ໃນສະພາບທີ່ຖືກອຳນາດຂອງຄວາມທະເຍີທະຍານ ບັງຄັບຄອບຄອງຄືແນວນີ້... ນາຍຫລັງສຳເລັດການສຶກສາ ຈາກຕ່າງປະເທດ... ເຂົາໄດ້ພົບກັບຕ່ອຍ ແມ່ຄ້າຊຶ່ງຊາງເອົາອົກເອົາໃຈ ແລະ ຮູ້ຄືລາຄາຄວາມມັກຄວາມພໍໃຈຂອງຊາຍໜຸ່ມຈົນເຮັດໃຫ້ເຂົາລືມຄິດເຖິງທິດສະນະ ຄູນສົມບັດ ຂອງພະນັກງານ ເຂົາໄປເຮັດວຽກງານບໍ່ເປັນປົກກະຕິ. ຖືກຕຳນິສອງແສງເທົ່າໃດກໍ່ຍິ່ງເສຍກຳລັງໃຈ... ຍິ່ງໄປຫາຕ່ອຍຖູເທົ່າໃດ ຄວາມສະບາຍກໍ່ຄືມີຫລາຍຂຶ້ນ ແລະ ນ້ຳໃຈ ຮັບຜິດຊອບຕໍ່ໜ້າທີ່ວຽກງານກໍ່ຫລຸດໜ້ອຍຖອຍລົງ...

ຕ້ອຍສະເໜີຫລາຍເທື່ອໃຫ້ເຂົາອອກການມາ ແລ່ນຄ້າແລ່ນຂາຍ ເພາະນາງພໍອົກພໍໃຈຕໍ່ຮູບໂສມຂອງຊາຍໜຸ່ມ ທີ່ເຂົ້າວັດເຂົ້າວາໄດ້ ໃນການຮັບແຂກຄົນ ແລະ ລູກຄ້າ.ນາງເທື່ອເຂົາລືມຮອດວ່າ ໃນໂລກນີ້ບໍ່ມີ ບົວອັນ ບໍ່ມີນາງ ຄົນ

ໜຶ່ງຈິ່ງເຄີຍໃຫ້ຄຳໝັ້ນສັນຍາ... ຄວາມຮັກຂອງເຂົາ ແລະ ບົວວັນ ໄດ້ປົ່ງຈອນຂຶ້ນໃນດິນແດນຂອງທົ່ງນະຂາວ... ເຂົາເຈົ້າໄດ້ຮຸກຍູ້ການຄົ້ນຄວ້າຮ່ຳຮຽນ ແລະ ຝຶກຝົນ ຫລໍ່ຫລອມຄຸນສົມບັດ ທັດສະນະຂອງຄົນລາວໃໝ່ ຈົນໝູ່ຄູ່ແລະການຈັດຕັ້ງໄວ້ເນື້ອເຊື່ອໃຈ... ບົວວັນ ຍັງພຽງປີດຽວ ກໍຈະຈົບຈາກການສຶກສາ... ເຂົາເຈົ້າເຄີຍໄຝ່ຝັນວ່າ ໃນແຜ່ນດິນແມ່ ໃຕ້ທ້ອງຟ້າເມືອງລາວນີ້ ບົວວັນຢູ່ໃສຈະມີສຸກັນຢູ່ຫັ້ນ ແລະ ຈະພ້ອມກັນບຸກບືນເຮັດວຽກງານວິຊາສະເພາະທີ່ພວກຕົນໄດ້ຮຽນມາ... ບາງເທື່ອ ສຸກັນຍັງສະເໜີ ວ່າພາຍຫລັງເຂົາໄປເຖິງປະເທດຈາກຍາມໃດຈະສະເໜີ ໄປແຂວງເໜືອສຸດຂອງລາວ ເພື່ອເຮັດໜ້າທີ່ບຸກເບີກ ສ້າງທາງຈາກທົ່ງພຽງຫາເຂດພູດອຍ ເພື່ອສະດວກໃຫ້ແກ່ ການພາຫະນະລຳລຽງ... ເພາະສາຍທາງຄືສາຍໃຈ... ແຕ່ບົວວັນ ມັກໄຝ່ຝັນວ່າ ນ້ອງເປັນແພດ ນ້ອງຈະເປັນຜູ້ປິ່ນປົວກຳມະກອນກໍ່ສ້າງຂົວທາງເຫລົ່ານັ້ນໃຫ້ມີສຸຂະພາບກຳລັງວັງຊາ ເພື່ອສືບຕໍ່ສ້າງແປງທາງສາຍໃໝ່ອັນນັ້ນໃຫ້ສຳເລັດ.

- "ອ້າຍສຸກັນ ຈົ່ງເຊື່ອໝັ້ນນ້ອງເທາະ! ນ້ອງຈະກັບຄືນດ້ວຍໃບປະກາດສະນິຍະບັດ... ເພື່ອເປັນຂອງ ຂັວນຕອນອ້າຍ... ແຕ່ອ້າຍກໍ່ຕ້ອງສ້າງຜົນງານລໍຖ້ານ້ອງ..." ບົວວັນໃຫ້ຄຳປະຕິຍານ ກ່ອນການອອກເດີນທາງກັບຄືນ ປະເທດຂອງ ສຸກັນ ແລະ ເຂົາກໍ່ເວົ້າແລ້ວເວົ້າອີກວ່າ ຈະຮັກສາຄຳໝັ້ນສັນຍາ ທຸນທ່ຽງຄອງຄອຍດ້ວຍຄວາມບໍລິສຸດ ຈິງໃຈ ແລະ ຄຳເວົ້ານັ້ນກໍ່ຜ່ານໄປ ມັນຜ່ານໄປພ້ອມກັບລະດູ

ຮ້ອນທີ່ພວນຈະສິ້ນສຸດລົງ...

ຄືນນັ້ນ, ລົມພັດມາຮູດໜັກງ ຈົນວ່າພ້າວເທິງຫົວນອນ ປຸ້ມຫລອບເປັນຈອຍໄປຕາມແລວລົມ... ວາໄມ້ສຽດສີ ກັບ ຈົນເກີດສຽງລັ່ນອິດອາດ... ດວງຈັນສີຂາວນວນ ພວນຈະລອງໄຫລເຂົ້າຫລືບເມກທີ່ໜາດຳ ຈຶ່ງເຮັດໃຫ້ບໍລິເວນຸ ຄຸ້ມຕ່ວາງປົດປ່າຍກຳຕາ... ຍັງແຕ່ຕາມຖະໜົນສາຍ ຕາວງເທົ່ານັ້ນທີ່ຍັງມີແສງສະຫວ່າງເປັນວົງຈອມລົງຕາມຫລັກເສົາໄຟຟ້າ, ຫາມີນເມັດທາວງທີ່ລົ່ນປົກເປັກລົງໃສ່ຫົວກະສີ ຈົນຊີ້ພູ້ນັ້ນກໍຖົ້ວອອກໄປ ແລະ ໜັບອອກໄປຄືເອົານ້ຳສາດ ໃສ່ໜ້າງຕາ... ສູກັນ ນອນພິກຄິງໄປມາຈົນຕຽງເຫລັກ ໄສເສືອລັ່ນກອດກາ ຈະສົງເກດເຫັນແຂນເບື້ອງໜຶ່ງຂອງເຂົາຍົກຂຶ້ນກ່າຍໜ້າຜາກນັ້ນກໍເມື່ອແສງມາບເຫລື້ອມສົງປະກາຍລອດປ່ອງປ່ຽມເຂົ້າມາ ເຂົາບໍ່ສາມາດຂົ່ມເປືອກຕາຫລັບລົງໄດ້ແມ່ນແຕ່ນ້ອຍດຽວ. ເສັ້ນທາງສາຍໃໝ່ທີ່ປູຂຶ້ນໃນມັນສະໝອງນັ້ນໄດ້ເຮັດໃຫ້ເຂົາຄ່ອຍໆລືມເສັ້ນທາງສາຍໜຶ່ງ ຊຶ່ງເຂົາເຄີຍໄດ້ເອົາເລື້ອຍໆກັບບົວຈັນ... ເສັ້ນທາງສາຍນີ້ບໍ່ແມ່ນສ້າງດ້ວຍລົດຖູດຊຸດຄອງອັນໃດ ແຕ່ມັນຫາກແມ່ນ ສາຍທາງຊຶ່ງຈະນຳເອົາເຂົາອອກໄປສູ່ການທຳລະຍົດຕໍ່ຊູດົມ ຄະຕິ ແລະ ຄຳໝັ້ນສັນຍາ ເຂົາບໍ່ຢາກພົ້ນກອກຢ່າດ້ວຍການເອົານ້ຳລາຍແລດຈົນປາກໜຽວຄືໝູດູບາງຄົນວາ ນອນຂົດປະຕິເສດຄວາມສະໜຸກສຸກສະບາຍແບບເຂົາ. ເຂົາກໍຄິດ ຢາກສົມນ້ຳໜ້ານອກກັບຊູດົມການກັບເຂົ້າ ແລະ ບາງເທື່ອເຂົາຍັງໄດ້ປຽບໝູດູນອນການປາດຈອງຢາກັ້ນຕໍ່ລາຄາ ທົບເຄີ້ງ

ຂອງເວີນເຕືອນໃສ່ຕໍ່ໜ້າເຂົາເຈົ້າ ແຕ່ກໍຖືກໝູ່ຄູ່ເຫລົ່ານັ້ນ ຍູ້ມກັນເຂົ້າມາຊີ້ໜ້າຊີ້ຕາແຍບລັ້ວກຮດຢຽດຫຍາມວ່າ ໝາ ດີໃຈສັດ... ຂາຍຊູ້ບໍໃສມອຸດົມຄະຕິ ເພື່ອປ່ຽນແທນ ກັຍ ຈອງຢາສູບ ແລະ ແກວເບຍ. ຄວາມຮູ້ທີ່ຮຽນມາໂຍນ ຖິ້ມ ໃຫ້ໝາກິນໝົດ ບາງເທື່ອເຂົາກໍນອນເອົາຜ້າຫົ່ມປົກຫົວ ຄື ບໍ່ສົນ ບໍ່ກຽວ ແລະ ບໍ່ຮູ້ໃຫ້ຫົວໝົດຢູ່ໃນໂລກນີ້... ແລະ ໃນຫົວຜ້າຫົ່ມນັ້ນຍັງຢາກົດມີໃບໜ້າແຫລມໆຊິ່ງມານຍາ ນັ້ນ ຂອງສາວຕອຍມາແລບລີ້ນປີ້ນຕາໃສ່ຄືພີສືອລີງປ່ານັ້ນແຫລະ, ແຕ່ຕໍ່ມາ ໃບໜ້ານັ້ນກໍປ່ຽນໃສມຄືນາງຝ້າໃນເທບ ນິຍາຍ. ສຸກັນ ລຸກຂຶ້ນແລນຕິດຕາມໄປ... ແຕ່ຫົວໝົດກໍມີແຕ່ຄວາມ ຫວ່າງເປົ່າ ແລະ ຢູ່ອອມຂ້າງນັ້ນໄດ້ຕິດຕາມມາດ້ວຍ ສຽງ ຫົວຂອງໄຮເຢາະເຢີ້ຍຄືສຽງເຫລົ່ານັ້ນໝຸ່ມກົດຊັດເຕືອງ ໃຫ້ ເຂົາຂາດໃຈຕາຍ.

ຝັນຫ່າໃຫຍ່ວຽບຫາຍໄປ ແຕ່ສຸກັນຍັງນອນບໍ່ຫລັບ ເຂົາ ລຸກຂຶ້ນຄວາມືໄປຈັບເອົາຢາດູດຢູ່ເທິງໂຕະຂ້າງຕຽງ, ແຕ່ ຈອງຢານັ້ນພັດເບົາຄືກັນກັບເຈຍຫ່າມະດາ... ເຂົາຍອງ ຈອງຢານັ້ນດ້ວຍຄວາມຢາກຮາຍ ແລວແກວງອອກປ່ອງຢຽມ. ຄວາມຫງຸດຫງິດໄດ້ໂດດເຂົ້າສວມສິງ. ໃບໜ້າຂອງຕອຍ ກໍ ຫູດໂປໂລຂຶ້ນ ສຸກັນເອົາກຳປັ້ນທຸບຝາມືເບື້ອງໜຶ່ງ ແລວ ກຳ ແຫນນເຂົ້າ...

"ຮື ເກີດເປັນນີ້ມາມີແຕ່ແນວຫຍຸ້ງໆ."

ສຽງຮອງໂວຍວາຍປ່ອຍດາໃນຫົວສະໝອງ ເຮັດ ໃຫ້ ເຂົາຕອງຍາງຫວນໄປມາ. ໝູສອງສາມຄົນນອນຂົດ ຢູ່ເທິງ

ຕຽງໄກນສອດງຢ່າງແຈບໝໍວ. ເຂົາເງີຍດຕາກົ້ງເບິ່ງ ເຂົາ ເຈົ້າເຫລົ່ານັ້ນແບບບໍ່ເຕັມຕາ ເຂົາຍ່າງໄປຢຸດຢູ່ຕີນຕຽງຂອງ ຄຳຂຽວ ຄາຍຄືຢາກຖາມອັນໃດໜຶ່ງ ແຕ່ເມື່ອຍືນຈົ່ງຄິດຢູ່ຈົ່ວ ຂະນະໜຶ່ງແລ້ວ ເຂົາກໍຕ້ອງອວາຍໜ້າຍ່າງໜີໄປນັ່ງຢູ່ບລິງ ໃສ່ຕຽງຕີນເອງແບບຄົນໝົດອາໄລຕາຍຢາກ. ຝາເຮືອນ ສີ ດ້ານທີ່ຍືນຈັບກົ້ງໄກບເບິ່ງນັ້ນໄດ້ຈູມຫົວກັບຈັບ-ຈີ່ມ ແລ້ວເປັ່ງ ສຽງຫົວ ແບບສຽດສີຫາຫາຍ. ສຽງລົບຄາກຮ້ອງຢູ່ແຄມບອກ ນຸ້ຍັງດັງປະສານກັນເປັນວົງແບບກວນໃຈ. ເຂົາລຸກຂຶ້ນແລ້ວ ຍ່າງໄປຫາຄຳຂຽວອີກເທື່ອໃໝ່ ແລະ ຖາມວ່າ:

"ຂຽວ! ຂຽວ ຢາຂອງໄດຍັງເຫລືອບໍ່?"

ຂຽວ ບິດຄີ້ງແລ້ວມືຕາຂຶ້ນ.

"ຂຽວ! ໃຫ້ຢາຈັກກອກແດ່ ມື້ອື່ນ ຈິເອົາມາແທນແດ່ ເຈົ້າ."

ຂຽວ ແກ່ວງຫົວແລ້ວຕອບວ່າ:

"ຍັງແຕ່ຢານັ້ນ ເອົາແມ່ຢູ່ເທິງໂຕະຫັ້ນ!"

ເວົ້າເທົ່ານັ້ນ ຂຽວກໍຫລັບຕານອນຕໍ່. ເມື່ອບໍ່ມີໃຜສົນ ໃຈ ແລະ ຄວາມຫິວໂຫຍກໍຄອບຄອງເນື້ອກາຍເຂົາຈຶ່ງ ຄິດ ໄປເຖິງຄຳເວົ້າທາງຕາຍຕໍ່ໜ້າຫມູ່ວ່າ:

"ບັກ ສຸກັນ ບໍ່ເຄີຍພົບຢາສູບຄືພວກສູ"

ຄືນນັ້ນ ຖົງຢາເສັ້ນກໍໄດ້ເປັນເພື່ອນເວົ້າ ແລະ ແກ້ ເຫງົາໃຫ້ເຂົາເປັນຢ່າງດີ ຫົວໝົດນັ້ນມັນໄດ້ຊ່ວຍໃຫ້ ສຸກັນ ລົ້ມເປືອກຕາຫລັບລົງໄດ້ສໍາລັບຜູ້ທີ່ມີແນວຄິດສັບສົນ ວຸ້ນວາຍ ຄືແນວນັ້ນ.

× ×

×

ເມື່ອບໍ່ຍອມຮັບເອົາຄຳຕຳນິກໍ່ສ້າງຈາກໝູ່ຄູ່ ແລະປະຕິເສດຄຳເຫັນຂອງເພື່ອນໆ. ມາໄລຍະຫລັງນີ້ ສຸກັນ ກໍຄ້າຍຄືວ່າຕົນເອງໄດ້ກາຍເປັນຄົນໆໜຶ່ງທີ່ຫ່າງໄກຈາກເຂົາເຈົ້າ. ເຂົາບໍ່ເຄີຍຂຽນຈົດໝາຍຕອບບົວວັນ ແມ່ນແຕ່ສະບັບດຽວ. ເຂົາຄົງລືມນາງ ລືມຄົນໆໜຶ່ງທີ່ໃຫ້ຄວາມຫວັງ ແລະ ຄຳໝັ້ນສັນຍາ. ທຸກການສຳນຶກ ການເຄື່ອນໄຫວ ສຸກັນໄດ້ຕິດພັນກັບຕ້ອຍ ຈົນແກະບໍ່ໄດ້ໄວ້ບໍ່ອອກ. ເຂົາປະຕິເສດຕໍ່ການກິນອາຫານເຮືອນຄົວລວມ ເຂົາໄດ້ເອົາຕົວໄປມົວສຸມຕິດພັນກັບຄາບເຂົ້າແລງງາຍຄອບຄົວຂອງ ຕ້ອຍ ແລະ ນັບວັນຕົວໝົດກໍກາຍເປັນໜີ້ບຸນຄຸນຂອງຄອບຄົວນີ້ຫລາຍຂຶ້ນ ແລະຫລາຍຂຶ້ນ.

ຄືນນີ້ ພາຍຫລັງກັບຈາກຄາບອາຫານລ້ຽງແຂກ ທີ່ບ້ານຕ້ອຍ ສຸກັນ ມຶນເນົາກ່ວາທຸກງັ້ນທີ່ຜ່ານມາ, ເຂົາເຮັດ ສີໜ້າປົກກະຕິ ແລ້ວຖິ້ມຕົວນອນແຜ່ເທິງຕຽງ.

"ຈັ່ງໃດ ອ້າຍໜຸ່ມເນື້ອຫອມ ບໍ່ຢາກເພື່ອຈັກຈອກຈັກໃດແນ່ບໍ່ນີ້... ຮາ...ງ"

"ຄິດວ່າຄືນນີ້ຄົງບໍ່ໄປປຸກໝໍ ຂຽວ ອີກແນ່ນອນ"

"ຢ່າເຫາະນາ ພວກສະຫາຍ ຖືກຕົນບໍ່ຄືຢັກຈອກ ເບຍໄດ້ ເຮົາຄິດວ່າ ໝໍສຸກັນ ອາລົມບໍ່ຄ່ອຍດີປານໃດເນີ້ນີ້.. ຮາ...ງ...ງ..."

ສຽງຢອກລໍ້ຕໍ່ວາຂອງໝູ່ຄູ່ເພື່ອນຝູງນັ້ນ ສຸກັນບໍ່ໄດ້ເອົາ

ໃຈໃສ່ຟັງແມ່ນແຕ່ໜ້ອຍດຽວ. ເຂົາຫລັບຕາຄືຄົນພວມນອນ ຫລັບຝັນ.

"ສ່ຽວ ສຸກັນ ມື້ນີ້ມີຈົດໝາຍມາຈາກຕ່າງປະເທດ ຈົດໝາຍຂອງ ບົວວັນ"

ພຽງແຕ່ໄດ້ຍິນຄຳວ່າ: ຈົດໝາຍ ບົວວັນ ເຂົາກໍ ດີດກາຍລຸກ ແລ້ວຖາມຂຶ້ນທັນທີ:

"ຢູ່ໃສຈົດໝາຍ ເອົາມາ".

"ເອີຍ ສະຫາຍ ຖ້າບໍ່ຮັກກໍບໍ່ຕ້ອງຫລອກ ແລະ ປິດບັງຄວາມລັບລົມຍົມໃນດອກເອີຍ ເຮົາສົງສານ ບົວວັນ ເຖິງນາງຈະບໍ່ທັນຮູ້ເຫດການ ແຕ່ເຮົາກໍເຈັບປວດ ແລະ ຄຽດແຄ້ນແທນ ໃຫ້ຕາຍເທາະ ເຮົາມັນທຸນບໍ່ງາມ ປາກບໍ່ຫວານຈຶ່ງຫາແຟນໄດ້ຍາກ ໂດຍສະເພາະຄື ບົວວັນ ຖ້າເຮົາແມ່ນໝໍ່ສຸກັນ ໂອຍ ໝົດຫົວຊາດຄົງຕາຍຫລັບຕາ"

"ຢ່າຢອກນາ ໃຈຮ້າຍກໍເປັນໄດ້"

ສຸກັນ ຕໍ່ວ່າຄືແບບເຄັ່ງຂຶມບໍ່ພໍໃຈ.

"ຢອກຊິ່ງດອກເພື່ອນເອີຍ ຊາຍໜຸ່ມຖ້າຂາດ ບັນຍາກາດຄືແນວນີ້ແລ້ວກໍບໍ່ຕ່າງຫຍັງກັບພະຈຳສິນ ພາວະນາ"

ຄຳຂຽວ ເວົ້າຂຶ້ນຕັດບົດ ແບບເປັນການເປັນງານ ອັນເຮັດໃຫ້ພະທີ່ແຫ່ງນັ້ນມິດງຽບລົງ.

"ຈົດໝາຍພວກເຮົາສອດໄວ້ໃນປຶ້ມບັນທຶກ ປະຈຳວັນຂອງໂຕທ່ານເດ"

ຄຳບົດ ເວົ້າພ້ອມທັງບຸ້ຍປາກໄປໃສ່ປຶ້ມບັນທຶກ,ຫົວໝົດຄົງເຫລືອຄ້າງໄວ້ແຕ່ຄວາມມິດງຽບ ຄ້າຍຄືບໍ່ມີຄົນ. ໃນຊ່ວງ

ເວລາຄືແນວນີ້ ບໍ່ມີໃຜຮູ້ເລີຍວ່າ ໃຜກຳລັງຄິດຫຍັງ ສຳລັບຊູ້ກັນນັ້ນແມ່ນບໍ່ໄດ້ຖອດຮອດຈົດໝາຍອອກມາອ່ານຊ້ຳ. ເຂົາຍັງນອນເອົາແຂນກ່າຍໜ້າຜາກເໝືອນຄືນກຳລັງໃຊ້ຄວາມຄິດທີ່ໜັກໜ່ວງສ່ວນສິນ ແລະ ໃນເວລາຕໍ່ມາ ພິມມາເພື່ອນຮ່ວມຫ້ອງນອນໄດ້ເວົ້າຂຶ້ນວ່າ:

"ສ່ຽວສູ້ກັນ ພວກເຮົາເຄີຍຮ່ວມສຸກຮ່ວມທຸກນຳກັນ ມາແຕ່ຕ່າງປະເທດ ຈຶ່ງຮູ້ຈິດຮູ້ໃຈກັນດີໃນກໍລະນີຂອງເພື່ອນ , ພວກເຮົາຈຶ່ງບໍ່ຂັດຂວາງ... ຖ້າເພື່ອນຫາກເຫັນວ່າ ການເຮັດໄປຄືທຸກມື້ນີ້ແມ່ນການເລືອກເສັ້ນທາງທີ່ຖືກຕ້ອງ ແລ້ວພວກເຮົາກໍ່ບໍ່ເຄີຍປະຕິເສດເຖິງຄວາມສະໜຸກສຸກສະບາຍ. ແຕ່ພວກເຮົາຍັງບໍ່ທັນໄດ້ຕີລາຄາວ່າ ຕ້ອຍເປັນຄົນບໍ່ດີດອກ, ເຮົາສຸດທີ່ດີໃຈທີ່ເຫັນເພື່ອນໄດ້ມີບ່ອນເພິ່ງພາອາໄສ ແຕ່ເພື່ອນກໍ່ຄວນຄິດວ່າ ການດື່ມເຫຼົ້າເມົາຢາທຸກວັນຈົນເສຍທັດສະນະຄຸນສົມບັດພະນັກງານນັ້ນ ເຫັນວ່າບໍ່ຖືກຕ້ອງ ຖ້າໂຕຮັກຕ້ອຍ ໂຕກໍ່ຕ້ອງບອກໃຫ້ຕ້ອຍເຂົ້າໃຈ ເພື່ອໃຫ້ ນາງໄດ້ຊຸກຍູ້ສົ່ງເສີມໃຫ້ໂຕຕັ້ງໜ້າເຮັດໜ້າທີ່ວຽກງານ ບໍ່ແມ່ນຂາດການໄປມາບໍ່ຖືກຕາມໂມງເວລາຍອນສາເຫດເມົາຄ້າງ ເຮົາຄິດວ່າບໍ່ຄວນ ແລະ ບໍ່ສົມເຫດສົມຜົນອີ່ຫລີ ຖ້າຕ້ອຍຮັກໂຕ ແລະ ໂຕຮັກຕ້ອຍແທ້ຈິງ ກໍ່ຄວນສ້າງເງື່ອນໄຂພົນງານແລ້ວສະເໜີການຈັດຕັ້ງ ອະນຸມັດແກໄຂ ບໍ່ແມ່ນເຮັດ ແບບລັບໆລີ້ໆໜີຫາງໝູ່ຄູ່ເພື່ອນຝູງ."

"ຈັ່ງຊັ້ນ ເຮົາເປັນຄົນຊົ່ວຫລາຍແທ້ບໍ ຈຳເປັນຫຍັງ ຊິມາເວົ້າ ໂຕໃຜໂຕມັນ ໃຜໆກໍ່ມີວິຊາສະເພາະຊັ້ນສູງ ໝົດ

ແລ້ວ"

ສຸກັນ ເວົ້າຕັດຄວາມຂອງ ພິມມາຢ່າງແຄ້ນເຄືອງ ບໍ່ພໍໃຈ ອັນເຮັດໃຫ້ທຸກຄົນທີ່ພວມສຸມຈິດໃຈຈົດຈໍ່ລໍຟັງຄຳເວົ້າຂອງພິມມານັ້ນຕ້ອງງວາກໜ້າມາຫາສຸກັນດ້ວຍສາຍຕາທີ່ ຄຽດຊ້ງແຫນງຫນ່າຍ.

"ພວກຫມູ່ໄປລ້າໄປການຶກໂມງເວລາຕັ້ງຫນ້າ ເຮັດວຽກງານບໍ່ຈົ່ມວ່າທໍ້ຖອຍ ເກືອບທຶກເດືອນຜ່ານມາ ພວກຫມູ່ມີຫຍັງແນ່ດີລື່ນເຮົາ ຊ້ຳບໍ່ຫນຳຍັງຖືກສັບຊ້ອນລົງ ພື້ນຖານເຊົາໆ ບໍ່ຕ້ອງມາລ່ຳລີ ລຳໄລ ຕີລາຄາວ່າເຮົາເປັນຄົນຊົ່ວຍ້ອນໄດ້ດື່ມເຫລົ້າ, ສູບຢາ, ມີເງິນໃຊ້, ໄດ້ລົດຂີ່ ລືນຫມູ່ຫັ້ນຫວະ ຈຳເປັນຫຍັງ ຖາຍານລິ້ນກໍໄປຊອກເອົາຄືເຮົາກະໄດ້ນີ້ຫນາ ແຂນຂາຍັງມີ ຫູຕາຍັງດີ ເຊີນແມ້ ເຊີນ!"

ສຽງຂອງສຸກັນ ດັງແຮງຂຶ້ນຈົນຖ້ວມລົ້ນບັນຍາກາດ ໃນຫ້ອງນອນ ແລະ ນະທີ່ນັ້ນກໍຄ້າຍຄືຫມໍ້ນ້ຳຮ້ອນທີ່ພວມ ຟົດເດືອດເຟືອດຟອງ ສຸກັນບໍ່ຍອມຟັງໃຜ ເຂົາລຸກຂຶ້ນ ທຳທ່າທີ່ວ່າຈະຍ່າງອອກຫນີຈາກຫ້ອງ ແຕ່ສຸພັນ ດຶບຫລັງໄວ້ ແລວເວົ້າວ່າ:

"ໃຈເຢັນໆ ສະຫາຍເອີຍ ຄ່ອຍເວົ້າຄ່ອຍວ່າກັນກະໄດ້ຫມູ່ຄູ່ເວົ້າແນວນີ້ ບໍ່ແມ່ນເຂົາເຈົ້າລັງກຽດຢຽດຫຍາມເພື່ອນດອກ ທຸກຄົນຫວັງດີກໍຈຶ່ງເວົ້າຈຶ່ງເຕືອນ."

ສຸກັນ ໂຍບກາຍລົງນັ່ງແບບຝືນໃຈ. ຈາກນັ້ນເພື່ອນຄົນຫນຶ່ງຈຶ່ງເວົ້າຂຶ້ນວ່າ:

"ສ່ຽວສຸກັນ ເຮົາຂໍຈິງໃຈເວົ້ານຳສະຫາຍ ຖ້າຜິດພາດ

ກໍຂໍອະໄພລ່ວງໜ້າ ເຮົາຢາກເວົ້າວ່າ ຢູ່ໃນເບື້ອງຫຼັງຂອງ ເພື່ອນຍັງມີຍິງຄົນໜຶ່ງຊຶ່ງການເວລາຄ່ອຍເຄື່ອນຫຍັບ ເອົາ ນາງໃຫ້ໃກ້ເຂົ້າມາ ປີນີ້ນາງຢູ່ປີສຸດທ້າຍແລ້ວ ຖ້າຮູ້ຂ່າວ ຄື ແນວນີ້ ນາງຄົງເສຍໃຈ ອາດເປັນພົນສະທ້ອນອັນໃຫຍ່ຫຼວງ ຕໍ່ການສຶກສາຮ່ຳຮຽນຫລືຖ້າຫາກວ່ານັ້ນ ນີ້ທີ່ນາງກັບຄືນມາ ແລະ ພົບເຫັນເຫດການຂອງສະພາບຄືທຸກມື້ນີ້ຂອງເພື່ອນ , ນາງຈະເປັນໄປຄືແນວໃດ ເພື່ອນຮູ້ບໍ່ ໃນໄລຍະໜຶ່ງປີຜ່ານ ມາ ໂຕບໍ່ເຄີຍຂຽນຈົດໝາຍຕອບນາງແມ່ນແຕ່ສະບັບດຽວ, ພວກເຮົາຫາກໍ່ຮູ້ຈັກ ຍອນນາງຂຽນຈົດໝາຍຫາ ຄຳຂຽວ ໝູ່ຄູ່ເຄີຍຮຽນຮ່ວມສະຖາບັນ ນາງຖາມເຖິງຂ່າວຄາວ ງຽບ ຫາຍຂອງໂຕ ແລະ ສຸດທ້າຍພວກເຮົາຈຶ່ງຕົກລົງເປັນເອກະ ພາບກັນຖືເປັນຄວາມລັບ ແລະ ກໍ່ຕອບນາງໄປວ່າ: ສຸກັນ ຖືກສັບຊ້ອນລົງພົ້ນຖານ ເພາະໜ້າທີ່ວຽກງານອັນ ຮີບດ່ວນ ຮຽກຮ້ອງຕ້ອງການ ທຸກມື້ນີ້ບົນໜ້າທີ່ວຽກງານອັນໜັກໜ່ວງ ຂອງສຸກັນນັ້ນ ເຮົາຍັງຄອຍນັ້ນຄອຍວັນ ເພື່ອໃຫ້ນ້ອງ ບົວວັນ ກັບມາພ້ອມກັບຄວາມສຳເລັດ. ດຽວນີ້ ສຸກັນ ພວມບຸກເບີກ ທາງສາຍໃໝ່ແຕ່ທິວພຽງຂຶ້ນຫາພູດອຍ ເພື່ອຮັບປະກັນໃຫ້ມີ ເສັ້ນທາງລຳລຽງຂົນສົ່ງ. ສ່ວນສຸກັນ ເປັນຫຍັງ ພວກເຮົາ ຈຶ່ງພ້ອມກັນເວົ້າວ່າໃຫ້ສະຫາຍ ພວກເຮົາເວົ້າແນວນີ້ ກໍ ເພາະວ່າ ເຖິງໂຕບໍ່ປ່ຽນແປງຢ່າງໜ້ອຍກໍໃຫ້ຄິດວ່າ ຢູ່ ເບື້ອງຫລັງຍັງມີນາງທີ່ໜ້າຮັກ ແລະ ໜ້າສົງສານຊຶ່ງເຊື່ອ ໃນຄຳໝັ້ນສັນຍາອັນນັ້ນຂອງໂຕ ສຳລັບພວກເຮົາ ເຮັດໄປ ກໍພຽງ ເພື່ອຄວາມຫວັງດີ".

ສຸກັນ ຄືຄົນຫລັບໄຫລ ຍ້ອນການເອົາຫູໂຕ່ງ ຮັບເອົາຄວາມເວົ້າທີ່ເປັນວັກເປັນຕອນໜ້າຟັງອັນນັ້ນ ເຂົາກືນເອົາຄຳເວົ້າເຫລົ່ານັ້ນເຂົ້າໄປໃນທ້ອງຢ່າງແຈບນິ້ວ.

ສຸກັນ ລຸກຂຶ້ນກອດແຂນຍ່າງຫລີບໄປມາຈ້າງຄືຄົນກຳລັງໃຊ້ຄວາມຄິດ ແລະ ບໍ່ມີໃຜເວົ້າຕໍ່ແມ່ນແຕ່ຄວາມດຽວ ເພື່ອໃຫ້ຄຳເວົ້າອັນອື່ນມາມ້າງຖິ້ມສຽງຄັ້ນຄວນກຶກກ້ອງຂອງສຸພົນທີ່ພວມຕີແຫຍ້ສຸກັນເຂົ້າໃນມູມແຈທີ່ດູງຄາ ອັນນັ້ນ ສຸກັນ ເດ່ມືໄປຖອດເອົາຊອງຈົດໝາຍຢູ່ໃນປຶ້ມບັນທຶກນັ້ນອອກມາ ຍັດໃສ່ຖົງເສື້ອ ແລ້ວຍ່າງອອກຈາກຫ້ອງໄປ.

ຄຳບົດ ພອມຈະລຸກໄປ່ງໄຢ້ຕາມເຕືອນ ແຕ່ກໍ່ຖືກ ຄຳຂຸຽວເອົາມືສັນຍານຫ້າມໄວ້ ແລະ ຍິກຄິ້ວແບບໃຫ້ທຸກຄົນຫຸ່ນຫ່ຽງລໍຟັງ.

ຄືນນີ້ບໍ່ມີລົມ ແຕ່ດົບງພັດມີແສງນາບເຫລື້ອມເທິງ ທ້ອງຟ້າ ແມງຈິດລິດຂັບຄືສຽງເພງເຊບແບບຈັງຫວະເກົ່າແກ່ພື້ນເມືອງ ແຕ່ສຽງອັນນັ້ນ ບາງເທື່ອມັນກໍຂາດຫາຍໄປຄື ການຢຸດເຊົາຂອງການບັນຊາບອກສັ່ງ. ຄວາມມືດດຳກຳຕາ ໄດເຮັດໃຫ້ຄືນນີ້ມີຄວາມໝາຍຕໍ່ການເຕັ້ນໄຕ່ໄປມາຂອງ ສັດນ້ອຍໆທີ່ຊອກຢູ່ຫາກິນໃນຍາມກາງຄືນ.

× ×

×

ລົດກະບະສີໄຂ່ໄດ້ແລ່ນມາຈອດຢູ່ຕໍ່ໜ້າບ້ານພັກລວມແຕ່ ໘ ໂມງເຊົ້າຂອງວັນອາທິດ ຍິງສາວສວມແວ່ນດຳ ໃນຊຸດ

ໄປກິນເຂົ້າປ່າພວມຍ່າງຮ່ວມໄປມາແບບຮ້ອນອົກຮ້ອນໃຈ , ຊາຍໜຸ່ມຮ່າງຍາວສົມສ່ວນພວມຍ່າງເບັດໜ້າກົ້ງໄປຫາ ທີ່ແຫກຜ່າສາຍຕາເກືອບສິບໆໜ່ວຍ ຈຶ່ງພວມສັງເກດ ຈ້ອງແນມຮ່າງດັ່ງນັ້ນແບບບໍ່ຄ່ອຍເຕັມໃຈ ຕ່າງຄົນກໍ່ຕ່າງຄິດແລະບໍ່ມີໃຜເອີ້ນຖາມເຂົາອີກ. ສາຍຕາເຫລົ່ານັ້ນແນມ ນຳຫລັງລົດຄັນດັ່ງກ່າວທີ່ພວມແລ່ນອອກໄປ ແລະ ຫາຍລັບລີ້ງ ທາງລ້ຽວຂອງທາງສາຍໜຶ່ງທີ່ຕັດໄປຫາຖະໜົນຫລວງພະບາງ.

ນ້ຳຕົກຕາດ ນາຊາຍທອງ ໄດ້ດຶງດູດເອົາຝູງຊົນ ຈາກນະຄອນຫລວງໄປພັກຜ່ອນທ່ຽວຊົມ. ສຽງນ້ຳຕົກເຊາະ ພະລານຫີນໄດ້ຈອມເປັນວົງລອບເຂົ້າຫລືບໄມ້ໃບປ່າດົງ ພົງໄພພູພະນັງ ເຖິງຈະຢູ່ໄກ ແຕ່ກໍແມ່ນສາຍພູໜ້ອຍຄຽວທີ່ ເນີ້ງຍາວຢຽດຄົດໂດ້ງ ເບິ່ງແລ້ວຄືການວາດແຕ້ມແປງຫາ ງາມສະດຸດຕາຂອງນັກຈິດຕະກອນອາຊີບທີ່ບັນຈົງຂີດແຕ້ມໄປຕາມສຽງເພງ ຫລື ບົດກະວີຂອງ ພ.ພວງສະບາ...

ກ້ອງຮົ່ມໄມ້ເຢັນດີມີລົມພັດລວງສາມາດແນມເຫັນ ການເຊາະໄຫລຂອງແລວນ້ຳທີ່ຂີດໂດ້ງໂວ້ງວໍຕາມຫລືບຫີນ ນັ້ນ, ສຽງໜຸ່ມສາວພວມນັ່ງຢອກລໍ້ຕໍ່ວ່າຫົວສະອຶກສະອອຍມ່ວນຊື່ນ ແຕ່ເມື່ອ ສັງເກດເບິ່ງແລ້ວເຫັນວ່າ ຝ່າຍຊາຍມີລັກ ສະນະຫງວນເຫງົາເຈົ້າຊຶງ ບາງຄັ້ງຄາວຈົ້ນເຮັດໃຫ້ນາງ ສາວເກີດອາລົມຫມຸດໝັດຕໍ່ວ່າແບບບໍ່ພໍໃຈ ແຕ່ເຂົາກໍປະຕິ ເສດແກວງຫົວຄືບໍ່ມີຫຍັງເກີດຂຶ້ນ.

"ບໍ່ມີຫຍັງດອກຕ້ອຍ ອ້າຍຮູ້ສຶກວ່າບໍ່ຄ່ອຍສະບາຍ ອາດເປັນເພາະເມົາຄ້າງແຕ່ຄືນວານນີ້ແລ້ວມາຕາກແດດ"

ເຂົາຍົກເຫດຜົນຈີບນາງເຂົ້າໃຈ ແລະ ນາງກໍຕອບວ່າ: "ນີ້ແລວຕ້ອງແກ້ວອີກ ຈຶ່ງຈະຫາຍເອົາບໍ່?"

ສຸກັນ ຍີ້ມແຕ່ງແໜນຄຳຕອບ. ຕ່ອຍລຸກຂຶ້ນແລ້ວ ຍ່າງລົງໄປນັ່ງຢູ່ເທິງໂງ່ນຫີນກ້ອນໜຶ່ງ ນາງຈຸ່ມຕີນສອງ ເບື້ອງແຊ່ນ້ຳຂີດຂວາຍໄປມາຕາມກັບການເຊາະໄຫລຂອງ ກະແສນ້ຳນັ້ນ. ລົມເຢັນໄດ້ພັດມາເປັນຣູດ ອັນເຮັດໃຫ້ປາຍ ຜົມຂອງນາງປິວຊະໄປຕາມລວງລົມ. ສຸກັນໄດ້ລັກສຶງເກດເບິ່ງໃບໜ້າ ແລະ ຣາງຄິງອັນຈີບງາມນັ້ນຂອງນາງ. ໃນທ່າມກາງປ່າດົງພົງໄພ ແລະ ສາຍນ້ຳໂຕນຕາດທີ່ສວຍງາມ ຈຶ່ງເປັນພະຍານເທາະຖາທາກນາງສາວຄົນນີ້ເປັນ ບົວວັນເຂົາຄົງມີຄວາມສຸກລື່ນນີ້ເປັນພັນໆເທົ່າ. ນາງຄົງເລົ່າ ເລື່ອງການລົງຝຶກຫັດປິ່ນປົວໃນຫ້ອງທົດລອງຂອງສະຖາບັນໃຫ້ເຂົາຟັງຢ່າງທົວກະທາຍ. ບົວວັນ ຄົງເວົ້າເຖິງຄວາມ ໜັກໜ່ວງໃນການກະກຽມສອບເສັງເອົາໃບປະກາດສະນີຍະບັດແຕ່ນາງຄົນນີ້ບໍ່ແມ່ນ ບົວວັນ ແລະ ບໍ່ແມ່ນນາງຄົນນັ້ນ ຄົນຫູທີ່ນັບວັນນັບຄືນ ເພື່ອກັບຄືນສູ່ປະເທດຊາດບ້ານເກີດ ເມືອງນອນກັບມາຫາຄົນຮັກ ແລະ ມາສູ່ອອມອົກຂອງຫູ ເປັນແມ່ຮື່ງນາງໄດ້ພັດພາກຈາກໄປນານແສນນານ ນາງຄົງດີ ໃຈເມື່ອຫາກໄດ້ພົບກັບເຂົາທີ່ສະໜາມບິນວັດໄຕ ແລະ ຮ້ອງໄຫ້ດ້ວຍຄວາມຕື່ນຕັນໃຈເມື່ອ ສຸກັນ ຍື່ນຊໍ່ດອກໄມ້ໃຫ້ ແລະທັກທາຍດ້ວຍຄຳເວົ້າທີ່ວ່າ: "ຄິດເຖິງນ້ອງບົວວັນ ຈົນສຸດຫົວໃຈ" ແຕ່ນາງຄົນນີ້ແມ່ນຕ່ອຍ ແມ່ຄ້າສາວຣຸ່ນງາມ ແຕ່ຍ້ອນມາລະຍາດວາດຈົງ ຣູບໂສມຂອງຊາວໜຸ່ມ ສຸກັນ ຈຶ່ງ

ສາມາດລ້າງເອົາຫມາກຫົວໃຈຂອງຕ້ອຍ ຊຶ່ງຍາມໃດກໍເກາະຫ້ອຍແຂນໂຕ້ນເຕັ້ນນຳຖົງເງິນນັ້ນມາຄອບຄອງໄດ້. ສຸກັນລຸກຂຶ້ນແລ້ວແກ້ເສື້ອພາດໄວ້ເທິງງ່າໄມ້ ແລະ ຍາງ ລົງໄປຫາຕ້ອຍ ແຕ່ນາງໄດ້ເວົ້າຂຶ້ນວ່າ:

"ອ້າຍ ສຸກັນ ນ້ອງຈະໄປແຕ່ງອາຫານລໍຖ້ານ້ອງ ບຶດຫນຶ່ງ" ເວົ້າແລ້ວ ນາງກໍລຸກຂຶ້ນຍ່າງກັບຄືນໄປຫາຕົ້ນໄມ້ນັ້ນ. ສຸກັນກົ້ມລົງຈຸ່ມຫົວໃສ່ນ້ຳ ເພື່ອລະບາຍຄວາມອົບເອົ້າໃນຮ່າງກາຍ. ແຕ່ໃນເວລາຕໍ່ມາ ສຸກັນກໍຕ້ອງເງີຍຫນ້າຂຶ້ນແລ້ວຫລຽວຄືນມາຕາມສຽງຮ້ອງຢ່າງໄວວາ.

"ອ້າຍ ສຸກັນ ກັບບ້ານເທາະ ນ້ອງບໍ່ສະບາຍແລະນ້ອງກໍບໍ່ຢາກຢູ່ບ່ອນນີ້ອີກ."

ນາງເອີ້ນໄປໃສ່ເຂົາແບບຄືນອາລົມເສຍ.

"ແມ່ນຫຍັງ ຕ້ອຍ! ໃສ່ວ່າຊິກິນເຂົ້າກ່ອນ".

"ບໍ່ຈຳເປັນດອກ ຊິກັບຫລືບໍ່ກັບ ຖ້າບໍ່ກັບນ້ອງຊິກັບກ່ອນແລ້ວຍ່າງເມືອເອງເດີ"

ແລ້ວນາງກໍຍ່າງຕຶ້ມຕີນບາດຫນັກໆແບບຄືນ ແຄນເຄືອງອອກໄປຈາກທີ່ນັ້ນໂດຍບໍ່ຫັນຫນ້າກັບຄືນມາຫາເຂົາອີກ.

"ຮ້ວາຍ ຕ້ອຍ! ຖ້າອ້າຍກ່ອນແມ້!"

ເຂົາຈັບເອົາເສື້ອແລ້ວແລ່ນຕິດຕາມນາງໄປ. ສຸກັນຄວ້າຈັບແຂນຂອງນາງ ເພື່ອດຶງຫ້າມໄວ້ ແຕ່ນາງ ປິດຫນີດແຮງ ແລ້ວແລ່ນອອກໄປ. ເຂົາງຶນງົງຕໍ່ເຫດການ ຊຶ່ງເກີດຂຶ້ນພຽງຊົ່ວອຶດໃຈດຽວນັ້ນ ມັນແມ່ນເລື່ອງຫຍັງ ໃຜເຮັດໃຫ້ນາງໃຈຮ້າຍ ແລະ ບໍ່ພໍໃຈແບບນີ້. ເຂົາພະຍາ ຍາມ

ຕິດຕາມນາງໄປ ເພື່ອເວົ້າຈາຕໍ່ວ່າໃຫ້ຮູ້ເລື່ອງຮູ້ລາວ.

"ຕ້ອຍ! ຕ້ອຍ ຟັງອ້າຍກ່ອນ ມັນແມ່ນເລື່ອງຫຍັງເກີດຂຶ້ນ ອ້າຍຄືບໍ່ເຫັນເຂົ້າໃຈ!".

ນາງຢຸດບາດຕີນ ແລ້ວງວາກໜ້າມາທັ່ງຕົວ ຮຶ ໜິດແຮງ ແລ້ວກົ້ງຕາແບບລັງກຽດຄຽດຊັງເລັ່ງຈອງມາໃສ່ ໃບໜ້າຂອງເຂົາ. "ອ້າຍສຸກັນ ອ້າຍມັນຄົນຫລອກລວງຫລາຍໃຈ... ຄິດວ່າໂຕເອງເຈົ້າຊູ້ຮູບງາມກໍເລີຍຫຽວຂາຍ ທຸ່ມຫລອກລວງຜູ້ຍິງ ໂດຍສະເພາະແມ່ນຍິງຄົນໜຶ່ງທີ່ເຄີຍ ໃຫ້ຄຳໝັ້ນສັນຍາກັບອ້າຍ ຈຶ່ງອ້າຍໄດ້ຕົວະນາງວ່າ: ດຽວນີ້ອ້າຍພວມເຮັດໜ້າທີ່ບຸກເບີກເສັ້ນທາງຢູ່ແຂວງ ພາກເໜືອສຸດຂອງລາວ ແລະ ກໍພວມຄອຍວັນຄອຍຄືນການກັບມາຂອງນາງ... ແຕ່ຫາໃສໄດ້ໜ້າດີໃຈມານ ຫລອກຜູ້ຍິງ ແບບບໍ່ອີ່ດູຕົນສົງສານ".

ຄຳເວົ້າຂອງຕ້ອຍໄດ້ເຮັດໃຫ້ສາຍຕາຂອງຊາຍໜຸ່ມຫຼົ່ນລົງມາຢຸດຈົ້ງຢູ່ປາຍຕີນ ທຸກພາກສ່ວນຂອງຮ່າງກາຍພວມຖືກຈອງລົງຍອມການດຶງດູດຂອງໜ້າດິນ ຂາສອງເບື້ອງ ໄດ້ລອບລວມກຳລັງເທື່ອສຸດທ້າຍທີ່ຍັງເຫລືອ ເພື່ອຊູຮ່າງຄົງ ທີ່ໜັກໂອນໂຕນຄືຖົງກະດູກທີ່ຂາດຊີວິດວິນຍານນັ້ນໃຫ້ ຢືນຈົ້ງຢູ່. ຄຳເວົ້າແຕ່ລະຄຳຂອງຕ້ອຍເໝືອນປາຍມີດທີ່ແຫລມຄົມ ພວມປັກສຽບໃສ່ທຸກຫ້ອງຮ່ອງຂອງຮ່າງກາຍຂອງສຸກັນ ແລະ ເວລານີ້ຄືມີສຽງຮ້ອງໂຮຂອງປ່າດົງພົງໄພ ແລະ ສຽງປ່ອຍດ່າສາບແຊ່ງຂອງນົກໜູປູປີກທີ່ພວມເຕັ້ນໄຕ່ໄປມານັ້ນ ... ລຳໄມ້ທີ່ສູງຈົນພວມປົ່ນລວງຄວງໄປຕາມການພັດວຽວ ຂອງ

ໜ້າດິນ ສຽງດັບມີ່ງງພຶກສາພະນາພັນພ້ອມຈັບກັນເຂົ້າເປັນ
ເສົາລອຍພຸ່ງເຂົ້າໃນໂກນຫູຈົນອື້ອຶງ... ແລະ ພ້ອມກັບ
ສຽງຫວູດວີນີ້ນັ້ນທີ່ໜ້າຢ້ານກົວອັນນັ້ນຍັງປະສົມປະສານ ກັບ
ສຽງຮ້ອງໄຫ້ຂອງຕ້ອຍຜູ້ຫລົງໄຫລໄຝ່ເພີ້ກັບຄວາມຫວັງ ທີ່
ພວມຈະຫຍັບຫ່າງ ແລະ ມະຫົບມະຫາຍໄປໃນຄວາມຫວ່າງ
ເປົ່ານັ້ນ. ນາງເດ່ພາບແຜ່ນໜຶ່ງຂອງຍິງສາວທີ່ພ້ອມຢືນຢັນ
ຢ່າງໜ້າຮັກ ແລະ ສະຫລັກຫລັງພາບເຖິງສຸກັນດ້ວຍຄວາມ
ເວົ້າທີ່ແສນອີດູຮັກແພງຕໍ່ມານາງໄດ້ແດ່ຊອງຈົດໝາຍສະບັບ
ໜຶ່ງໃຫ້ແກ່ຊາຍໜຸ່ມ ມືຂອງຕ້ອຍສັ່ນເຊັນຄືຄົນຈັບໄຂ້ ແຕ່
ຖ້ວມນອງເທິງໃບໜ້ານັ້ນ ຢາດນ້ຳຕາຂອງຍິງສາວ ພວມ
ໄຫລເປັນຄອງຜ່ານພວງແກ້ມ ແລ້ວຢາດປຸບລົງໜ້າດິນ.ນາງ
ບໍ່ເຊັດມັນອີກ ນາງຈິງໃຈຢາກປ່ອຍໃຫ້ມັນໄຫລອອກມາ...
ອອກມາ ເພື່ອຕອບຮັບກັບຄວາມຮັກທີ່ກຳລັງຈະພັງ ທະລາຍ
ລົງນັ້ນ, ຮີມສົບຂອງນາງຕີງນຸບນິບ ຄ້າຍຄືຢາກເວົ້າສິ່ງໃດ
ສິ່ງໜຶ່ງ ແຕ່ນາງເວົ້າບໍ່ອອກ... ສຸກັນຄິດໄດ້ວ່າຕົນ ໄດ້
ເອົາຮູບ ແລະ ຊອງຈົດໝາຍຍັດໃສ່ໃນຖົງເສື້ອແຕ່ຄືນ ນີ້
ແລະ ຕອນທີ່ເຂົາແກ້ເສື້ອພາດໄວ້ມັນຄົງຕົກຫລົ່ນລົງ ໂດຍທີ່
ເຂົາບໍ່ຄິດພໍ້ແມ່ນແຕ່ໜ້ອຍດຽວ, ຕ້ອຍຄົງມາພົບເຂົ້າ ດ້ວຍ
ຄວາມຮັກ ແລະ ຫຶງຫວງນາງໄດ້ອ່ານເນື້ອໃນ ຈົດໝາຍ
ສະບັບນີ້ໝົດແລ້ວ. ສຸກັນ ປ່ອຍດາໃຫ້ແກ່ການເວລາເພາະ
ເລື່ອງທີ່ເຂົາຄາດໄວ້ລ່ວງໜ້າມັນໄດ້ໝູນມາຮອດ ໄວເກີນ
ກວ່າຈະຕັ້ງໃຈ... ແລະ ຄຽດຊັງໃຫ້ແກ່ຕົນເອງ ຊຶ່ງບໍ່
ກ້ວນເພີ້ຕົວ, ອັນທີ່ຈິງແລ້ວເຂົາກໍ່ຕັ້ງໃຈຈະເວົ້າສູ່ ນາງຟັງ

ຢ່າງເປີດຈິດເປີດໃຈໃນມື້ໜຶ່ງເມື່ອໂອກາດ ເໝາະສົມ. ເຂົາຈະອະທິບາຍໃຫ້ນາງເຂົ້າໃຈ ແຕ່ບໍ່ແມ່ນຈະໃຫ້ ຄວາມສຳພັນລະຫວ່າງເຂົາ ແລະ ຕ້ອຍມາລົງທ້າຍຄືແນວນີ້ ... ນາງຄົງໂສກເສົ້າເສຍໃຈ ແລະ ຮ້າຍດ່າຄຽດຈັງ...ເຂົາບໍ່ຕອບນາງ ແລະ ຕໍ່ວ່າຕໍ່ຂານແຕ່ຄວາມດຽວ, ສຸກັນ ໂຍບກາຍລົງໃສ່ຂອບໄມ້ແກ່ນຫລ່ອນ ເຂົາຍົກຝາມືຂຶ້ນຄ້ຳ ພວງແກ້ມ ແລ້ວສູບລົມເຂົ້າປອດບາດຍາວໆ ແລະ ຫລັບຕາແບບເບື່ອໜ່າຍຕໍ່ຊີວິດ... ເຂົາຢາກເອົາກຳປັ້ນທຸບດິນ ຢາກປີນໜ້າຜາທີ່ສູງຊັນ ແລ້ວໂດດລົງມາ ຫລືບໍ່ກໍເຮັດບ່ວງແຂວນຄໍໃຫ້ຕາຍຈາກເຫດການຄືແນວນີ້ໂດຍໄວ. ແນວຄິດນັ້ນ ໄດ້ສ່ວາງສິບສັບໄລເປັນຄື້ນເປັນຟອງຢູ່ໃນຫົວສະໝອງ.....

ຕ້ອຍບໍ່ຍອມຖືກບາດຕື່ນໄປໜ້າແມ່ນແຕ່ກ້າວດຽວ, ນາງໂຍບກາຍລົງນັ່ງເທິງຂອບໄມ້ ແລ້ວຮ້ອງໄຫ້ພູມພາຍ ນ້ຳຕານາງຢາກຊີ້ໜ້າ ແລະ ຮ້າຍດ່າວ່າປະຈານຊາຍໜຸ່ມໃຫ້ສົມ ແຕ່ຫົວໝົດມັນພັດຄ້າຍຄືວ່າ ນາງບໍ່ສາມາດຈະເປັ່ງ ສຽງເວົ້າຈາໃດໆໃຫ້ຜ່ານພົ້ນອອກມາຈາກຮູຄໍໄດ້ແມ່ນແຕ່ ຄຳດຽວ. ສຸກັນ ລຸກຂຶ້ນ ແລ້ວຍ່າງເຂົ້າໄປນັ່ງໃກ້ໆນາງ ແລ້ວເວົ້າຂຶ້ນຄ່ອຍໆວ່າ:

"ນ້ອງຕ້ອຍ ອະໄພໃຫ້ອ້າຍແດ່ ໃນໄລຍະຜ່ານມາ ຂໍໃຫ້ຄິດວ່າ ແມ່ນຄວາມຝັນຮ້າຍ ອັນທີ່ຈິງແລ້ວອ້າຍ ຕັ້ງຫາກເປັນຄົນບໍ່ດີ ບໍ່ພຽງແຕ່ບໍ່ເວົ້າຄວາມຈິງກັບນ້ອງ ແຕ່ອ້າຍຍັງປົດບັງເລື່ອງທັງໝົດໄວ້ກັບຍິງຄົນໜຶ່ງຊຶ່ງນ້ອງໄດ້ອ່ານ ຈົດໝາຍຂອງນາງໝົດແລ້ວ ແລະ ບໍ່ພຽງແຕ່ເທົ່ານັ້ນ ອ້າຍ

ຍັງປະຕິເສດຕໍ່ໝູ່ຄູ່ ແລະ ການຈັດຕັ້ງ ອ້າຍເປັນຄົນ ເຫັນແກ່ໂຕ, ເຫັນແກ່ຄວາມສຸກສະບາຍ ແຕ່ເມື່ອມາຄິດໄດ້ມັນກໍສວາຍເສຍແລ້ວ... ນ້ອງຕ້ອຍ ບໍ່ແມ່ນອ້າຍຫຼອກລວງນ້ອງດອກ ຍ້ອນຄວາມດີຂອງຕ້ອຍ ຕ້ອຍໄດ້ຊ່ວຍເຫລືອອ້າຍ ຕະຫລອດເວລາ ອ້າຍຈຶ່ງຄິດວ່າຊີວິດນັ້ນຫາກເປັນໄປໄດ້ ອ້າຍຄົງ ຄົງ..."

ສຽງຂອງເຂົາສັ່ນເຄືອສາລະພາບຜິດຕໍ່ໜ້າ ຍິງສາວຜູ້ຊຶ່ງຍາມໃດ ເຂົາກໍຫລົງໄຫລໄຝ່ເຝີ້ຢູ່ຕະຫລອດເວລານັ້ນ, ມາບັດນີ້ ມັນພວມຫຍັບຫ່າງອອກໄປ, ຫົວໝົດມັນປ່ຽນແປງໄປຢ່າງໄວວາ ຈາກໜ້າມືມາເປັນຫລັງມື.

"ອ້າຍສຸກັນ! ບໍ່ຈຳເປັນ... ຄວາມຮັກມັນບໍ່ແມ່ນ ສະເໝີໄປດອກ ນ້ອງກໍມີຄວາມຜິດຄືກັນ ເພາະຕະຫລອດ ເວລານ້ອງໄດ້ແກ່ດຶງເອົາອ້າຍໄປສູ່ຄວາມຫລົງໄຫລມືດມົວຂອງຊີວິດ... ນ້ອງເອົາແຕ່ໃຈຕົນເອງ ແລະ ນ້ອງກໍຄິດວ່າເງິນສາມາດບັນດານ ແລະຊື້ໄດ້ທຸກຢ່າງ ຊື້ໄດ້ກະທັ້ງໝາກຫົວໃຈ ແລະ ຄວາມຮັກ ແຕ່ມາຮອດມື້ນີ້ ນ້ອງຈຶ່ງຮູ້ແລ້ວວ່າເງິນແມ່ນເງິນ ເງິນບໍ່ສາມາດຊື້ຄວາມຮັກໄດ້ອີກແລ້ວ ... ເຖິງຈະຊື້ໄດ້ ມັນກໍບໍ່ຄົບຖ້ວນສົມບູນ... ຢ່າງໜ້ອຍໃນຮັກນັ້ນກໍອາດຍັງມີເບື້ອງຫລັງ ຫລືແປວແນວ. ຜ່ານມານ້ອງໄດ້ຊຸກຍູ້ໃຫ້ອ້າຍອອກການ ແລະ ຮູ້ຈັກລົດຊາດຂອງການ ຫລິ້ນກິນມີນເມົາ... ສຳລັບບົວວັນ ຄົນຮັກຂອງອ້າຍກໍແມ່ນ ຫົວອົກຂອງຜູ້ຍິງຄືກັນກັບນ້ອງ ສ່ວນນາງບໍ່ແມ່ນຄົນຜິດ ນາງພວມຫັນໜ້າຄືນມາ ແລະ ຄືນມາຫາຄົນໆໜຶ່ງ ຊຶ່ງນາງຮັກ

ແລະ ໃຫ້ຄວາມຫວັງ. ສະນັ້ນ, ເພື່ອນາງ, ເພື່ອຫມູ່ຄູ່ ທີ່ຫວັງດີ ແລະ ການຈັດຕັ້ງໄດ້ເອົາໃຈໃສ່ອ້າຍ. ອ້າຍ ຄວນຕັດສິນໃຈເຮັດອັນໃດຫນຶ່ງຈຶ່ງມັນຍັງບໍ່ທັນຫລ້າສວາຍເກີນໄປ ເພື່ອພິສູດໃຫ້ເຫັນວ່າ ອ້າຍໄດ້ເລີ່ມຕົ້ນຊີວິດແລ້ວ, ແລະປະຈຸບັນອ້າຍພວມສ້າງພົນງານ ເພື່ອຕ້ອນຮັບການກັບມາ ຂອງນາງອີ່ຫລີ... ອ້າຍສູກັນ ສຳລັບນ້ອງ ແມ່ນບໍ່ມີບັນຫາແລະຍັງບໍ່ທັນສວາຍເກີນໄປດອກ ເພາະນ້ອງກໍມີຄູ່ຫມັ້ນແລ້ວ ແຕ່ຫາກວ່າຜ່ານມາ ນ້ອງໄດ້ປະຕິເສດ ເພາະນ້ອງບໍ່ໄດ້ ຮັກເຂົາ... ອ້າຍສູກັນ ຂໍໃຫ້ຄິດວ່າ ຊີວິດນີ້ມັນເປັນໄປບໍ່ ໄດ້ສຳລັບເສັ້ນທາງສາຍນັ້ນຂອງພວກເຮົາ."

ສູກັນລຸກຂຶ້ນ ແລ້ວອວາຍຫນ້າມາຫານາງສາວ :

"ນ້ອງຕອຍ!"

ເຂົາຊູຫານຊື່ນັ້ນດ້ວຍຄວາມຮັກແພງ ແລະ ເອັນດູ... ນາງແກວ່ງຫົວ ແລ້ວຍິ້ມໃຫ້ແກ່ເຂົາ ທັງທີ່ຄາບນ້ຳຕາ ກໍຍັງປຽກຊຸ່ມຢູ່ແຄມຂອບຕາ... ເຫມືອນການສັ່ງລາ ເທື່ອສຸດທ້າຍ... ແລະ ພູຜາປ່າໄມ້ໃນບະບໍລິເວນນະແຫງນັ້ນຄ່ອຍຄ່ອຍສະຫງົບງຽບລົງ... ນົກນ້ອຍສອງສາມໂຕບິນອອກຈາກພຸ່ມໄມ້ ແລ້ວຫາຍໄປໃນທົ່ງກວ້າງອັນມີແລວປ່າທີ່ ດຳຫນາຫລຽວເຫັນພໍມຸມມົວນັ້ນ...

# ຄຳຕອບຂອງຫົວໃຈ

ໂດຍ ດາວວຽງ ບຸດນາໂຄ





ສຽງເປົ່າໝາກຫວີດດັງຂຶ້ນກະທົບເຈັ້ຍຫູ.
ລົດໂດຍສານຄັນໜຶ່ງຄ່ອຍໆໝູນສັ້ງຈ້າງລົງ.
ບ້ອຍໜຶ່ງກໍເຫັນຊາຍໜຸ່ມຄົນໜຶ່ງກະໂດດລົງ ຈາກ ລົດ.

ເຂົາຢືນງວາກຊ້າຍຫລຽວຂວາ, ເຂົາ ສົງ ຮຸກຄ ຮອບໆຕົວ ແລະ ແລ້ວເຂົາກໍເອົາຕົວລົບເຂົ້າທາງນ້ອຍຮອມ ໜຶ່ງ.

ເຂົາຍ່າງບໍ່ຟ້າວບໍ່ຟັ່ງ.

ທັງສອງບາຫາບເຈ້ຍເອົາພົກເຄື່ອງ ແລະ ອີກມືເບື້ອງ ໜຶ່ງຖືກະເປົ໋າຫິ້ວ.

ເຂົາປ່ອຍຫົວໃຈເພີດເພີນ ແລະ ເລື່ອນລອຍສາຍ ຕາ ເຊີຍຊົມພາບວິວທຳມະຊາດເດືອນເມສາ.

ຍາມນີ້ຕົ້ນໄມ້ໃບຂຽວ, ໃບແກ່ຊຸຫລົ່ນ, ໃບອ່ອນ ຊອນ ແທງຂຶ້ນ ແລະ ໜວຍພູແຕ່ລະໜ່ວຍກໍ່ຫົ່ມເສື້ອສີຂຽວອ່ອນໆ ຕາມທົ່ງນາຈະເຫລືອໄວ້ແຕ່ຕໍ່ເຟືອງແຫ້ງ, ຍາມນີ້ ຝູງວົວ ຄວາຍບໍ່ຢາກເປັນມິດກັບທົ່ງນາປານໃດ.

ກິ່ນຫອມດອກໄມ້ປ່າທີ່ສາຍລົມພັດໂຊຍໄປກໄປຍພາໃຫ້ ລົມຫາຍໃຈສົດຊື່ນ. ນັ້ນເດ! ຕົ້ນດອກຂະຍອມ -ຕົ້ນ ກຈິກ ແລະ ອີກນັ້ນເດຕົ້ນດອກຈານ...

ຄົບຄືທຳມະຊາດຈາກນົກໜູປູປີກ, ຕົ້ນໄມ້ເປົ່າ ແຄນ, ຍນກໍ້ຮອງເພງໄດ້ກາຍເປັນບົດສິລະປະວັນນະຄະດີ ອອດ ຈໃຫ້ເພີ່ມສົດຫາຮັກຕໍ່ຊີວິດບ້ານນາຖິ່ນນີ້ຍ່າງ ປະຕິ

ແລະ ບາງເທື່ອຊາຍໜຸ່ມກໍ່ຫລິ້ວປ່ອຍສຽງເພງຈາກລຳຄໍດາງກ່ອນປະສານກັບດົນຕີທຳມະຊາດຢ່າງລືມຕົວ.

ເກືອບ ໗ ປີທີ່ເຂົາໄດ້ໜີຈາກທ້ອງຖິ່ນດິນນາແຫ່ງນີ້.

ເຖິງຖິ່ນນີ້ຈະບໍ່ແມ່ນບ້ານຝັ່ງສາຍແຮບ້ານແພສາຍບີຂອງເຂົາ ແຕ່ມັນກໍເປັນຄືບ້ານແມ່ຂອງເຂົາ. ຄວາມຈິງ ເຂົາເກີດຢູ່ຖິ່ນອື່ນ ແຕ່ມາໆຫຍ້ອຍຕ່ອນຈຸ້ນໄດ້ປາຢູ່ຖິ່ນນີ້ ເຂົາມາຢູ່ຖິ່ນນີ້ຕອນອາຍຸ໔ຂວບ, ມາຢູ່ນຳອ້າຍຂອງເຂົາແລະອ້າຍນ້ອງເຂົາມາເປັນເຂີຍຢູ່ຖິ່ນນີ້...

ໄລຍະເສັ້ນທາງຍາວເກືອບສິບຫ້າພັນວາ.

ການຍ່າງຂອງເຂົາກັບໄລຍະທາງເລີກເຂົ້າໄປພຽງແຕ່ໜຶ່ງສ່ວນສາມ. ບາດກີບຍັງຄົງຮັກສາຄວາມສະໝ່ຳສະເໝີ.

ເຂົາທັງຍ່າງທັງຄິດ...ຄິດນ່ວນໃນໃຈ.

ເຂົາຄິດວ່າ ຜູ້ເປັນອ້າຍ-ເອື້ອຍໄພ້ ເພິ່ນຈະຢູ່ເຂືອບບໍ່ບໍ? ຫລືພໍ່..ເພິ່ນໄປຕຶກແຕກປາບໍ່? ຫລືພວກເພິ່ນເຂົ້າປ່າຫາຕັດຟືນບໍ່?

ພວກຫລານໆບາງຄົນກໍຈະໃຫຍ່ເປັນທ້າວ ເປັນນາງແລ້ວ, ໄດ້ຍິນວ່າອ້າຍໄດ້ລູກຫລ້າເປັນຜູ້ຊາຍແມ່ນແທ້ບໍ ? ແລະ ຂອງຕ້ອນສຳລັບພວກຫລານໆເຂົາເອງກໍກຽມມາ ພໍປີແລ້ວ.

ເຂົາຄິດວ່າເມື່ອໄປຮອດ, ພວກອ້າຍເອື້ອຍ-ພວກຫຼານຄົງຈະຕື່ນຕາຕື່ນໃຈບັກໃຫຍ່ ເພາະການກັບມາຂອງເຂົາ ບໍ່ໄດ້ຂ່າວໃຫ້ຮູ້ລ່ວງໜ້າ.

ແລະ ເຂົາກໍຄຶດໄດ້ອີກວ່າ ຄາບເຂົ້າຕອນຄ່ຳມື້ນີ້ຈັ່ງໃດ ກໍຕ້ອງຊຸກິນໝູນ້ຳອາຍໃຫ້ໄດ້, ແລ້ວກໍຈະເອີ້ນເອົາໝູ່ ຈຸ ໂດຍສະເພາະບັກຈີນແດງ, ບັກແກວ, ບັກຄຳກິ່ງ ເພື່ອນຮ່ວມອະດີດມາຮ່ວມສາງສົບກັບໃຫ້ເຊິງໃຈ.

ອີກມື້ຕໍ່ໄປກໍຈະຊວນເອົາບັກຈີນແດງ ເຂົ້າປ່າອັ້ນບູ ໄປຊອກຄວາເຕົ່າຄວາແລນ, ເພາະຈີນແດງມັນເປັນເຈົ້າ ມໍ່ໝາພານທີ່ເຊື່ອໝັ້ນໄດ້, ຄອບຄົວຈີນແດງເປັນຄອບຄົວທີ່ມີມູນເຊື້ອໝາພານທີ່ສືບສາຍມາແຕ່ອີ່ບູອີ່ປູ່ນ.

ພານມາວ່າແຕ່ໄປຄວາແມນບໍ່ເຄີຍພາດ, ບາງເທື່ອ ກໍໄດ້ເຫັນທາງການ, ບາງເທື່ອກໍໄດ້ລີ້ນ, ແລະ ບາງເທື່ອກໍໄດ້ແລນໂຕບັກໃຫຍ່, ບະ! ກອຍແລນ - ແຈ່ວບີ້ຂີ້ນງ - ເຫຼົ້າກໍ່ດອງນ້ຳເຜີ້ງ-ຈົກຊີ້ຕາຍຊີ້ຍັງ-ເວົ້າມາແລ້ວນ້ຳລາຍເຮຍ...

ເຂົາກິນໄລຍະທາງເກືອບສອງສ່ວນສາມແລ້ວ.

ຕົນຕົວປຽກເປື້ອນດ້ວຍນ້ຳເຫື່ອ.

ຄວາມອົບເອົ້າຂອງອາກາດເດືອນເມສາບໍ່ຄອຍຈະປານີໃຜ.

ມາຮອດວິນາທີນີ້ບາດຕີນຂອງເຂົາບໍ່ຢາກປົກກະຕິ ປານໃດ.

ມີບາງເທື່ອກໍຕ້ອງເອົາມືເນື່ອຕົ້ນໄມ້ໃບຫຍ້າ.

ສັງເກດວ່າ ມີກອງຮົບລຳໜຶ່ງໝູນຕັ້ງລຳໜ້າໄປກ່ອນ.

ເສັ້ນທາງເນື່ອຖືກກອງຮົບງວເຕາະກໍ່ໄວ່ພູອັ້ນ ປານຄວັນໝອກ.

ໜ້ອຍໜຶ່ງສຽງອື້ເອີເບີເສີກໍດັງຂຶ້ນ.

ຈາຍໜຸ່ມງວາກຈາຍຫລຽວຂວາດ້ວຍອາການຕົກຕື່ນ.

ເຂົາບັຽນຕົວເຂົ້າຕິດແປະກົກຫວ້າໃຫຍ່ຕົ້ນໜຶ່ງ.

ແລະ ແລ້ວເຫດການອັນນັ້ນກໍແມ່ນຄວາຍໄລ່ຈົນຄວາຍ.

ຍັງອີກປະມານບໍ່ພໍເທົ່າໃດກໍຈະເຖິງບ້ານແລ້ວ.

ນັ້ນເດ! ຫລັງຄາເຮືອນພົ້ນຕົວຂຶ້ນແລ້ວ.

ຈາຍໜຸ່ມເຮັດຫົວໃຈຍື່ນອອກ ເພື່ອຂັບໄລ່ຄວາມ ອິດ ເມື່ອຍ.

ແລະ ແລ້ວເຂົາກໍຖິ້ມຕົວເຂົ້າຮົ່ມຕະແບງຕົ້ນໜຶ່ງ ເພື່ອພັກຟື້ນກຳລັງ.

ຄວາມຈິງບ້ານປົ່ງຖິ່ນນີ້ມັນກໍ່ເປັນໝູ່ບ້ານແຕ່ປະຖົມ ປະຖານມູນ. ບ້ານປົ່ງມັນກໍ່ມີປະຫວັດຄວາມເປັນມາ ສະເພາະຕົວຂອງມັນ. ແຜ່ນດິນບ້ານປົ່ງກ່ອນໜ້ານີ້ນມາຢູ່, ເປັນພົ້ນທີ່ທີ່ມີປ່າໃຫຍ່ໄມ້ໜານາໆສົມຄວນ, ເປັນບ່ອນນິຍົມຂອງ ບັນດາສັດປ່ານາງຈະນິດ ນັບແຕ່ສັດສອງຕີນ ຮອດສັດສີ່ຕີນ. ທີ່ນີ້ຍັງມີຫ້ວຍນ້ຳທີ່ສົດໃສໄຫລເຢັນຕະຫລອດແລ້ວ. ກ່ອນໜ້ານັ້ນສາຍຫ້ວຍນ້ຳນີ້ບໍ່ທັນມີຊື່, ແຕ່ເມື່ອຄົນເດີນປ່າມາພົບ ກໍ່ເລີຍເອີ້ນຫ້ວຍນ້ຳນີ້ວ່າຫ້ວຍປົ່ງ ເພາະຫ້ວຍນ້ຳນີ້ມີປົ່ງທີ່ອຸດົມສົມບູນ ແລະ ບັນດາສັດປ່າທັງຫລາຍກໍນັດພົບກັນມາກິນປົ່ງ. ບັນດານາຍພານເນື້ອທັງຫລາຍກໍມັກຈະມາມີໜ້າຢູ່ທີ່ນີ້ ... ຈາກຮຸ່ນລຶນຕໍ່ຮຸ່ນລຶນ...ຈາກຫລັງຄາເຮືອນໜຶ່ງຫລັງກໍກາຍມາເປັນຫລາຍຫລັງ... ທັງໝົດນັ້ນເປັນທີ່ມາຂອງ "ບ້ານປົ່ງ ຫລືບ້ານຫ້ວຍປົ່ງ".

ບ້ານປົ່ງເປັນບ້ານເລາະລຽບຕີນພູ.

ມີສາຍນໍ້າຫ້ວຍປົ່ງເປັນສາຍເລືອດໄຫລລົ້ນຕະຫຼອດແລ້ງ ແລະ ຝົນ. ມີທົ່ງກວ້າງສຸດຈົ່ວສາຍຕາ ທີ່ເປັນພື້ນຖານ ໃຫ້ແກ່ການເຮັດນາຂອງປະຊາຊົນແຖບນີ້, ທົ່ງນີ້ເຂົາເຈົ້ານິຍົມເອີ້ນກັນວ່າ: "ທົ່ງປາເຂັງ".

ບ້ານປົ່ງປະກອບດ້ວຍຫົກສິບກ່ວາຫລັງຄາເຮືອນ, ປະຊາຊົນເກືອບຫ້າຮ້ອຍກ່ວາຊີວິດ. ຄຽງຄູ່ກັບການເຮັດນາ ເປັນພື້ນຖານ, ບ້ານປົ່ງຍັງຖືເອົາການຕໍາສາດຫລືສານສາດເປັນເສດຖະກິດອອກຂາຍຕ່າງບ້ານ-ຕ່າງຕາແສງ.

ອັນພິເສດສຸດຂອງບ້ານປົ່ງຄືງານບຸນປະເພນີ-ບຸນປີໃໝ່ຫລືບຸນບັ້ງໄຟ, ເຂົາເຈົ້ານິຍົມແຂ່ງຂັນກິລາທີ່ພາດຫົວຂໍ້ວ່າ: "ເອົາວົວຊົນວົວ".

ຖ້າວົວຢູ່ກົ່ມໃດຈະນະຖືວ່າຜູ້ນັ້ນມີກຽດ, ມີໜ້າ-ມີຕາ ແລະ ຖືກແຕ່ມນາມມະຍົດວ່າ: "ອາຈານວົວ".

ບ້ານປົ່ງເປັນບ້ານປຽວ.

ການກິນມະນາກິນແບບອາໄສກວຽນວົວ ຫລື ກວຽນຄວາຍ.

ໜ້ອຍຫນັກຈະມີລົດເຂົ້າໄປຮອດໄປເຊີງ.

ແຕ່ໃນຄວາມໂດດດ່ຽວຂອງບ້ານປົ່ງ ບໍ່ມີໃຜຄອຍຈະ ຮູ້ໄດ້ວ່າ ຖິ່ນນີ້ກໍມີຮອຍມືວິລະກໍາເຊື່ອງຊ້ອນໄວ້ຢູ່.

ເປິງປີສ້າງທາງເລກທີ ໑໙, ຝະລັ່ງເກັບເກນຫົວການທາງການ, ເກັບເກນຄົນລາວໄປເປັນກຸລີສ້າງທາງ ພໍ່ເຖົ້າທິດເປັງກໍແມ່ນຜູ້ໜຶ່ງມີຫົວບໍ່ນິຍົມຝະລັ່ງ. ລາວຂ້າ ຝະລັ່ງ

ຕາຍສອງລາຍດ້ວຍປືນເມີງ. ດຽວນີ້ພໍ່ເຖົ້າທິດເປ້ງໝົດອາຍຸແລ້ວດ້ວຍໂລກຊະລາ, ແຕ່ວິລະກຳພໍ່ເຖົ້າທິດເປ້ງ ກໍຍັງເປັນນິຍາຍໃນຄວາມຈື່ຈຳຂອງປະຊາຊົນບ້ານປົ່ງ.

ສະໄໝຈັກກະພັດອາເມລິກາ ຊຽງນ້ອຍກໍແມ່ນສາຍລັບໃຫ້ແນວລາວຮັກຊາດດ້ວຍໂຊກບໍ່ເຂົ້າຂ້າງ ຄວາມລັບຖືກຮົ່ວໄຫລ, ຊຽງນ້ອຍຖືກທະຫານອາເມລິກາຈັບຕົວໄດ້ ແລ້ວ ກໍ່ຍິງເປົ້າປະຈານຢູ່ຕີນນານອກບ້ານ. ແຕ່ການເສັຍ ສະຫລະຂອງຊຽງນ້ອຍເວລາໃດກໍ່ຍັງເປັນໝັດໄຟດຽດແຄ້ນ ເຕືອນສະຕິແກ່ປະຊາຊົນບ້ານປົ່ງ.

ປະຈຸບັນ ກອງຫລອນບ້ານປົ່ງເຂັ້ມແຂງທີ່ສຸດ.

ປະຕິການພັດຖິ່ນບໍ່ກ້າກ້າວກາຍເຂດລັດສະໝີບ້ານປົ່ງ. ແລະ ສາມສີ່ເດືອນກ່ອນນັ້ນເດ! ກອງຫລອນບ້ານປົ່ງ ຖອນແຂ້ວປະຕິການພັດຖິ່ນໄດ້ຫລາຍ ແລະ ກໍ່ຈັບດິບສອງລາຍ.

ໄລຍະທາງຍັງເຫລືອສອງຮ້ອຍກວ່າບາດຕີນ.

ນັ້ນເດ! ຫລັງຄາເຮືອນຂອງອ້າຍເຂົາ.

ເຂົາແປກຕາແປກໃຈ.

ເຂົາຢຸດບາດຕີນທີ່ກຳລັງຍ່າງ ເມື່ອສັງເກດການ.

ຜ້າຈອງສີນໃຫຍ່ຖືກພີກາງຢູ່ທາງໜ້າບ້ານ.

ຜູ້ຄົນອັ່ວອໍເຕັມເດີ່ນ.

ຫລືມີຫຍັງເກີດຂຶ້ນທີ່ຫລັງຄາເຮືອນອ້າຍເຂົາບໍ່?

ຫລືອ້າຍເຂົາເຮັດບຸນເຮືອນບໍ່?

ຫລືມີການລົ້ມຕາຍບໍ່?

ເຂົາມີທັງຄວາມດີໃຈ ແລະ ບໍ່ດີໃຈ.

ສອງຄວາມສົງໄສໄດ້ເຈາະຊີ່ເຂົ້າຫົວໃຈເຂົາ.

ເຂົາສ່າວບາດຕີນໃຫ້ໄວກວ່າເກົ່າ.

"ບໍ່ແມ່ນບັກທອງຄຳບໍ່ມານັ້ນ!..." ມີສຽງໜຶ່ງ ຮ້ອງຂຶ້ນ.

"ບັກທອງຄຳອີ່ຫລີໄດ້ຫັ້ນ!..."

"ບັກທອງຄຳມາທັນເຫດການພໍດີ..."

"ຫລືມັນຮູ້ຂ່າວນີ້ໄດ້ຈັ່ງໃດ?"

ມີຄົນສີ່ຫ້າຄົນອອກມາຮັບທອງຄຳທີ່ປາກທາງ.

ສີ່ຫ້າຄົນບໍ່ມີຄວາມກະຕືລືລົ້ນ, ສີໜ້າພວກເຂົາ ບອກເຖິງຄວາມເສົ້າສະຫລົດໃຈ.

"ມີໃຜເປັນຫຍັງ?..." ທອງຄຳຖາມຂຶ້ນ.

ບໍ່ມີຄຳຕອບ...

ຄາວໜຶ່ງພໍ່ລຸງແພງກໍເວົ້າອອກມາດ້ວຍນ້ຳສຽງທຸກໂສກວ່າ: "ກໍບັກທອງມັນອ້າຍນິງນັ້ນຕີ!...ມັນຕາຍແລ້ວ!... ຕາຍໄດ້ສີ່ຫ້າມື້ແລ້ວ...ມື້ນີ້ແມ່ນມື້ເອົາສົບອອກປ່າ... ມັນໄຂ້ໄດ້ສາມວັນກະເລີຍຕາຍ ມັນຕາຍຢ່າງກະທັນຫັນເອົາແທ້ ທາງສຽງວິພາກວິຈານໂຍນຄວາມຜິດຖິ້ມໃສ່ພີ່ດີງໝາກແວວ ວ່າພິດຕອງພີເຊັດ... ນິງມາຈັ່ງຊັ້ກໍດີແລ້ວ!..."

ທອງຄຳອ່ອນເພຍໄປທັງຕົວ.

ເຂົາເກືອບຢືນຕົວບໍ່ຢູ່.

ກະເປົ໋າຫິ້ວ ຖົງພາຍຫລຸດມືລົງຢ່າງບໍ່ຮູ້ຕົວ.

ເຂົາຍ່າງໄປຫາໂລງສົບຢ່າງຄົນພິດຫວັງທີ່ສຸດ.

ຄາວໜຶ່ງຜູ້ເປັນເອື້ອຍໄພກໍມາຮອງແບບສະຫຍອງຂວັນ

ຕໍ່ໜ້າເຂົາ.

ເຂົາຫລຽວໄປຫາຫລານຫົວເຈັດຄົນທີ່ນັ່ງອ້ອມລີບນໍ່ ແຕ່ ລະຄົນມີດວງຕາປຽກຈົ້ນ-ສີໜ້າບົ່ງບອກເຖິງຄວາມ ທຸກ ໂສກ.

ສິ່ງພິມໜຶ່ງ ແລະ ເສື້ອພິມໜຶ່ງທີ່ເຂົາຕັ້ງໃຈ ເອົາມາ ຈາກຕ່າງປະເທດ ຄິດວ່າຈະເອົາມາເປັນຂອງຂວັນ ຕ້ອນ ອ້າຍ ກໍ່ບໍ່ໄດ້ແຕ່ປຸອງໄວ້ຫົວໂລງ ແລະ ແລ້ວທອງຄຳກໍ່ອອກ ໄປຮ້ອງໄຫ້ຊຶກໆຢູ່ແຈເຮືອນ.

ບັນຍາກາດຕື່ມຄວາມເສົ້າສະຫລົດໃຈ.

ແຂກຄົນເຮັດໜ້າຈືດຕາຈາງ ແລະ ບໍ່ມີໃຜ ຈະອອກ ຄວາມເຫັນ.

ມີແຕ່ລຸງແພງນັ້ນລະຍ່າງໄປຫາທອງຄຳ ແລ້ວກໍ ເວົ້າ ປອບໃຈດ້ວຍພາສາສາດສະໜາທີ່ມີເນື້ອໃນວ່າ: ອະນິຈາ- ວັດຕະສັງຂາລາ-ໂລກບໍ່ທ່ຽງ-ສັງຂານບໍ່ແນ່ນອນ - ຄວາມ ຕາຍເປັນຂອງໝົດທຸກຄົນ ຕ່າງແຕ່ຜູ້ໄປກ່ອນໄປຫລັງ-ແນວ ໃດມັນກໍ່ເປັນໄປແລ້ວ ຈະໂສກກໍ່ໄດ້ແຕ່ໂສກ-ຈະເສົ້າ ກໍ່ໄດ້ ແຕ່ເສົ້າ-ແທນວ່າຢັ້ນສູ້ມັນດີກວ່າ-ຊີວິດເກີດສູ້... ກໍຕ້ອງ ສູ້ມັນຕີ!...

ທອງຄຳຮ້ອງໄຫ້ອອກມາໃຫ້ສິ້ນອົກສິ້ນໃຈ.

ເຂົາປ່ອຍນ້ຳຕາອອກມາເທົ່າທີ່ມັນຈະໄຫລໄດ້.

ອ້າຍທອງພັນ! ໝົດເຈົ້າໄປ ນ້ອງກໍ່ບໍ່ມີໃຜອີກແລ້ວ !

ບັດນີ້ ຊີວິດຂອງນ້ອງບໍ່ຕ່າງຫຍັງກັບຄົນພິການຕາເບື້ອງ ໜຶ່ງ.

ໂລກເອີຍ! ເປັນຫຍັງໂລກຈິ່ງສ້າງຄວາມທໍລະມານໃຫ້ກັບຂ້ອຍແທ້! ຫລືໂລກຕັ້ງກົນແກ້ງໃຫ້ຂ້ອຍເກີດມາເປັນ ລົມປ່ຽວນ້ອຍແບບນີ້ບໍ່?...

ພໍ່ແມ່ພວກເຮົາກໍ່ຕາຍຍ້ອນສົງຄາມອາເມລິກາ ຂ້າເຂັ່ນຊີວິດ.

ເອື້ອຍອີກຜູ້ໜຶ່ງ ແລະ ອ້າຍອີກຜູ້ໜຶ່ງກໍ່ຫາຍ ສາບສູນໃນສົງຄາມ ເຫລືອລອດສົງຄາມຍັງແຕ່ສອງຄົນເຮົາ ອ້ຍຫລ້າ, ພວກເຮົາເປັນຄົນເຫລືອຕາຍ.

ນ້ອງຍັງຈື່ໄດ້ໝົດທຸກຮູບການເຄື່ອນເໜັງຂອງ ຊາຕາກຳຊີວິດພວກເຮົາ.

ຍ້ອນພວກເຮົາພໍ່ຕາຍເສຍແມ່ຕາຍຈາກ, ກໍ່ມີແຕ່ອ້າຍທີ່ນັ້ນເປັນຜູ້ປົກຄອງຊີວິດຂອງນ້ອງ. ອ້າຍໄດ້ອອງເຈ່ຍ ນ້ອງໃສ່ຫລັງ ເລາະຂໍກິນເຂົ້າເຮືອນເໜືອ ເລາະຂໍກິນ ເກືອເຮືອນໃຕ້. ແຕ່ດ້ວຍບຸນປະຊາຊົນບ້ານເຮົາກໍ່ບໍ່ມີໃຜດອກ ທີ່ໃຈດຳອຳມະຫິດ. ເວົ້າແລ້ວພວກເຮົາບໍ່ຕາຍ ກໍຍ້ອນ ປັ້ນເຂົ້າຢາຍປາຂອງປະຊາຊົນບ້ານເຮົານັ້ນລະ...

ເມື່ອນ້ອງໃຫຍ່ມາອ້າຍກໍ່ຊຸກຍູ້ໃຫ້ນ້ອງໄດ້ເຂົ້າໂຮງຮຽນ.

ແມ່ນແຕ່ປຶ້ມຫົວໜຶ່ງ - ສໍດຳແກບໜຶ່ງ - ສົ້ງເສື້ອນຸ່ງຖື - ແມ່ນແຕ່ຍາມເຈັບໄຂ້ໄດ້ປ່ວຍ ຕະຫລອດເຖິງ ຄວາມເປັນຄວາມຕາຍກໍ່ແມ່ນພາລະຂອງອ້າຍໝົດ.

ນ້ອງຍັງຈື່ໄດ້ ປີ ໑໙໗໕.

ບາດລ້ຽວໃຫມ່ຂອງປະຫວັດສາດ.

ສະພາບການຍັງຢູ່ໃນຂັ້ນຫົວລ້ຽວຫົວຕໍ່.

ການເຕັ້ນໂຕນໄຍນຫນີຈາກປະເທດຊາດຂອງ ບຸກຄົນ ແມ່ນປະກົດມີຢູ່ບໍ່ຂາດ.

ປີນັ້ນ ດອຍບຸວຣການກໍ່ຫຍຸ້ງຍາກສັບສົນແດ່, ນ້ອງເລີຍ ບໍ່ມີໂອກາດສົ່ງຂ່າວຄາວໃຫ້ອ້າຍຊາບ.

ບັງເອີນອ້າຍກໍ່ໄດ້ຍິນຂ່າວນ້ອງໂຕນຫນີຂ້າມຝັ່ງ.

ຄວາມໃຈຮ້ອນຂອງອ້າຍຈົນວ່າຂາຍຮອດໂຕງົວ ແມ່ ຄວາຍຊື້ປີ້ເຮືອບິນຂຶ້ນວຽງຈັນ ເພື່ອສືບສາວຫາວຫາ ຄວາມ ຈິງ. ໃນທີ່ສຸດນ້ອງເອງກໍ່ບໍ່ໄດ້ໂຕນຫນີ ນັ້ນເປັນພຽງ ແຕ່ ຂ່າວອະກຸສົນ, ຄືແນວນັ້ນອ້າຍເອງກໍ່ໄດ້ແຕ່ເກີດໂມໂຫ.

ອີກອັນຫນຶ່ງ ການທີ່ນ້ອງໄດ້ໄປຮຽນຕ່າງປະເທດ,ຄຽງ ຄູ່ກັບກອບທຶນຂອງປະເທດຊາດແລ້ວ ປັດໄຈຫນຶ່ງກໍແມ່ນອ້າຍ ນີ້ແລະ ເປັນຜູ້ຢືນຢູ່ເບື້ອງຫລັງ.

ອ້າຍທອງພັນ! ອ້າຍທີ່ດີຂອງນ້ອງ! ເປັນຫຍັງອ້າຍຈຶ່ງ ບໍ່ອາຍຸຍືນເບິ່ງອະນາຄົດຂອງນ້ອງແດ່!... ດຽວນີ້ນ້ອງໄດ້ ກັບມາຈາກຕ່າງປະເທດແລ້ວ... ກັບມາຢ່າງຜູ້ໄຊຊະນະ. ຄວາມຫວັງຂອງອ້າຍ ນ້ອງກໍ່ໄດ້ກະທຳໃຫ້ມັນປະກົດພົນເປັນ ຈິງແລ້ວເດ... ແລະ ແລ້ວເປັນຫຍັງອ້າຍຈຶ່ງບໍ່ມີຊີວິດ ຢູ່ ເພື່ອຊົມເຊີຍຫມາກຜົນຂອງນ້ອງ!

ສຽງໄຫ້ຂອງທອງດຳສະອື້ນໄປຂ້າງຫນ້າເລື້ອຍໆ,

ແລະ ແລ້ວເອົາກໍ່ຈັດທຳພິທີປົງສົບ, ເຮັດບຸນແຈກທານ ເພື່ອອຸທິດແດ່ດວງວິນຍານຂອງອ້າຍເອົາໄດ້ໄປສູ່ ສຸຂະ ຄິ ນິຍຢ່າງສົມກຽດ.

× ×

×

ຄືນເດືອນມຸ່ມມູ່...

ເດືອນມຸ່ມມູ່ກໍ່ມີສີສັນສວຍງາມປະເພດໜຶ່ງ.

ຄືນນີ້ກໍ່ເດິກດື່ນພໍຄວນ.

ແຕ່ຍັງໄດ້ຍິນສຽງບາດຕີນຜູ້ຄົນຍ່າງໄປມາ ບາງຄັ້ງຄາວ.

ອາກາດຄືນນີ້ບໍ່ຄ່ອຍຈະຮ້ອນເອົ້າປານໃດ.

ສຽງເພງຈາກສຽງພິນທີ່ອ້າຍບ່າວພັນລະນາຄວາມຮັກຕໍ່ຜູ້ສາວດັງຢູ່ເດີດຕີເດີ່ງ.

ຜູ້ເຖົ້າຈຳນວນໜຶ່ງຍັງສົນທະນາຕາກອາກາດຢູ່ມູມໜຶ່ງ ບາງຄັ້ງກໍ່ຈະໄດ້ຍິນສຽງຫົວບາດຍາວເຄືອຢ່າງພໍອົກພໍໃຈ.

ທີ່ສາຍຄາເຮືອນຫລັງໜຶ່ງ.

ຈະເຫັນຜູ້ຍິງຄົນໜຶ່ງ ຍ່າງເຂັດບາດຕີນຂຶ້ນເຮືອນ - ເລາະງັກຮອໄປວົນມາເໝືອນເຂົາມີຄວາມກັງວົນໃຈ.

ເບິ່ງຄື! ນາງໃຊ້ແສງຕາຈ້ອງເບິ່ງເດືອນມຸ່ມມູ່.

ຕາທີ່ຂອງນາງບໍ່ນອນບໍ່ຊື່ນພໍເມັດ.

ເບິ່ງອີກສາຍຕາໜຶ່ງ ນາງກໍ່ເໝືອນຄົນມີແຕ່ ວິນຍານ ແຕ່ໄຮ້ຄວາມຮູ້ສຶກ.

"ເອື້ອຍໄພ!... ເອື້ອຍບໍ່ທັນນອນຫວະ?..."

"ບໍ່! ເອື້ອຍນອນບໍ່ຫລັບ!..."

"ບໍ່ຕ້ອງຄິດຫລາຍດອກ...ອັນໃດມັນກໍ່ເປັນໄປແລ້ວ..

ບັນຫານີ້ບໍ່ມີໃຜຈະຫລີກໄດ້ດອກ...ແມ່ນແຕ່ໂຕເອົາເອງ ກໍ່ຕ້ອງມີນັ້ນ... ດຽວນີ້ນ້ອງຄິດໄດ້ແນວນັ້ນລະ!..."

ຊາຍໜຸ່ມຄ່ອຍໆຫຍັບຕົວມາຫາເອື້ອຍໄພ້ ແລະກໍປີ້ງຕົວລົງຂ້າງ.

"ຍິນວ່າມື້ອື່ນນ້ອງຊິຂຶ້ນພູ?..."

"ແມ່ນແລ້ວ!...ບາດໃດເຂົ້າຂ້າງພໍ່ໄດ້ກ້ອຍແລນ... ຄິດຢາກກິນກ້ອຍແລນມາຫລາຍມື້ແລ້ວ..."

ແລະ ແລ້ວບັນຍາກາດຂອງສອງຊີວິດກໍ່ງຽບລົງ.

ຈະຍິນແຕ່ສຽງຫາຍໃຈ ແລະ ຖອນຫາຍໃຈ.

ຊາຍໜຸ່ມໄດ້ແຕ່ຈັບຈ້ອງເບິ່ງ ເອື້ອຍໄພ້ດ້ວຍ ສາຍຕາແຫ່ງຄວາມເຫັນອົກເຫັນໃຈ.

ແນ່ນອນລະ ນັບແຕ່ໝົດຊີວິດອ້າຍໄປ ທຸກບັນຫາ ຂອງຄອບຄົວກໍຫອບໄຍນຖົ້ມໂພະໃສ່ເອື້ອຍໄພ້. ແມ່ນແຕ່ ປາໂຕໜຶ່ງ, ຜັກເສັ້ນໜຶ່ງ, ມີນໂດ້ນໜຶ່ງ, ຕະຫຼອດເຖິງ ເຂົ້າປັ້ນໜຶ່ງໄດ້ກາຍເປັນຄຳຖາມທີ່ເອື້ອຍໄພ້ຕ້ອງຄົ້ນຄິດ ແກ້ໄຂເພື່ອຊີວິດລູກໆແຕ່ລະວັນ.

ລູກຜູ້ຫລ້າກໍອາຍຸໄດ້ພຽງຫ້າເດືອນ, ຜູ້ກົກໜູ່ກໍພຽງສິບສອງຂວບ. ຄິດຈະອາໃສແຮງງານຈາກລູກພໍຕາງຕີນຕາງມືກໍ່ບໍ່ທັນໄດ້ເທື່ອ.

ເມື່ອບໍ່ມີອາຫານໃນຖ້ວຍ-ບໍ່ມີເຂົ້າໃນຕິບ, ພວກລູກ ກໍ່ະກີດມີບັນຫາດ້ວຍນ້ຳສຽງຮ້ອງໄຫ້ສະແອວ ແລະ ເມື່ອເຂົາຫາກໄດ້ກິນແຊບກິນອີ່ມ, ຄຳຕອບຈາກພວກເຂົາກໍແມ່ນສຽງຫົວ ແລະ ຮອຍຍິ້ມ.

ເດັກນ້ອຍກໍຫາກເປັນແນວນີ້ລະ. ເບິ່ງແລ້ວຊີວິດ ຂອງພວກຫລານໆກໍຄືດັ່ງລູກນົກທີ່ເຝົ້າຄອຍຄາບເຫຍື່ອ ຄາບ ອາຫານຈາກຜູ້ເປັນແມ່.

ສາມມື້ກ່ອນຫລານຫລ້າຜູ້ອາຍຸຫ້າເດືອນກໍເປັນ ໄຂ້ຕຸ່ມໝາກແດງ. ມື້ວານນີ້ຫລານຊາຍຜູ້ອາຍຸຫົກປີກໍຕົກຫົວຄວາຍ ຂາເຄັດ ແລະ ກໍມື້ເຊົ້າຫລານສາວຜູ້ກົກໝູ່ກໍແອວຢາກ ໄດ້ ເສື້ອພືນໃໝ່.

ແຕ່ລາວອ້າຍຍັງມີຊີວິດຢູ່, ກ້ອຍ-ລາບ-ແກງ-ເອາະລີ ອາຫານປະຈຳວັນ ແຕ່ບັດນີ້ເປັນຂອຣດໂມ້ແມ່ນອາຫານ ປະເພດອາວດີທີ່ສຸດ.

ຫລືສົມມຸດວ່າເອື້ອຍໃພ້ຫາກລົ້ມຕົວເປັນໄຂ້ປ່ວຍເດ... ແມ່ນໃຜຈະເປັນຜູ້ປົກຄອງຊີວິດຫລານທັງເຈັດຄົນນີ້?...

ຫລືຈະປ່ອຍປະເຂົາເຈົ້າໄປຕາມເປັນຕາມເກີດໄປບໍ່ ?

ແລະ ແມ່ນໃຜຈະຍົບຍື່ນຄວາມເປັນມະນຸດສະທຳ ແກ ພວກເຂົາ?...

ທອງຄຳໄດ້ທົບທວນຫວນຄິດ - ພິນິດພິຈາລະນາຕໍ່ຂໍ້ຄຳສະເໜີຂອງລູງແພງ ທີ່ກະຈິບກະແຈບຈ່ຳແລ້ວຈ່ຳເລົ່າ-ຈັກເວົ້າຫລິ້ນ-ຈັກເວົ້າອີ່ຫລີ. ລູງແພງວ່າແຕ່ແຍ່ມ ເຫັນໜ້າທອງຄຳ ລາວມັກຈະລາກດຶງເອົາບັນຫານີ້ຕໍ່ຄູ່ສົນທະນາໂລດ.

ຄວາມຈິງ ລູງແພງກໍ່ເປັນຍາດຕິພີ່ນ້ອງເບື້ອງ ເອື້ອຍໃພ້ເຮືອນລາວຂັ້ນຫ່າງຈາກເຮືອນເອື້ອຍໃພ້ໄປສາມຫລັງ.

ລາວເປັນພໍ່ໝ້າຍ.

ເມຍລາວຕາຍກ່ອນໜ້ານີ້ເກືອບຈາວປີ.

ລາວມີລູກສາວຜູ້ໜຶ່ງກໍ່ໄປຢູ່ນຳຜົວ.

ແລະ ກໍ່ມີລູກຊາຍຜູ້ໜຶ່ງກໍ່ໄປເອົາເມຍຕ່າງບ້ານ.

ແນວນັ້ນລະ ລຸງແພງຈຶ່ງກາຍເປັນຄົນປ່ຽວທັງໃຈ ປ່ຽວທັງກາຍ.

ແລະ ລຸງແພງເອງກໍ່ໄດ້ຖືຫອງດຳຄືກັບລູກໃນໄສ້. ເວົ້າໄດ້ວ່າມັບແຕ່ນີ້ໄວເດັກຈົນມາເຖິງໄວເປັນບ່າວ, ລຸງແພງກໍ່ມີສ່ວນປ້ອນຍິ່ງປັ້ນເຂົ້າ ແລະຕອນປາແກຫອງດຳ...

"ບັກຫອງດຳ! ເວົ້າກໍ່ເວົ້າເທາະ...ຄຳເວົ້າຂອງລຸງແພງມຶງຄົນນີ້ໃຫ້ມຶງຄິດເອົາເອງເດີ...ເວົ້າແລ້ວຢ່າຫາວ່າກູປາກບໍ່ດີ...ຊຸກຍູ້ແນວບໍ່ເປັນຕາສະແດງ... ເອົາສາ ! ສາວຄອບຄົວກັບເອື້ອຍໄພ້ມຶງສາ... ເອື້ອຍໄພ້ມຶງກໍ່ບໍ່ທັນຮູ້ຮ້າຍປານໃດດອກ...ແຕ່ສຳຄັນຫລານມຶງທັງເຈັດຄົນນັ້ນມຶງຈະປະປ່ອຍໃຫ້ພວກເຂົາເປັນເດັກກຳພ້າ ກຳພອຍຕະຫລອດເຈັ້ນຈັ້ນບໍ່?... ຢ່າງນ້ອຍມຶງກໍຄວນຄິດເຫັນບຸນຄຸນບັກຫອງພັນອ້າຍມຶງ, ມັນລ້ຽງມຶງຄືກັນກັບລ້ຽງລູກນີ້ລະ ແລະເອື້ອຍໄພ້ມຶງມັນກໍຮັກມຶງຄືລູກໃນໄສ້... ມຶງອາດພາບຄືນ ອະດີດຄວາມເປັນເດັກຂອງມຶງເບິ່ງດູ ແລະ ມຶງກໍຈະເຂົ້າໃຈ...

ຫລືຖ້າການສາວຄອບຄົວກັບເອື້ອຍໄພ້ມຶງຫາກຕົກລົງປົງໃຈບໍ່ໄດ້, ແຕ່ມຶງກໍຈຳຕ້ອງຍົກຍ້າຍໜ້າທີ່ມາປະຈຳການ ຢູ່ບ້ານເຮົານີ້, ຢ່າງໜ້ອຍມຶງກໍຈະໄດ້ແບ່ງທຸກແບ່ງຍາກຊ່ວຍຊ່ວຍເອື້ອຍໄພ້ ແລະ ພວກຫລານໆກໍໄດ້ອົບອຸ່ນຈາກໂດນຟືນໂດນໄຟຂອງມຶງ...

ເອີ! ກໍແມ່ນຢູ່ດອກຈົນນະບົດບໍ່ຄືໃນເມືອງ, ແຕ່ ບ້ານ

ເຂົາບໍ່ອຶດບໍ່ຢາກເດີ!... ຢາກກິນປາ - ຢາກກິນເນື້ອສັດ ປາແມ່ນງວາຍປານປອກກ້ວຍ... ກູວາລີ້ວມາຢູ່ບ້ານເຂົາພໍ້ກໍ ກີແປດຢາງ!...

ນີ້ຄືຂໍ້ຄວາມສະເໜີຂອງລຸງແພງ.

ລຸງແພງເວົ້າວ່າທັງໝົດທີ່ເວົ້າມານັ້ນແມ່ນແຕ່ ເຈດຕະນາດີ.

ແລະ ຍັງບໍ່ພໍແຕ່ເທົ່ານັ້ນ, ຍັງມີອີກເຈັ່ນ ເອື້ອຍຈັນທີລູກ ຖີ່-ເອື້ອຍບົວສອນທາງບ້ານເໜືອທີ່ເປັນໝູ່ລຸ້ນລາວ ຄາວ ຄຽວກັບເອື້ອຍໄພ້, ເຂົາເຈົ້າທັງສອງວາແຕແຍມເຫັນໜ້າ ທອງຄຳ, ເຂົາເຈົ້າມັກມີຮີນສິບຄ້ວຍການໃຊ້ສຳນວນ ຄຳ ເວົ້າອອກຄ້ອນລັດໜ້າລັດຫລັງ ເມື່ອປົດປ່ອງທອງຄຳ ໃຫ້ ແຕງດອງກັບເອື້ອຍໄພ້.

ທອງຄຳວຽງຫູຟັງໄປທາງສຽງນອນກິນຂອງພວກຫລານ ຫລານເບື້ອງຂ້າງໃນກໍເກີດແນວນຶກຄິດທີ່ແອບແຝງ ດ້ວຍ ຄວາມເວດທະນາສົງສານ.

ເຂົາບໍ່ຕ້ອງການໃຫ້ພວກຫລານເປັນເດັກກຳພ້າກຳພອ.

ບໍ່ຕ້ອງການໃຫ້ພວກຫລານໆເດີນຢຽບຮອຍອະດີດ ຂອງ ເຂົາ ເພາະເຂົາເອງກໍເຈັບປວດມາພໍແຮງແລ້ວ.

ເຂົາຕັ້ງຂັ້ນຫາໃຫ້ກັບຕົວເຂົາວ່າ:

ຖ້າສົມມຸດວ່າ ສ້າງຄອບຄົວກັບເອື້ອຍໄພ້, ເມື່ອ ວິນ ຍານຂອງຫູເປັນອ້າຍຮັບຮູ້ເຂົ້າ, ອ້າຍຈະບໍ່ໂກດແຄ້ນບໍ່?— ມັນບໍ່ເປັນການທໍລະຍົດອ້າຍບໍ່?... ຫລືວິນຍານ ຂອງອ້າຍ ຈະເຫັນດີເຫັນພ້ອມຕໍ່ພາລະກຳຂອງເຂົາ?...

ແຕ່ສະເພາະເອື້ອຍໄດ້ເດ?... ເອື້ອຍຈະຕົກລົງ ປົງໃຈນຳບໍ່?...

ຮວາຍ! ສີບ້ານບໍ່ຈ່າຫ້າບ້ານບໍ່ລືວ່າເຮົາເອົາ ເອື້ອຍໄດ້ເຮັດຄຸນເນີຍບໍ່?...

ກໍ່ຈ່າງເທາະ!... ເຮົາຈະປະຕິເສດຄຳຕຳນິຕິສົນ ບໍ່ໄດ້ເປັນອັນຂາດ, ແຕ່ຕ້ອງຄຳນຶງວ່າສິ່ງທີ່ເຮົາກຳລັງເຮັດຢູ່ນີ້ຖືກຕ້ອງຫລືບໍ່?... ໂລກທັງໂລກເຂົາກໍ່ເຄີຍມີຢູ່ດອກ ບັນຫານີ້, ນ້ອງຕາຍເອົາເອື້ອຍ-ອ້າຍຕາຍເອົານ້ອງ, ເຖິງໂລກຈະບໍ່ພາເຮັດ ເຮົາກໍ່ກະທຳຂຶ້ນມາຈິເປັນສິ່ງ ແນວວ່າ ສິ່ງທີ່ກະທຳນັ້ນມັນກໍ່ມີພົບເຫັນໃນໂລກຢູ່...

ຕາຍເກືອບລືມໄປ!

ຄົນຊື່ນຄົນຮັກຂອງເຮົາຫູ້ຢູ່ວຽງຈັນເດ!

ເຮົາ ແລະ ເຂົາຫັ້ນໝາຍວ່າຈະຮ່ວມຊີວິດດ້ວຍກັນ.

ແລະ ກໍ່ຍັງບໍ່ຮູ້ເທົ່າໃດເດືອນຂ້າງໜ້າ ງານວິວາກໍ່ຈະເກີດຂຶ້ນ.

ແລະ ເຮົາຈະເຮັດແນວໃດ?

ຈະໂຍນຖິ້ມແມ່ຍິງຄົນນັ້ນຫລື?

ເຮົາຈະບໍ່ກາຍເປັນຄາດຕະກອນທີ່ມອບຄວາມ ທຸກໂສກໃຫ້ກັບແມ່ຍິງຄົນນັ້ນບໍ່?... ຫລືເຮົາຈະແຕ່ງງານ ກັບນາງແລ້ວ, ເຮົາຈຶ່ງລະຄົມໃຈນາງຍົກຍ້າຍບ່ອນປະຈຳການ ລົງມາຢູ່ແຂວງເຮົານີ້ ?...

ແຕ່ຜູ້ຍິງຄົນນັ້ນເຂົາຈະຕັດສິນໃຈໄດ້ບໍ່?...

ເຂົາຈຳເປັນຄົນໃນເມືອງ ແລະ ກະໂຕເຂົາກໍ່ມັກຊີວິດ

ແບບໃນເມືອງ...ນັກເຈົ້າຊູ້ ຈີບງານ - ນັກມ່ວນມັກຊິ່ນ-ນັກສຽງເພງ-ນັກດື່ມທີ່ດ່ວຍອາລົມຈິດເຈົ້າສຳລານ...

ຈຶ່ງບໍ່ພໍຄອບຄົວພໍ່ແມ່ຂອງນາງກໍ່ຢູ່ໃນຂັ້ນຄົນຜູ້ມີສົມບັດຜູ້ດີ ດີທັງຕຳແໜ່ງ - ທີ່ທັງຖານະຄອບຄົວ...

ຫລືພໍ່ແມ່ເຂົາຈະກ້າປ່ອຍປະລູກສາວເຂົາມາເກືອກ ດິນເກືອກຝຸ່ນຢູ່ນຳເຂົາໄດ້ບໍ່?...

ແລະ ແລວລາຕີຄືນນັ້ນກໍ່ຜ່ານກາຍໄປ...

ຈາກມື້ນັ້ນມາຮອດມື້ນີ້.

ການເວລາອາຍຸໄດ້ແປດເດືອນເຕັມ.

ທອງຄຳໄດ້ຫອບໜ້າທີ່ຍົກຍ້າຍກັບບ້ານເກີດ.

ຂ່າວນີ້ເປັນຄວາມຈິງອີ່ຫລີ.

ເຂົາມາຜູດຊຸດ ແລະ ບໍ່ມີຜູ້ຍິງຄືນນັ້ນ.

ຈາວ່າເຂົາຢ່າຮ້າງແຟນກັບໄປແລວ.

ແຕ່ສ່ວນອັນທີ່ເອີ້ນວ່າ: ເຂົາຈະສ້າງຄອບຄົວກັບເອື້ອຍໄມ້ ຫລືບໍ່ນັ້ນ... ຂ່າວຄາວອັນນີ້ຍັງບໍ່ຊີ້ແຈງ ແລະ ບໍ່ທັນເປັນທາງການເທື່ອ...

ກໍ່ແມ່ນຫົວໃຈຂອງທອງຄຳເອງເປັນຜູ້ໃຫ້ຄຳຕອບເພາະພວງມະໄລ ຊີວິດເຂົາກໍ່ແມ່ນເຂົາເປັນຜູ້ບັນຈາດວຍຕົວຂອງເຂົາເອງ...

